HK 10



# ວັດຈະນານຸກົມ



## ປະກອບພາບ



























ຈັດພິມໂດຍ: ອົງການຮ່ວມນ້ຳໃຈກັບເດັກລາວແຫ່ງຍີ່ປຸ່ນ

Action with Lao Children

# ວັດຈະນານຸກົມ

## ປະກອບພາບ

ພິມຄັ້ງທີ 3

ຈັດພິມໂດຍ ອົງການຮ່ວມນໍ້າໃຈກັບເດັກລາວ A.L.C ແຫ່ງປະເທດຍີ່ປຸ່ນ

ອຸປະຖຳໂດຍ FUJITSU UNITY WORKERS' UNION, FUJITSU SUPPORT AND SERVICE INC, and TOTALIZAITION ENGINEERING LIMITED

ວຽງຈັນ 2005

# ວັດຈະນານຸກົມ
## ປະກອບພາບ

ຄະນະຈັດທຳ: ນາງ ດວງເດືອນ ບຸນຍາວົງ, ປະລິນຍາໂທ ດ້ານວິທະຍາສາດ.
ທ່ານ ສີສະຫລຽວ ສະແຫວງສຶກສາ, ປະລິນຍາເອກ ພູມສາດເສດຖະກິດ.
ທ່ານ ວິຣະຊາດ ວິຣະວົງສ໌, ປະລິນຍາຕີ ວິທະຍາສາດ.
ຮອງສາສະດາຈານ ບົວໄຂຄອນ ສະແຫວງສຶກສາ, ປະລິນຍາເອກພຶກສາຊາດ.
ທ່ານ ໂອທອງ ຄຳອິນຊູ, ປະລິນຍາຕີ ພາສາອັກສອນສາດລາວ.

ຮູບປະກອບ : ບໍລິສັດ ຫຸ້ນສ່ວນ ດອກເກດ ອອກແບບ ຈັດພິມ ແລະ ຈຳໜ່າຍສິ່ງພິມ
ອົງການ Wildlife Conservation Society and Dof Lao PDR
ຮອງສາສະດາຈານ ບົວໄຂຄອນ ສະແຫວງສຶກສາ
ພາກວິຊາ ສະຖາປັດຕິຍະກຳ, ມະຫາວິທະຍາໄລແຫ່ງຊາດ
ວະລະສານ ເມືອງລາວ

ພິມດີດ, ຈັດໜ້າ, ບັນນາທິການ ອອກແບບ ແລະຈັດພິມ: ບໍລິສັດ ຫຸ້ນສ່ວນ ດອກເກດ ອອກແບບ ຈັດພິມ ແລະຈຳໜ່າຍສິ່ງພິມ

ຈັດພິມໂດຍ : ອົງການຮ່ວມນ້ຳໃຈກັບເດັກລາວແຫ່ງປະເທດຍີ່ປຸ່ນ (Action with Lao Children)

ອຸປະຖຳໂດຍ : ●富士通ユニティ労働組合は、以下の3団体の合同表記でお願いします。
FUJITSU UNITY WORKERS' UNION
FUJITSU SUPPORT AND SERVICE INC
TOTALIZATOR ENGINEERING LIMITED

ພິມຄັ້ງທີ 3, ເດືອນ ສິງຫາ 2005

© ສະຫງວນລິຂະສິດ ດວງເດືອນ ບຸນຍາວົງ 2005

ທະບຽນເລກທີ : 238/ພຈ/03082005
ພິມທີ່ : ຈຳປາການພິມ
ຈຳນວນ : 1970 ຫົວ

## ຄຳນຳໃນການຈັດພິມ ຄັ້ງທີສາມ

ວັດທະນະທຳທາງພາສາ ເປັນສິ່ງບົ່ງບອກລະດັບຄວາມຈະເລີນຂອງປະເທດຊາດ, ວັດຈະນານຸກົມຈຶ່ງແມ່ນຄວາມຈຳເປັນຂອງສັງຄົມທີ່ຂະຫຍາຍຕົວໄປສູ່ລະດັບສູງ. ແນ່ນອນວ່າ ວັດຈະນານຸກົມຍ່ອມມີຫລາຍລະດັບ ອີງຕາມຄວາມຕ້ອງການຂອງຜູ້ຊົມໃຊ້, ດັ່ງນີ້ ວັດຈະນານຸກົມປະກອບຮູບຈຶ່ງປາກົດຂຶ້ນມາ ໂດຍມີເປົ້າຫມາຍຮັບໃຊ້ໃຫ້ແກ່ເຍົາວະຊົນ ຜູ້ຊຶ່ງຮຽກຮ້ອງຕ້ອງການຫລາຍທີ່ສຸດໃນປັດຈຸບັນ.

ໃນປຶ້ມຕຳລາຕ່າງໆ ທີ່ສອນກັນຢູ່ໂຮງຮຽນປະຖົມແລະມັດທະຍົມນັ້ນ ມີຫລາຍໆຄຳສັບ ທີ່ນັກຮຽນຕ້ອງການຄຳອະທິບາຍທີ່ແຈ່ມແຈ້ງ, ວັດຈະນານຸກົມຫົວນີ້ ຈະຕອບສະຫນອງຄວາມຕ້ອງການຂອງ ນັກຮຽນໄດ້ສ່ວນຫນຶ່ງ ເພາະບັນຈຸຄຳສັບໄວ້ປະມານ 3,000 ຄຳ, ນອກນັ້ນ ຍັງມີຄວາມຮູ້ຮອບຕົວກ່ຽວກັບ ສ.ປ.ປ. ລາວ ແລະຂໍ້ມູນຕ່າງໆອັນເປັນລັກສະນະສາກົນເຊັ່ນ ດ້ານພູມສາດເສດຖະກິດ ຊື່ປະເທດຕ່າງໆໃນໂລກເປັນພາສາລາວ, ຝຣັ່ງ ແລະ ອັງກິດ ພື້ນທີ່ ແລະຈຳນວນປະຊາກອນ ໂດຍຈັດໄວ້ໃນຕາລາງທ້າຍເຫລັ້ມ ສ່ວນພາກປະຫວັດສາດຂອງບາງປະເທດ ກໍມີຢູ່ໃນບົດອະທິບາຍຄຳສັບ ທີ່ເປັນຊື່ຂອງປະເທດນັ້ນໆ ເຊັ່ນ ຈີນ ອາເມຣິກາ ແລະອື່ນໆ, ໃນການຈັດພິມຄັ້ງນີ້ ຍັງໄດ້ຕື່ມຮູບທຸງສີຂອງແຕ່ລະປະເທດໃສ່ອີກ. ສູດຄິດໄລ່ ທີ່ສຳຄັນຂອງວິຊາເລກ ແລະຟີຊິກ ຈຳນວນນຶ່ງກໍໄດ້ຄັດຈ້ອນມາໄວ້ ເພື່ອຄວາມສະດວກຂອງນັກຮຽນດ້ວຍ ນອກຈາກນີ້ ຍັງມີຮູບພາບສີ ສັດ ພືດຕົ້ນໄມ້ ທີ່ສຳຄັນຂອງລາວ ເຊິ່ງບໍ່ພຽງແຕ່ນັກຮຽນ ຂັ້ນປະຖົມ ຫລື ມັດທະຍົມ ຈະໄດ້ຊົມໃຊ້ເພື່ອຊ່ອຍໃນການຮໍ່າຮຽນຂອງພວກເຂົາເທົ່ານັ້ນ ແຕ່ຜູ້ສົນໃຈອ່ານໂດຍທົ່ວໄປ ກໍສາມາດນຳໃຊ້ຂໍ້ມູນ ແລະ ໄດ້ຮັບຄວາມຮູ້ເຫລົ່ານັ້ນດ້ວຍ.

ການໃຫ້ປະຫວັດ ຫລື ຄວາມເປັນມາຂອງພາສາ ແລະຕົວອັກສອນລາວໂດຍຫຍໍ້ ກໍເປັນອີກນຶ່ງໃນບັນດາຄວາມຮູ້ພື້ນຖານ ທີ່ຈະຊ່ອຍໃຫ້ຄົນຮຸ່ນໃຫມ່ ຫລື ຄູສອນຈຳນວນນຶ່ງໄດ້ຮູ້ເຖິງທີ່ມາຂອງພາສາຂອງຕົນ ໃນລະດັບໃດນຶ່ງ ແລະການອະທິບາຍຄຳສັບຢ່າງແຈ່ມແຈ້ງ ທັງມີຮູບປະກອບໃຫ້ເຫັນກໍຈະເປັນປະໂຫຍດຢ່າງຫລວງຫລາຍໃຫ້ແກ່ຜູ້ໃຊ້ ທັງໃນແງ່ການຂຽນໃຫ້ຖືກຕ້ອງ ແລະ ການຮູ້ຈັກຄວາມຫມາຍແນ່ນອນ.

ເຖິງວ່າການຈັດພິມວັດຈະນານຸກົມເຫລັ້ມນີ້ ບໍ່ແມ່ນຄັ້ງທຳອິດ ແລະ ມີອັນໃຫມ່ຫລາຍອັນຕື່ມຊອນເຂົ້າ ທັງຂໍ້ມູນກໍໄດ້ຮັບການປັບປຸງ ຈຶ່ງອາດຈະມີສິ່ງຜິດພາດບາງປະການ, ຄະນະຈັດທຳຫວັງວ່າຈະໄດ້ຮັບຄຳຕຳຫນິຕິຊົມໃນລັກສະນະສ້າງສັນ ຈາກທ່ານຜູ້ຮູ້ທັງຫລາຍເພື່ອຈະດັດແປງປັບປຸງໃຫ້ສົມບູນຍິ່ງຂຶ້ນໃນໂອກາດຕໍ່ໄປ.

ທ້າຍທີ່ສຸດ ຄະນະຈັດທຳ ຂໍຂອບໃຈ ອົງການຮ່ວມນ້ຳໃຈກັບເດັກລາວ A.L.C ແຫ່ງປະເທດຍີ່ປຸ່ນ ທີ່ໃຫ້ການສະຫນັບສະຫນູນ ແລະຊຸກຍູ້ໃຫ້ມີການຄົ້ນຄວ້າ ພັດທະນາຄຸນນະພາບຂອງປຶ້ມນີ້ຂຶ້ນເລື້ອຍໆ.

ວຽງຈັນ, ກັນຍາ 2005

ຕາງຫນ້າຄະນະຈັດທຳ

ດວງເດືອນ ບຸນຍາວົງ

## ຂໍສະແດງຄວາມຂອບໃຈ

ອົງການສາກົນ ແລະບຸກຄົນຕ່າງໆ ທີ່ມີຊື່ຢູ່ລຸ່ມນີ້ ໄດ້ຊ່ອຍສະໜັບສະໜູນທາງດ້ານເງິນທຶນ, ວິຊາຄວາມຮູ້ ແລະ ຄຳເປີກສາ ອັນເປັນປະໂຫຍດຍິ່ງ ຈົນປຶ້ມສຳເລັດເປັນຫົວອອກມາ:

- ອົງການຮ່ວມນ້ຳໃຈກັບເດັກລາວ A.L.C ແຫ່ງປະເທດຍີ່ປຸ່ນ
- THE YAMADA COUNCIL FOR INTERNATIONAL COOPERATION
- THE POSTAL SAVINGS FOR INTERNATIONAL VOLUNTARY AID IN JAPAN
- TOCHIGI ALUMNI ASSOCIATION OF JAPAN OVERSEAS COOPERATION VOLUNTEERS
- ຊາວຍີ່ປຸ່ນຜູ້ຮັກແພງເດັກນ້ອຍລາວ
- Direct Aid Programme ແຫ່ງສະຖານທູດ ອົດສະຕຼາລີ ປະຈຳ ສ.ປ.ປ. ລາວ
- Dr.W.klausner
- ອາຈານ ສົມແສງ ໄຊຍະວົງ ( ຂໍ້ມູນກ່ຽວກັບແຂວງຕ່າງໆ ໃນການຈັດພິມຄັ້ງທີ 1)
- ດາຣາ ( ວິຣະວົງສ໌ ) ກັນລະຍາ ( ທີ່ປຶກສາ ແລະ ແນະນຳ )
- ອົງການ Wildlife Conservation Society and Dof Lao PDR ທີ່ໃຫ້ຂໍ້ມູນເລື່ອງສັດປ່າ ແລະ ຮູບພາບປະກອບ
- ພາກວິຊາ ສະຖາປັດຕິຍະກຳ, ມະຫາວິທະຍາໄລແຫ່ງຊາດ (ຣ.ສ. ມະໂນລົດ ພົນິດ, ດຣ. ປາດຖະໜາ ພອນທິບ, ທ້າວ ອານຸພາບ ຂຸນບຸນວົງ, ນາງ ມີ່, ແລະ ນາງ ກິ່ງບຸບຜາ ແກ້ວຄຳຜຸຍ.
- ທ່ານ ວຽງແກ້ວ ສຸກສະຫວັດ, ຫົວໜ້າພະແນກ ບູຮານຄະດີ, ກະຊວງຖະແຫຼງຂ່າວ ແລະວັດທະນະທຳ
- ວາລະສານເມືອງລາວ

## ຝ່າຍຈັດທຳ

ນາງ ອຸດົມພອນ ບຸນຍາວົງ
ນາງ ດວງໃຈ ແປງມະນີວົງ
ນາງ ຄຳມັກ ວົງສັກດາ
ນາງ ດວງແຂ ບຸນຍາວົງ
ນາງ ສຸນັນທາ ກັນລະຍາ
ນາງ ມາລີ ມອງທຸມມາ

# ສາລະບັນ


ວິທີໃຊ້ ..... 5

## ພາກ 1

ຮູ້ຈັກບ້ານເກີດເມືອງນອນ ..... 6
ເລັກໆນ້ອຍໆກ່ຽວກັບພາສາລາວ ..... 49
ປະຫວັດໜັງສືລາວ ..... 54
ກວຽນ ..... 61

## ພາກ 2 ພະຍັນຊະນະ

ໂຕ ກ - ກວ ..... 64
ໂຕ ຂ - ຂວ ..... 77
ໂຕ ຄ - ຄວ ..... 85
ໂຕ ງ - ງວ ..... 93
ໂຕ ຈ - ຈວ ..... 96
ໂຕ ສ ..... 103
ໂຕ ຊ - ຊວ ..... 115
ໂຕ ຍ ..... 120
ໂຕ ດ ..... 123
ໂຕ ຕ ..... 126
ໂຕ ຖ ..... 133
ໂຕ ທ - ທວ ..... 135
ໂຕ ນ ..... 141
ໂຕ ບ ..... 146
ໂຕ ປ ..... 151
ໂຕ ຜ ..... 158
ໂຕ ຝ ..... 161
ໂຕ ພ ..... 163

ໂຕ ຟ ........ 175
ໂຕ ມ ........ 177
ໂຕ ຢ ........ 188
ໂຕ ລ ........ 190
ໂຕ ວ ........ 204
ໂຕ ຫ - ຫງ - ຫນ - ຫມ - ຫລ - ຫວ ........ 209
ໂຕ ອ ........ 226
ໂຕ ຮ ........ 236

## ພາກ 3 ຄຳອະທິບາຍປະກອບຮູບ

ໂຄງຮ່າງການຈັດຕັ້ງ ........ 242
ຂອງລະບົບອຳນາດ ປະຊາທິປະໄຕ ປະຊາຊົນລາວ
ຊື່ປະເທດ ແລະທຸງ ........ 244
ສະຖານບູຮານຕ່າງໆໃນໂລກ ........ 271
ສະຖານທີ່ທຳມະຊາດມະຫັດສະຈັນ 7 ແຫ່ງຂອງໂລກ ........ 277
ເຮືອນຊົນເຜົ່າຕ່າງໆໃນລາວ ........ 283
ລາຍຜ້າລາວ ຈາກຊົນເຜົ່າຕ່າງໆໃນລາວ ແລະ ລາຍຄວັດໄມ້ ........ 286
ເຄື່ອງຈັກສານ ........ 290
ປາ, ນົກ ແລະ ສັດປ່າຫາຍາກໃນລາວ ........ 293
ພືດຜັກ ........ 299
ພືດເປັນຢາ ........ 306
ພືດປະດັບ ........ 314
ພືດໃຫ້ໝາກ ........ 321
ຮ່າງກາຍຂອງຄົນ ແລະ ຊື່ອະໄວຍະວະ ........ 329
ລະບົບສຸລິຍະຈັກກະວານ ........ 335
ສູດເລກ ເລຂາຄະນິດ ........ 337
ເອກະສານອ້າງອີງ ........ 358

# ວິທີໃຊ້

ຢາກຮູ້ຈັກຊອກຫາຄຳໃດຄຳໜຶ່ງ ຈົ່ງເບິ່ງວິທີຮຽນລະດັບ ດັ່ງນີ້ :

**<u>ພະຍັນຊະນະເຄົ້າ</u>** ລຽນຕາມຫລັກໄວຍາກອນ : ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ລ ຣ ວ ຫ ອ ຮ.

**<u>ພະຍັນຊະນະປະສົມ</u>** ຄື : ຫງ ຫຍ ຫນ(ໜ) ຫມ(ໝ) ຫລ(ຫຼ) ຫວ ໃຫ້ເບິ່ງຕໍ່ຈາກຕົວ ຫ.

**<u>ພະຍັນຊະນະຄວບ</u>** ຈັດໄວ້ຕອນທ້າຍຂອງແຕ່ລະພະຍັນຊະນະເຄົ້າ ຕົວຢ່າງ ກວ (ກວາງ) ຂວ (ຂວາ) ເປັນຕົ້ນ.

ພະຍັນຊະນະທີ່ປະກອບເຂົ້າກັບສະຫລະ ໃຫ້ເບິ່ງຕາມລຳດັບສະຫລະ ດັ່ງນີ້ : xະ xາ xິ xີ xຶ xື xຸ xູ ເxະ ເx ແxະ ແx ໂxະ ໂx ເxາະ xໍ ເxິ ເxີ ເxຶອ ເxືອ ເxັຽ ເxຽ xົວະ xົວ ໄx ໃx ເxົາ xຳ.

ຄຳ ຫລື ພະຍາງ ທີ່ມີຕົວສະກົດ ລຽນໄວ້ຕາມລຳດັບພະຍັນຊະນະທີ່ເປັນຕົວສະກົດ ດັ່ງນີ້ : ກ ງ ຍ ດ ນ ບ ມ ວ.

ຄຳ ຫລືພະຍາງ ທີ່ມີວັນນະຍຸດລຽນໄວ້ຕາມລຳດັບສຽງ ດັ່ງນີ້ : x່ x້ x໊ x໋.

## ໝາຍເຫດ

ການໃຊ້ຕົວ ຣ ໃນຄຳສັບທີ່ມາຈາກຄຳຝຣັ່ງອັງກິດ ໄດ້ຈັດໄວ້ ຕາມລຳດັບຂອງ ພະຍັນຊະນະເຄົ້າ ແລະ ຄຳທີ່ເປັນນາມສະເພາະຂອງສັດ ແລະພືດບາງຊະນິດ ກໍໄດ້ຕັດອອກ ເພາະໄດ້ຈັດໄວ້ກັບຮູບແລ້ວ.

# ພາກ 1
# ຮູ້ຈັກບ້ານເກີດເມືອງນອນ

ປະເທດລາວ ຫລື ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເອີ້ນຫຍໍ້ວ່າ: ສ.ປ.ປ.ລ. ມີເນື້ອທີ່ 236,800 ກິໂລແມັດມົນທົນ ຢຽດຍາວແຕ່ເຫນືອເຖິງໃຕ້ 1,700 ກ.ມ. ບ່ອນກວ້າງສຸດ ແຕ່ຕາເວັນອອກຫາຕາເວັນຕົກ ປະມານ 400 ກ.ມ. ແຕ່ແຂວງ ***ອຸດົມໄຊ*** ຫາແຂວງ ***ຫົວພັນ***, ບ່ອນແຄບສຸດ ປະມານ 100 ກ.ມ. ຢູ່ແຂວງ ***ຄຳມ່ວນ***. ພູມປະເທດທາງພາກເຫນືອ ປົກຄຸມດ້ວຍພູຜາ ແລະ ປ່າໄມ້ ສະເລ່ຍແລ້ວພື້ນທີ່ປະເທດລາວເປັນພູຜາ ປະມານ 2/3 ແລະ ມີລະດັບສູງຈາກນໍ້າທະເລ ແຕ່ 200 ຫາ 3,000 ແມັດ. ນອກຈາກມີພູຜາຢັ້ງຢາຍແຕ່ເຫນືອເຖິງໃຕ້ແລ້ວ ເນື້ອທີ່ປະມານ 47% ຍັງປົກຫຸ້ມດ້ວຍປ່າໄມ້ນາໆຊະນິດ ມີທັງໄມ້ເນື້ອແຂງ ເຊັ່ນ ***ໄມ້ດູ່ ໄມ້ແຄນ ໄມ້ແຕ້ຂ່າ ໄມ້ໂລ່ງເລ່ງ ໄມ້ສັກ*** ແລະ ໄມ້ເນື້ອອ່ອນ ເຊັ່ນ ***ໄມ້ເປືອຍ ໄມ້ຍາງ ໄມ້ແປກ***. ໃນລະຍະສິບປີຫລັງມານີ້ ການຕັດໄມ້ສົ່ງອອກຕ່າງປະເທດ ແລະ ຊົມໃຊ້ພາຍໃນສະເລ່ຍ ປີລະ 600,000 ມ$^3$ ນອກຈາກນີ້ ແຕ່ລະປີ ເນື້ອທີ່ ປ່າໄມ້ປະມານ 300,000 ເຮັກຕາ ຕາມເປີ້ນພູ ກໍຖືກຈູດຖາງເພື່ອເຮັດໄຮ່.

***ສ.ປ.ປ.ລາວ*** ມີພົນລະເມືອງ 5,679,000 ຄົນ (ສະຖິຕິ ປີ 2003) ຄວາມຫນາແຫນ້ນ ສະເລ່ຍ: 24 ຄົນ/ກ.ມ.$^2$ (ສະຖິຕິແຫ່ງລັດ 2003) ຈັດຢູ່ໃນກຸ່ມປະເທດທີ່ມີ ຄວາມຫນາແຫນ້ນດ້ານພົນລະເມືອງຕໍ່າໃນເຂດອາຊີຕາເວັນອອກສຽງໃຕ້. ປະຊາຊົນມີສາມຊົນຊາດໃຫຍ່ ຫລື ສາມກຸ່ມໃຫຍ່ ຄື: ຊົນຊາດ ***ລາວ-ໄຕ*** ຫລື ***ລາວລຸ່ມ***, ຊົນຊາດ ***ມອນ-ຂະແມ*** ຫລື ***ລາວເທິງ*** ແລະ ຊົນຊາດ ***ມົ້ງ-ຢ້າວ*** ຫລື ***ລາວສູງ***. ໃນນີ້ ມີຊົນເຜົ່ານ້ອຍຕ່າງໆ ປະມານ 47 ເຜົ່າ. ການທຳມາຫາກິນ ການປຸກສ້າງເຮືອນຢູ່ ສິລະປະວັດທະນະທຳ ເຊັ່ນ ການມ່ວນຊື່ນ ຂັບລຳ ການຈັກສານ ຕໍ່າຫູກ ແລະ ພາສາປາກເວົ້າຂອງສາມຊົນຊາດມີຄວາມແຕກຕ່າງກັນ.

ເມືອງເອກຂອງ ***ສ.ປ.ປ.ລາວ*** ແມ່ນ ***ນະຄອນຫລວງວຽງຈັນ.***

ປະເທດລາວ ຕັ້ງຢູ່ໃນເຂດອາຊີຕາເວັນອອກສຽງໃຕ້ ບໍ່ມີທາງອອກສູ່ທະເລ ແລະ ມີຊາຍແດນຕິດຕໍ່ກັບປະເທດຕ່າງໆ ດັ່ງນີ້ :

- ພາກເຫນືອ ຕິດກັບ ***ສາທາລະນະລັດປະຊາຊົນຈີນ*** ມີຊາຍແດນຮ່ວມກັບ 505 ກ.ມ.
- ພາກໃຕ້ ຕິດກັບ ***ລາຊະອານາຈັກກຳປູເຈຍ*** ມີຊາຍແດນຮ່ວມກັບ 435 ກ.ມ.
- ພາກຕາເວັນອອກ ຕິດກັບ ***ສາທາລະນະລັດສັງຄົມນິຍົມຫວຽດນາມ*** ມີຊາຍແດນຮ່ວມກັບ 2069 ກ.ມ.
- ພາກຕາເວັນຕົກສຽງເຫນືອ ຕິດກັບ ***ສະຫະພາບມ່ຽນມ້າ*** ມີຊາຍແດນຮ່ວມກັບ 236 ກ.ມ.
- ພາກຕາເວັນຕົກ ຕິດກັບ ***ລາຊະອານາຈັກໄທ*** ມີຊາຍແດນຮ່ວມກັບ 1.835 ກ.ມ.

ປະເທດລາວມີພູມອາກາດຈັດຢູ່ໃນເຂດອົບອຸ່ນ ມີສອງລະດູ ຄື ລະດູແລ້ງ ແລະ ລະດູຝົນ. ອຸນຫະ

ພູມສະເລ່ຽທົ່ວປະເທດ 25 $^{0}$C.

***ແມ່ນ້ຳຂອງ*** ເປັນແມ່ນ້ຳໃຫຍ່ອັນດັບທີໜຶ່ງໃນແຫລມອິນດູຈີນແລະທີສາມໃນອາຊີ (4.160ກ.ມ) ກໍ່ກຳເນີດ ຈາກຈອມພູ***ຕັນລາ*** (Mts Tanglha), ພາກຕາເວັນຕົກສຽງໃຕ້ຂອງຈີນ. ***ນ້ຳຂອງ*** ໄຫລຜ່ານເຂດ ***ເສສວນ ພູພຽງຢູນນານ*** ແລະ ເມືອງຊຽງຮຸ່ງຂອງ***ຈີນ*** ແລ້ວຈຶ່ງຜ່ານເຂົ້າມາໃນປະເທດລາວ ທີ່ຫລວງນ້ຳທາທີ່ ເປັນຈຸດຕໍ່ເຂດ ລາວ-ຈີນ-ມຽນມ້າ. ຈາກນັ້ນ ***ນ້ຳຂອງ*** ໄຫລລຽບເປັນຊາຍແດນ ***ລາວ-ມຽນມ້າ*** ແລະເຂົ້າສູ່ເຂດ ***ລາວ-ໄທ.*** ຈຸດຕໍ່ເຂດຊາຍແດນສາມປະເທດບ່ອນນີ້ມີຊື່ເອີ້ນກັນວ່າ ***ສາມລ່ຽມຄຳ*** ຈາກນີ້ ***ນ້ຳຂອງ*** ໄຫລເລິກເຂົ້າສູ່ດິນລາວຜ່ານ ***ຫລວງພະບາງ*** ແລ້ວຈຶ່ງເວີ້ງອອກມາເປັນຊາຍແດນ ***ລາວ-ໄທ*** ຕັ້ງແຕ່ ເມືອງ ***ຊະນະຄາມ*** ລົງໄປຮອດແຂວງ ***ຈຳປາສັກ*** ແລະຕົກສູ່ແດນ ***ກຳປູເຈຽ, ຫວຽດນາມພາກໃຕ້*** ແລ້ວຈຶ່ງຕົກໃສ່ທະເລຈີນ. ***ນ້ຳຂອງ*** ໄຫລຜ່ານປະເທດລາວ ແຕ່ເໜືອເຖິງໃຕ້ໂຮມທັງໝົດ 1.865 ກິໂລແມັດ. ບາງບ່ອນເປັນຊາຍແດນຂອງປະເທດແລະບາງບ່ອນໄຫລຜ່ານກາງເຮັດໃຫ້ເຂດແດນຂອງລາວມີທັງ ຢູ່ກ້ຳຊ້າຍແລະກ້ຳຂວາ. ກ່ອນຈະຕົກເຂົ້າສູ່ແດນ ***ກຳປູເຈຽ ນ້ຳຂອງ*** ແຕກແຜ່ພຶງ ແລະຕົກເປັນແກ້ງ ໃຫຍ່ເອີ້ນວ່າ ***ລີ່ຜີ. ລີ່ຜີ*** ເປັນນ້ຳຕົກຕາດທີ່ມີແກ້ງຫີນງົດງາມທັງເລິກລັບ ໜ້າເກງຂາມແຫ່ງນຶ່ງ ໃນອາຊີຕາເວັນອອກສຽງໃຕ້ ແລະ ເປັນຮົ້ວປ້ອງກັນໂດຍທຳມະຊາດ. ແຕ່ກ່ອນ ປາໃນແມ່ນ້ຳຂອງອຸດົມສົມບູນຫລາຍ ມີປາຊະນິດຕ່າງໆເຖິງ 1.000 ກວ່າຊະນິດ ປາບຶກເປັນປາໜັງໃຫຍ່ທີ່ສຸດໃນ ແມ່ນ້ຳຂອງ ແຕ່ລະຍະຊາວປີຫລັງມານີ້ ປາບຶກ ຕົກຢູ່ໃນພາວະຄຸກຄາມ ເກືອບສູນແນວ ແຕ່ປັດຈຸບັນ ໄດ້ມີອົງການອະນຸຮັກແນວປາບຶກໄວ້ ແລະ ໂຄງການນີ້ ກໍພວມໄດ້ຮັບຄວາມສົນໃຈ ຈາກປະຊາ ຊົນສອງຝັ່ງຂອງ ລາວ-ໄທ ທີ່ຈະຮ່ວມມືກັນຮັກສາແນວປາບຶກໄວ້ໃຫ້ມີຢູ່ຕະຫລອດໄປ. ປາອີກຊະນິດນຶ່ງທີ່ຫາຍາກໃນໂລກ ແຕ່ມີຢູ່ໃນນ້ຳຂອງແມ່ນ ***ປາຂ່າ*** ຫລື ***ປາສະມ່ອຍ*** ຊຶ່ງເປັນສັດລ້ຽງລູກດ້ວຍ ນ້ຳນົມ ຕະກູນດຽວກັບ ***ປາດອນຟິນ*** ແຫ່ງອີຣະວະດີ (Irrawady dolphine) ຢູ່ໃຕ້ແກ້ງ ***ລີ່ຜີ*** ລົງໄປບ່ອນນ້ຳຂອງ ແຜ່ກວ້າງເປັນວັງໃຫຍ່. ***ຝຣັ່ງ*** ເຄີຍພະຍາຍາມລະເບີດແກ້ງຫີນ ໃນບໍລິເວນນີ້ ເພື່ອໃຫ້ການເດີນເຮືອສະດວກ ແຕ່ບໍ່ສຳເລັດຈຶ່ງເຮັດຂົວພ້ອມທາງລົດໄຟເຊື່ອມຕໍ່ດອນ ເພື່ອເຄື່ອນຍ້າຍກຳປັ່ນໄປຕາມລາງລົດໄຟ ອຳນວຍໃຫ້ກຳປັ່ນ ທີ່ຂຶ້ນມາແຕ່ທະເລນັ້ນ ແລ່ນເຖິງ ***ວຽງຈັນ*** ແລະ ***ຫລວງພະບາງ*** ໄດ້.

***ນ້ຳຂອງ*** ແລະ ສາຂາຂອງມັນ ທີ່ເປັນແມ່ນ້ຳລຳເຊອີກສິບກວ່າສາຍ ແມ່ນແຫລ່ງຊັບພະຍາກອນທຳມະຊາດ ທີ່ຫລໍ່ລ້ຽງປະຊາຊົນລາວແຕ່ເໜືອຮອດໃຕ້ ແລະເປັນເສັ້ນທາງຄົມມະນາຄົມ ອຳນວຍໃຫ້ປະຊາຊົນເຂດຫ່າງໄກ ສາມາດໄປມາຫາສູ່ກັນໄດ້ຕະຫລອດປີ. ແມ່ນ້ຳຂອງມີເກາະດອນນ້ອຍໃຫຍ່ ຢັ່ງຢາຍມາ ແຕ່ເໜືອສຸດໃຕ້ ບ່ອນຫລາຍທີ່ສຸດແມ່ນ ບໍລິເວນໃຕ້ ***ເມືອງໂຂງ*** ລົງໄປ, ບາງດອນມີປະຊາຊົນຕັ້ງບ້ານເຮືອນອາໄສຢູ່ ບາງບ່ອນເປັນສວນປູກພືດ ເຊັ່ນ ຢາດູດ, ສາລີ. ເກາະດອນສ່ວນຫລາຍຢູ່ໃນ***ນ້ຳຂອງ*** ແມ່ນກຳມະສິດຂອງ ***ສ.ປ.ປ.ລາວ*** ຕາມສັນຍາ ***ສະຫຍາມ-ຝຣັ່ງ*** ສະບັບວັນທີ 13 ເດືອນກຸມພາ ຄ.ສ. 1903. ໂດຍກໍ່ເອົາຮ່ອງນ້ຳທີ່ເລິກໃນນ້ຳຂອງ ເປັນເສັ້ນຊາຍແດນ. ***ດອນໂຂງ*** ເປັນດອນໃຫຍ່ກວ່າໝູ່ໃນ ນ້ຳຂອງ ຄື ກວ້າງ 6 ກ.ມ. ແລະ ຍາວ 12 ກ.ມ. ນອກຈາກ

ເປັນເສັ້ນທາງຄົມມະນາຄົມທີ່ດີແລ້ວ ແມ່ນ້ຳລຳເຊທັງຫລາຍ ຍັງເປັນແຫລ່ງພະລັງງານສຳຄັນຂອງ ***ສ.ປ.ປ.ລາວ*** ອີກ. ***ເຂື່ອນນ້ຳງື່ມ*** ທີ່ ແຂວງວຽງຈັນ, ***ເຂື່ອນເຊເສັດ*** ທີ່ ສາລະວັນ, ***ເຂື່ອນເຊລະບຳ*** ແລະ ເຂື່ອນນ້ອຍໆ ອີກຫລາຍບ່ອນ ໄດ້ສະໜອງພະລັງງານໄຟຟ້າ ທີ່ກາຍເປັນສິນຄ້າຂາອອກ ແລະ ສ້າງລາຍຮັບສ່ວນສຳຄັນ ໃຫ້ແກ່ ***ສ.ປ.ປ.ລາວ***.

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ*** ໄດ້ຮັບການສະຖາປະນາຂຶ້ນໃນປີ ຄ.ສ. 1975 ຫລັງຈາກ ສົງຄາມປົດປ່ອຍຊາດຍຸຕິລົງ ດ້ວຍໄຊຊະນະຂອງ ***ກຳລັງປະຕິວັດລາວ***. ໄຊຊະນະດັ່ງກ່າວ ເປັນຈຸດອະວະສານ ຂອງລະບອບປົກຄອງແບບລາຊາທິປະໄຕ ອັນມີເຈົ້າຊີວິດເປັນປະມຸກຂອງປະເທດ. ນັບຕັ້ງແຕ່ ***ເຈົ້າຟ້າງູ່ມ ມະຫາລາດ*** ໄດ້ເຕົ້າໂຮມແຜ່ນດິນ ແລະປະຊາຊົນ ໃຫ້ຢູ່ພາຍໃຕ້ການປົກຄອງ ອັນດຽວກັນ ເມື່ອປີ ຄ.ສ. 1353 ແລະເອີ້ນຊື່ປະເທດວ່າ: ***ອານາຈັກລ້ານຊ້າງ***. ***ອານາຈັກລ້ານຊ້າງ*** ຄ່ອຍໆຮຸ່ງເຮືອງຂຶ້ນເປັນລຳດັບມາຮອດສະໄໝ ***ເຈົ້າສຸລິຍະວົງສາ*** ຂຶ້ນປົກຄອງປະເທດ ແຕ່ປີ ຄ.ສ. 1633 ເຖິງ 1690, ລະຍະນີ້ ກໍວ່າ ສາສະໜາ ວັນນະຄະດີ ໃນ ***ອານາຈັກລ້ານຊ້າງ*** ຈະເລີນຮຸ່ງເຮືອງສຸດຂີດ. ວັດວາອາຮາມ ໄດ້ຮັບການບູລະນະຮັກສາກໍ່ສ້າງຂຶ້ນ ຢ່າງຫລວງຫລາຍ, ນັກປາດອາຈານແຕ່ງໜັງສື ຄຳພີດີກາກົດໝາຍ ອອກມາສິດສອນ ເປັນຕຳລາເຜີຍແຜ່ໄປທົ່ວປະເທດ. ທ່ານ ***ວັນວຸດສະຕັອບ*** ພໍ່ຄ້າຊາວໂຮນລັງ ທີ່ໄດ້ເດີນທາງເຂົ້າມາຮອດປະເທດລາວໃນສະໄໝນັ້ນ ຂຽນບັນທຶກໄວ້ວ່າ : "***ນະຄອນວຽງຈັນ*** ມີວັດຫລາຍ ແລະ ມີພະສົງ ທີ່ຮ່ຳຮຽນຢູ່ໃນວັດຫລາຍກວ່າທະຫານ ຢູ່ໃນກອງທັບຂອງເຈົ້າຊີວິດ ***ກົໂຢມທີສອງ***...", ຫລັງຈາກ ***ເຈົ້າສຸລິຍະວົງສາ*** ແລ້ວ ***ອານາຈັກລ້ານຊ້າງ*** ຫລົ້ມຈົມລົງ ຍ້ອນເກີດຄວາມແຕກແຍກພາຍໃນ ແລະ ການຍາດແຍ່ງກັນຂຶ້ນເປັນເຈົ້າປົກຄອງ. ເຫດການວຸ່ນວາຍ ດຳເນີນຕິດຕໍ່ກັນມາ ຈົນຮອດປີ ຄ.ສ. 1779 ແລ້ວປະເທດລາວກໍຕົກເປັນເມືອງຂຶ້ນຂອງສະຫຍາມ. ຈົນເຖິງປີ 1893 ***ຝຣັ່ງ*** ກໍເຂົ້າມາຍຶດເອົາ ***ລາວ*** ເປັນທົ່ວເມືອງຂຶ້ນ ພາຍຫລັງທີ່ໄດ້ຍຶດເອົາ ***ຂະເໝນ*** ແລະ ***ຫວຽດນາມ*** ແລ້ວ ເອີ້ນຮວມກັນວ່າ ***ອິນດູຈີນຝຣັ່ງ***.

---

ນັບແຕ່ສະໄໝ ***ຂຸນລໍ*** ພາປະຊາຊົນເຄື່ອນຍ້າຍລົງມາຕັ້ງກິ່ນການບ້ານເມືອງລຽບລ່ອງນ້ຳຂອງ ເມື່ອ ຄ.ສ. 747 ມາຮອດປີ 1779 ນັບເປັນເວລາພັນກວ່າປີ ***ປະເທດລາວ*** ກໍເສຽເອກະລາດ ຕົກເປັນທົ່ວເມືອງຂຶ້ນແບບເກົ່າ ແລະແບບໃໝ່ຕິດຕໍ່ກັນມາ ນັບແຕ່ ຄ.ສ. 1779 ຫາ 1975 ນັບເປັນເວລາເກືອບ 200 ປີ ຈຶ່ງໄດ້ເປັນເອກະລາດຢ່າງສົມບູນ ແລ້ວມີການປ່ຽນແປງການປົກຄອງ ຈາກລະບອບລາຊາທິປະໄຕ ມາເປັນລະບອບ ສາທາລະນະລັດ.

---

***ສ.ປ.ປ.ລາວ*** ແບ່ງທົ່ວໜ່ວຍການປົກຄອງອອກເປັນ 16 ແຂວງ, 1 ເຂດພິເສດ ຊື່ ໄຊສົມບູນ ແລະ ເຂດທີ່ເປັນບ່ອນຕັ້ງນະຄອນຫລວງ ດັ່ງມີລາຍລະອຽດ ຕໍ່ໄປນີ້ :

# ແຜນທີ່ປະເທດລາວ



| ຫມາຍເລກ | ຊື່ແຂວງ/ກໍາແພງນະຄອນ |
|---|---|
| 01 | ນະຄອນຫລວງວຽງຈັນ |
| 02 | ຜົ້ງສາລີ |
| 03 | ຫລວງນໍ້າທາ |
| 04 | ອຸດົມໄຊ |
| 05 | ບໍ່ແກ້ວ |
| 06 | ຫລວງພະບາງ |
| 07 | ຫົວພັນ |
| 08 | ໄຊຍະບູລີ |
| 09 | ຊຽງຂວາງ |
| 10 | ວຽງຈັນ |
| 11 | ບໍລິຄໍາໄຊ |
| 12 | ຄໍາມ່ວນ |
| 13 | ສະຫວັນນະເຂດ |
| 14 | ສາລະວັນ |
| 15 | ເຊກອງ |
| 16 | ຈໍາປາສັກ |
| 17 | ອັດຕະປື |
| 18 | ເຂດພິເສດໄຊສົມບູນ |

---

## 01 ກໍາແພງນະຄອນວຽງຈັນ

**ເຄື່ອງຫມາຍ**

1. ເມືອງຈັນທະບູລີ
2. ເມືອງສີສັດຕະນາກ
3. ເມືອງໄຊເຊດຖາ
4. ເມືອງສີໂຄດຕະບອງ
5. ເມືອງຫາດຊາຍຟອງ
6. ເມືອງໄຊທານີ
7. ເມືອງນາຊາຍທອງ
8. ເມືອງສັງທອງ
10. ນະຄອນຫລວງວຽງຈັນ

ສະຫນາມບິນສາກົນ ແລະພາຍໃນ

------- ທາງລົດ

|—•—| ແມ່ນໍ້າ






ປະຕູໄຊ ຫຼື ອະນຸສາວະລີ ສ້າງໃນປີ 1962, ຕັ້ງຢູ່ວົງວຽນໃຫຍ່ ຖະໜົນລ້ານຊ້າງ



ພະທາດຫລວງ ສ້າງຂຶ້ນໂດຍພະເຈົ້າໄຊຍະເຊດຖາທິຣາດ ໃນ ຄ.ສ. 1566, ສ້າງຄອບທາດ ສີທຳມະໂສດເກົ່າແກ່ດັ້ງເດີມແຫ່ງອານາຈັກສີໂຄດຕະບອງ.



ວັດອົງຕື້ ສ້າງຂຶ້ນເມື່ອ ຄ.ສ. 1566, ສະໄໝພະເຈົ້າໄຊຍະເຊດຖາທິຣາດ.ພາຍໃນປະດິດສະຖານດ້ວຍພະພຸດທະຮູບທອງສຳລິດ ຂະໜາດໃຫຍ່ທີ່ສຳຄັນຂອງລາວ

| | |
|---|---|
| ເນື້ອທີ່ | 3,920 ກ.ມ.$^2$ |
| ປະຊາກອນ | 650,600 ຄົນ |
| ຊົນຊາດ | ລາວ-ໄຕ (ລາວລຸ່ມ) 85% |
| | ມອນ-ຂະແມ(ລາວເທິງ) 10% |
| | ມົ້ງ-ຢ້າວ(ລາວສູງ) 5% |
| ວັດ | 130 ແຫ່ງ |
| ຕະຫລາດໃຫຍ່ | 8 ແຫ່ງ |
| ຂົວຂ້າມແມ່ນ້ຳຂອງ | 1 ແຫ່ງ |
| ຂົວຂ້າມນ້ຳງື່ມ | 2 ແຫ່ງ |
| ແມ່ນ້ຳ | ນ້ຳຂອງ ນ້ຳງື່ມ, ນ້ຳທຸມ, ນ້ຳສັກ, ຫ້ວຍຫມາກນາວ, ຫ້ວຍຫມາກຣຽວ |

***ນະຄອນຫລວງວຽງຈັນ*** ປ່ຽນຈາກ ***ກຳແພງນະຄອນວຽງຈັນ*** ປ່ຽນເມື່ອ ຄ.ສ. 2003 ເຄີຍມີຊື່ ໃນປະຫວັດສາດ ນັບເປັນຫລາຍຮ້ອຍປີ ຫລືພັນກວ່າປີມາແລ້ວ ຄູ່ກັບ ***ເມືອງວຽງຄຳ*** (ປັດຈຸບັນຊື່ວ່າ ບ້ານ ***ວຽງຄຳ*** ຢູ່ ***ແຂວງວຽງຈັນ ແຄມນ້ຳງື່ມ***). ***ເຈົ້າໄຊຍະເຊດຖາທິລາດ*** ໄດ້ໂຍກຍ້າຍ ນະຄອນຫລວງຈາກ ຊຽງທອງ (***ຫລວງພະບາງ***) ມາ ***ວຽງຈັນ*** ໃນ ຄ.ສ.1560 ແລະ ສ້າງສາຫໍໂຮງ ***ຫໍພະແກ້ວ ຫໍພະແຊກຄຳ ພະທາດຫລວງ*** ຫລໍ່ພຸດທະຮູບ ດ້ວຍທອງສຳລິດ ຂະຫນາດໃຫຍ່ເຊັ່ນ ພະອົງຕື້ ***ພະສຸກ ພະເສີມ ພະໃສ*** ເປັນຕົ້ນ. ໃນສະໄຫມນີ້ ມີການສ້າງສາ ແລະ ສ້ອມແປງວັດຕ່າງໆຫລາຍແຫ່ງ ໂຮມທັງກຳແພງເມືອງ ກໍ່ດ້ວຍດິນຈີ່ ແລະ ດິນຫນຽວ. ***ນະຄອນຫລວງວຽງຈັນ*** ເປັນໃຈກາງຂອງວັດທະນະທຳລາວນັບຕັ້ງແຕ່ ສະໄຫມນັ້ນເປັນຕົ້ນມາ ແລະເລີ່ມຫລົ້ມຈົມລົງ ເມື່ອປະເທດລາວແຕກແຍກກັນ ເປັນສາມອານາຈັກ ເຊິ່ງຕໍ່ມາໄດ້ຕົກເປັນ ຫົວເມືອງຂຶ້ນຂອງ ***ສະຫຍາມ*** ພ້ອມກັນໃນປີ ຄ.ສ.1779. ຈາກນັ້ນ ***ນະຄອນວຽງຈັນ*** ທີ່ເຄີຍຮຸ່ງເຮືອງ ມາໄດ້ຫລາຍສະຕະວັດ ກໍຖືກເຜົາຜານຮາບກ້ຽງລົງ ໃນສະໄຫມສົງຄາມ ລະຫວ່າງ ***ເຈົ້າອະນຸວົງ*** ກະສັດອົງສຸດທ້າຍແຫ່ງລາຊະວົງ ***ວຽງຈັນ*** ກັບກອງທັບສະຫຍາມ ເມື່ອປີ ຄ.ສ.1826-28. ບໍ່ພຽງແຕ່ວັດວາຫໍໂຮງອັນວິຈິດງົດງາມ ຖືກມ້າງເພທຳລາຍເທົ່ານັ້ນ ປະຊາຊົນຄົນລາວ ກໍຖືກກວາດ ໄລ່ລົງໄປຢູ່ ***ສະຫຍາມ*** ແລະ ໄດ້ກາຍເປັນພົນລະເມືອງໄທ ໃນກາລະຕໍ່ມາ. ***ວຽງຈັນ*** ເປັນເມືອງຮ້າງ ເປົ່າແປນຢູ່ຫລາຍສິບປີ ຄືນັບແຕ່ ຄ.ສ. 1829 ເຖິງທ້າຍ ສະຕະວັດທີ 19 (ຄ.ສ.1893) ເມື່ອ ***ຝຣັ່ງ*** ເຂົ້າມາຍຶດເອົາເປັນຫົວເມືອງຂຶ້ນ. ນັບແຕ່ນັ້ນມາ ***ນະຄອນວຽງຈັນ*** ຈຶ່ງຄ່ອຍໆຟື້ນຊີບຄືນ ມີການ ສ້າງສາ ບູລະນະວັດວາອາຮາມ ທີ່ເຫລືອ ເຊັ່ນ ໃນປີ ຄ.ສ. 1928 ໄດ້ສ້ອມແປງ ***ຫໍພະແກ້ວ*** ແລະ ***ພະທາດຫລວງ.*** ປັດຈຸບັນ ວຽງຈັນ ເປັນ ນະຄອນຫລວງຂອງ ສ.ປ.ປ.ລາວ ທັງເປັນຫົວຫນ່ວຍສຳຄັນຂອງການປົກຄອງ ທີ່ເອີ້ນວ່າ ***ນະຄອນຫລວງວຽງຈັນ,*** ມີພົນລະເມືອງທີ່ຫນາແຫນ້ນກວ່າຫມູ່ຄື 166 ຄົນ/ກ.ມ$^2$ (ຄວາມຫນາແຫນ້ນຕ່ຳສຸດ ແມ່ນແຂວງອັດຕະປື ແລະ ແຂວງເຊກອງ ຄື 10,5 ຄົນ/ກ.ມ.$^2$) ເຂດ

***ນະຄອນຫລວງວຽງຈັນ*** ຕັ້ງຢູ່ລະຫວ່າງ ພື້ນທີ່ຮາບພຽງຂອງລ່ອງນ້ຳຂອງ ແລະນ້ຳງື່ມ; ມີທົ່ງຮາບພຽງເຫມາະແກ່ການປູກຝັງ, ທົ່ງນີ້ເອີ້ນກັນວ່າ ***ທົ່ງຮາບວຽງຈັນ*** ຊຶ່ງອ້ອມດ້ວຍສາຍພູ***ເຂົາຄວາຍ*** ຕໍ່ໃສ່ສາຍພູງູ. ເຂດນະຄອນຫລວງ ແບ່ງອອກເປັນ 9 ເມືອງ ມີລະຫັດຕາມປື້ມຂໍ້ມູນສະຖິຕິດັ່ງນີ້ :

| | | |
|---|---|---|
| 01 | 01 . | ເມືອງ ຈັນທະບູລີ |
| 01 | 02. | ເມືອງ ສີໂຄດຕະບອງ |
| 01 | 03. | ເມືອງ ໄຊເຊດຖາ |
| 01 | 04. | ເມືອງ ສີສັດຕະນາກ |
| 01 | 05. | ເມືອງ ນາຊາຍທອງ |
| 01 | 06. | ເມືອງ ໄຊທານີ |
| 01 | 07. | ເມືອງ ຫາດຊາຍຟອງ |
| 01 | 08. | ເມືອງ ສັງທອງ |
| 01 | 09 | ເມືອງໃຫມ່ປາກງື່ມ |

ມີສະຖານທີ່ສຶກສາຊັ້ນສູງ ຊັ້ນກາງ ແລະ ຊັ້ນຕົ້ນ ທີ່ສຳຄັນຂອງລັດຖະບານ 20 ກວ່າແຫ່ງ ຊຶ່ງກວມເກືອບ 50% ຂອງສະຖາບັນສຶກສາທົ່ວປະເທດ ຄື:

1/. ມະຫາວິທະຍາໄລແຫ່ງຊາດ 01 ແຫ່ງ

ເຊິ່ງປະກອບດ້ວຍຄະນະຕ່າງໆດັ່ງນີ້ :

1. ຄະນະວິສະວະກຳສາດ
2. ຄະນະກະສິກຳ ປ່າໄມ້
3. ຄະນະແພດສາດ
4. ຄະນະສຶກສາສາດ
5. ຄະນະພາສາ ວັນນະຄະດີລາວ
6. ຄະນະວິທະຍາສາດ
7. ຄະນະເສດຖະສາດ
8. ຄະນະສັງຄົມສາດ

2/. ໂຮງຮຽນການຊ່າງ ຊັ້ນກາງ ແລະ ຊັ້ນຕົ້ນ 02 ແຫ່ງ

3/. ໂຮງຮຽນການຄຸ້ມຄອງ ແລະ ການບໍລິຫານແຫ່ງຊາດ

4/. ໂຮງຮຽນສິລະປະດົນຕີ

5/. ວິທະຍາໄລ ສິລະປະກຳ

6/. ໂຮງຮຽນສ້າງຄູອະນຸບານ ແລະປະຖົມ

7/. ໂຮງຮຽນການເງິນ

8/. ໂຮງຮຽນທິດສະດີພັກລັດຊັ້ນສູງ(ທ່າງ່ອນ)

ນອກຈາກນີ້ສະຖາບັນການສຶກສາເອກະຊົນລະດັບປະລິນຍາຕີ ແລະ ຊັ້ນກາງ ອີກຫລາຍບ່ອນ ເຊັ່ນ ວິທະຍາໄລບໍລິຫານທຸລະກິດ, ວຽງຈັນ ໂຄແລຊ໌, ຄອມເຊັນເຕີ, ໂຮງຮຽນສອນຄອມພິວເຕີ້, ບັນຊີ ພິມດີດ, ຕັດເຄື່ອງ ແລະ ອື່ນໆອີກຫລາຍສິບແຫ່ງ.

---

## 02 ແຂວງຜົ້ງສາລີ




| | | | |
|---|---|---|---|
| ເນື້ອທີ່ | 16,270 ກ.ມ.$^2$ | | |
| ປະຊາກອນ | 189,700 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 15% |
| | ມອນ-ຂະແມ | (ລາວເທິງ) | 50% |
| | ມົ້ງ-ຢ້າວ | (ລາວສູງ) | 35% |
| ທີ່ວ່າການແຂວງ | ຜົ້ງສາລີ | | |
| ແມ່ນ້ຳສຳຄັນ | ນ້ຳອູ, ນ້ຳນິ່ວ, ນ້ຳພາກ | | |



ທິວທັດເມືອງຜົ້ງສາລີ

***ຜົ້ງສາລີ***ເປັນແຂວງເຫນືອສຸດຂອງ ***ສ.ປ.ປ.ລາວ***, ພື້ນທີ່ສ່ວນໃຫຍ່ເປັນພູຜາສູງ. ປະຊາຊົນ ປູກເຂົ້າດ້ວຍການເຮັດນາຂັ້ນໄດ ແລະ ປູກພືດບາງຢ່າງ ເຊັ່ນ ***ຊາ, ກາເຟ, ຝ້າຍ, ຢາດູດ, ຖົ່ວດິນ, ຖົ່ວເຫລືອງ, ຖົ່ວຂຽວ ;*** ເກັບຫາເຄື່ອງປ່າຂອງດົງ ເຊັ່ນ ຫມາກແຫນ່ງ ຍານ ແລະ ຂີ້ຊີ. ຊົນເຜົ່າຕ່າງໆ ໃນແຂວງມີ: ***ລາວ, ລື້, ທັ້, ກໍ່, ຢ້າວ, ກຳພູຊາງ, ພູນ້ອຍ, ມົ້ງລາຍ, ຂະມຸ***. ລັກສະນະ ບ້ານເຮືອນຂອງປະຊາຊົນ ແຕ່ລະຊົນເຜົ່າແຕກຕ່າງກັນ. ຊົນເຜົ່າ***ລື້*** ຢູ່ເຮືອນມີເສົາສູງ ເຮັດດ້ວຍໄມ້ສັກ ແລະ ໄມ້ເນື້ອແຂງ. ຊົນ ເຜົ່າ ***ມົ້ງຢ້າວ*** ຢູ່ເຮືອນຕິດດິນເຮັດດ້ວຍໄມ້ໄຜ່ ແລະ ໄມ້ເນື້ອແຂງ. ປະຊາຊົນສ່ວນຫນຶ່ງຕ່ຳຫູກຝ້າຍ ຜະລິດເຄື່ອງໃຊ້ເຄື່ອງນຸ່ງຫົ່ມບາງຢ່າງເອົາເອງ. ຊົນເຜົ່ານ້ອຍບາງກຸ່ມ ທີ່ຢູ່ຫ່າງໄກສອກຫລີກດຳລົງຊີວິດຕາມຮີດຄອງເດີມ ແລະ ປາກເວົ້າດ້ວຍພາສາປະຈຳເຜົ່າ. ບຸນປະເພນີທີ່ສຳຄັນມີບຸນປີໃຫມ່ ບຸນສະຫລອງການປູກເຂົ້າ, ບຸນກູ້ເຜືອກກູ້ມັນ ແລະ ການເຢົາຢາ ພາຍໃນຄອບຄົວ; ວາດຂັບລຳໃນທ້ອງຖິ່ນ ມີ ຂັບລື້, ຂັບພູຊາງ, ຂັບມົ້ງ ແລະ ຂັບເຕີມ.

ການເດີນທາງໄປ ***ແຂວງຜົ້ງສາລີ*** ເຮັດໄດ້ຫລາຍວິທີ ຄື ຂີ່ເຮືອຂຶ້ນຕາມ***ນ້ຳອູ*** ແຕ່ ***ເມືອງຂວາ*** ແຂວງ***ຜົ້ງສາລີ*** ໄປ ຫລື ຂີ່ເຮືອບິນໄປລົງແຂວງ***ຫລວງນ້ຳທາ*** ແລ້ວເດີນທາງຕໍ່ດ້ວຍລົດຍົນ.

## 03 ແຂວງຫລວງນ້ຳທາ




| | | | |
|---|---|---|---|
| ເນື້ອທີ່ | 9,325 ກ.ມ.$^2$ | | |
| ປະຊາກອນ | 142,400 ຄົນ | | |
| ເມືອງເອກ | ຫລວງນ້ຳທາ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 34% |
| | ມອນ-ຂະແມ | (ລາວເທິງ) | 35% |
| | ມົ້ງ-ຢ້າວ | (ລາວສູງ) | 31% |
| ແມ່ນ້ຳສຳຄັນ | ນ້ຳທາ, ນ້ຳມາ, ນ້ຳຜາ | | |

24 / VII

ແຂວງ***ຫລວງນ້ຳທາ*** ຢູ່ພາກເຫນືອສຸດທາງທິດຕາເວັນຕົກ. ພື້ນທີ່ສ່ວນໃຫຍ່ເປັນພູຜາສູງ, ມີທົ່ງຣາບຫນ້ອຍຫນຶ່ງໃນເຂດເມືອງສິງ. ພູມອາກາດເຢັນ ແລະ ຊຸ່ມຊື່ນ, ຍາມຫນາວ ມີຫມອກກົ້ວເກືອບຕະຫລອດມື້. ປ່າດົງສ່ວນຫນຶ່ງມີສັດປ່າຂະຫນາດໃຫຍ່ ເຊັ່ນ ***ຊ້າງ, ງົວປ່າ, ເສືອ*** ... ປະຊາຊົນໃນແຂວງ***ຫລວງນ້ຳທາ*** ມີຫລາຍຊົນເຜົ່າ ເຊັ່ນ ***ລື້, ຍວນ, ກໍ່, ຢ້າວ, ກຸ່ຍ, ມູເຊີ, ແລນແຕນ, ຂະມຸ.*** ຊາວລື້ເປັນຊົນເຜົ່າຫນຶ່ງທີ່ຍັງຮັກສາຮີດຄອງປະເພນີສັກລາຍ ແລະ ເຮັດທູກຜ້າຝ້າຍຍ້ອມຫມໍ້ນິນຕັດເປັນເຄື່ອງນຸ່ງ.

ຊົນເຜົ່າມົ້ງ ***ຢ້າວ*** ທີ່ຢູ່ຫ່າງໄກ ມັກນຸ່ງກືຕາມປະເພນີ ແລະ ປາກເວົ້າພາສາຂອງຕົນ. ບຸນປະເພນີທີ່ສຳຄັນ ມີ : ***ບຸນປີໃຫມ່*** ຫລື ***ກຸດສົງການ, ບຸນຂຶ້ນເຮືອນ*** ... ວາດຂັບລຳມີ ***ຂັບລື້, ຂັບມົ້ງ, ຂັບຢ້າວ*** ແລະ ***ເຕີມ.*** ແຂວງ***ຫລວງນ້ຳທາ***ມີກະຫນົບຕໍ່ໃສ່ຈີນ ແລະ ນອນຢູ່ໃນຕາຫນ່າງສາຍການບິນລາວ.



ຊິນເຜົ່າແລນແຕນ



ຫໍພິພິທະພັນແຂວງ, ເມືອງສິງ ບູລະນະຄືນ



ປະຕູເຂົ້າບ້ານ

## 04 ແຂວງອຸດົມໄຊ




| | | | |
|---|---|---|---|
| ເນື້ອທີ່ | 21,190 ກມ$^2$ | | |
| ປະຊາກອນ | 260. 900 ຄົນ | | |
| ທີ່ວ່າການແຂວງ | ເມືອງໄຊ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 31% |
| | ມອນ-ຂະແມ | (ລາວເທິງ) | 55% |
| | ມົ້ງ-ຢ້າວ | (ລາວສູງ) | 24% |
| ແມ່ນ້ຳສຳຄັນ | ນ້ຳແບ່ງ, ນ້ຳກໍ່, ນ້ຳງາ | | |

ແຂວງ***ອຸດົມໄຊ*** ເປັນແຂວງຕັ້ງໃໝ່, ໃນສະໄໝສົງຄາມ ເຄີຍມີບົດບາດທາງດ້ານເສດຖະກິດ ຄື ມີໂຮງງານຕໍ່າແຜ່ນ. ພື້ນທີ່ສ່ວນໃຫຍ່ເປັນພູຜາ, ພູມອາກາດທົ່ວໄປເຢັນ ແລະ ຊຸ່ມຊື່ນ. ປະຊາຊົນເຮັດນາດ້ວຍການທົດນ້ຳຈາກຫ້ວຍ ແລະ ເຮັດໄຮ່ຕາມເປີ້ນພູ. ທົ່ວແຂວງ ມີກຸະໜົນ 517 ກມ ແລະ ເດີ່ນຍົນຂະໜາດນ້ອຍແຫ່ງໜຶ່ງ ***ອຸດົມໄຊ*** ເປັນແຂວງໜຶ່ງ ທີ່ຕາໜ່າງສາຍການບິນກວມເຖິງ, ເຜົ່າຕ່າງໆມີ: ***ລາວ, ລື້, ໄທດຳ, ໄທແດງ, ໄທຂາວ, ຍວນ, ຢ້າວ, ກໍ່, ຣະຕຶງ, ປົດ,***



ພະທາດມິ່ງເມືອງ

***ແລນແຕນ, ມົ້ງລາຍ, ມົ້ງຂາວ, ຂະມຸ ຣອກ, ຂະມຸອູ***, ປະຊາຊົນສ່ວນຫນຶ່ງ ນຸ່ງກືຕາມປະເພນີ ແລະ ເວົ້າພາສາປະຈຳເຜົ່າຂອງຕົນ.

ຊົນເຜົ່າ ***ລາວເທິງ*** ຫລື ***ຂະມຸ*** ນິຍົມເຮັດກົ໊ງພາຍດ້ວຍ ***ປໍປ໊ຽດ*** ທີ່ລອກຈາກຕົ້ນປໍຊະນິດຫນຶ່ງ ໃນປ່າ ສ່ວນຊາວ***ລື້*** ກໍມີຄວາມສາມາດຕ່ຳຫູກຜ້າຝ້າຍລາຍຂິດ ໃຊ້ໃນຄອບຄົວຢ່າງກວ້າງ ຂວາງ ແລະເປັນຜູ້ຊຳນານໃນການຕ່ຳດ້ວຍວິທີ ທີ່ເອີ້ນກັນວ່າ ***ຢຽບເກາະ*** ເປັນລາຍເລຂາ ສັບຊ້ອນ (ຮູບ) ***ສາຍພູ*** ນັບເປັນເອກະລັກຂອງທ້ອງຖິ່ນຢ່າງນຶ່ງ. ບຸນປະເພນີສຳຄັນມີ ***ບຸນປີໃຫມ່, ບຸນກິນຈຽງ, ບຸນຂຶ້ນເຮືອນ*** ແລະ ***ການເຢົາຢາ*** ພາຍໃນຄອບຄົວ.

## 05 ແຂວງບໍ່ແກ້ວ




| | | | |
|---|---|---|---|
| ເນື້ອທີ່ | 4,970 ກມ$^2$ | | |
| ປະຊາກອນ | 141,000 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 50.8% |
| | ມອນ-ຂະແມ | (ລາວເທິງ) | 20.3% |
| | ມົ້ງ-ຢ້າວ | (ລາວສູງ) | 20.2% |
| ທີ່ວ່າການແຂວງ | ເມືອງຫ້ວຍຊາຍ | | |
| ແມ່ນ້ຳສຳຄັນ | ນ້ຳງ້າວ, ນ້ຳທາ | | |
| ແກ້ວປະເສີດ | ແກ້ວດຳ ຫລືນິນ, ແກ້ວແດງ ຫລື ໄພທູນ | | |

***ແຂວງບໍ່ແກ້ວ*** ຕັ້ງຢູ່ແຄມນ້ຳຂອງຝັ່ງຊ້າຍ ມີພື້ນທີ່ຮາບພຽງເລັກນ້ອຍຕາມລ່ອງນ້ຳ, ພື້ນທີ່ສ່ວນໃຫຍ່ເປັນພູພຽງ ແລະ ພູສູງ. ນອກຈາກການເຮັດໄຮ່ປູກເຂົ້າແລ້ວ ປະຊາຊົນໃນແຂວງນີ້ ຍັງມີອາຊີບສຳຮອງອີກຢ່າງໜຶ່ງຄື ***ການຂຸດ*** ແລະ ***ຮ່ອນແກ້ວ*** ຕາມບໍລິເວນແຄມຝັ່ງນ້ຳຂອງ ປະຊາຊົນໃນ***ແຂວງບໍ່ແກ້ວ*** ກໍຄືກັບແຂວງອື່ນໆໃນພາກເໜືອຂອງລາວ ປະກອບດ້ວຍ ຫລາຍຊົນເຜົ່າ ຄື : ***ໄຕ, ລາວ, ລື້, ຍວນ, ກໍ່, ກຸຍ, ລະເມັດ, ຢ້າວ, ແລນແຕນ, ມູເຊີ, ຂະມຸ*** ... ປະຊາຊົນ ຢູ່ເຂດຫ່າງໄກຍັງນຸ່ງກືຕາມປະເພນີ. ສ່ວນໜຶ່ງ ກໍຕ່ຳຫູກ ຜະລິດຜ້າຝ້າຍຊົມໃຊ້ ພາຍໃນຄອບຄົວເອງ. ບຸນປະເພນີສຳຄັນມີບຸນປີໃໝ່ ຫລື ***ກຸດສົງການ, ບຸນເກັບກ່ຽວ*** ແລະ ***ບຸນປະຈຳຄອບຄົວ*** ເຊັ່ນ ***ບຸນຂຶ້ນເຮືອນໃໝ່*** ແລະ ***ການເຢົາຢາ***. ວາດຂັບລຳ ມີ ***ຂັບລື້, ຂັບກໍ່ ຂັບເຕີມ***. ການເດີນທາງໄປ***ເມືອງຫ້ວຍຊາຍ*** ເຮັດໄດ້ຫລາຍວິທີ ເຊັ່ນ ທາງບົກ ແຕ່ ***ຫລວງນ້ຳທາ***, ທາງອາກາດ ແຕ່ ວຽງຈັນ ແລະ ທາງນ້ຳ ແຕ່ ***ຫລວງພະບາງ.***



ຊາກສະຫຼັກຫັກພັງຂອງພະພຸດທະຮູບ
ເມືອງບູຮານ ສຸວັນນະໂຄມຄຳ



ແກ້ວທີ່ມີຄ່າ ຫາໄດ້ໃນແຂວງບໍ່ແກ້ວ



ປະຊາຊົນຮ່ອນແກ້ວລຽບແຄມຝັ່ງນ້ຳ

---

## 06 ແຂວງຫລວງພະບາງ

| | | | |
|---|---|---|---|
| ເນື້ອທີ່ | 16,875 ກ.ມ$^2$ | | |
| ປະຊາກອນ | 452,900 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 38% |
| | ມອນ-ຂະແມ | (ລາວເທິງ) | 45.5% |
| | ມົ້ງ-ຢ້າວ | (ລາວສູງ) | 16.5% |

ທີ່ວ່າການແຂວງ ຫລວງພະບາງ

ແມ່ນ້ຳສຳຄັນ ນ້ຳຂອງ, ນ້ຳຄານ, ນ້ຳງາ, ນ້ຳງອຍ, ນ້ຳມັດ, ນ້ຳມີ້, ນ້ຳບາກ, ນ້ຳແຊງ, ນ້ຳເຊືອງ, ນ້ຳອູ.






ວັດຊຽງທອງ ສ້າງຂຶ້ນໃນລະຫວ່າງ ຄ.ສ. 1559 - 1560, ສະໄໝພະເຈົ້າໄຊຍະເຊດຖາທິລາດ



ແຫ່ປູ່ເຍີ ຍ່າເຍີ, ໃນມື້ຂຶ້ນປີໃໝ່ລາວ



ພະບາງ ເປັນພະພຸດທະຮູບຄຳທີ່ເກົ່າແກ່ ຄູ່ບ້ານຄູ່ເມືອງຫຼວງພະບາງ. ພະເຈົ້າຟ້າງຸ່ມ ເປັນຜູ້ນຳໄປປະດິດສະຖານໄວ້ເມືອງຊຽງດົງ - ຊຽງທອງ (ຫຼວງພະບາງ) ໃນ ສ.ວ. ທີ 14

***ແຂວງຫລວງພະບາງ*** ມີພື້ນທີ່ອຸດົມໄປດ້ວຍພູຜາປ່າດົງ ແລະ ຫ້ວຍນ້ຳລຳເຊ ຫລາຍສາຍ ອັນເຮັດໃຫ້ແຂວງນີ້ມີທຳມະຊາດງົດງາມ ເຊັ່ນ ***ຖ້ຳ ຜາ ນ້ຳຕົກຕາດ*** ຫລາຍແຫ່ງ. ນອກຈາກ ມີທຳມະຊາດອັນຫນ້າອອນຊອນແລ້ວ ເມືອງເອກຂອງແຂວງ ຄື ຕົວເມືອງ ***ຫລວງພະບາງ*** ນີ້ ອະດີດເຄີຍເປັນລາຊະທານີຢູ່ຫລາຍຮ້ອຍປີ. ເດີມແທ້ ***ຫລວງພະບາງ*** ມີຊື່ວ່າ ***ເມືອງຊວາ***. ຕໍ່ມາ ເມື່ອ ***ຂຸນລໍ*** ເຈົ້າຊີວິດລາວຢູ່ ***ເມືອງກາຫລົງ ຫນອງແສ*** ຫລືໃນພາສາຈີນ ເອີ້ນວ່າ ***ຕາລີຟູ*** ພາໄພ່ພົນເຄື່ອນ ຍ້າຍລົງມາຕັ້ງບ້ານເມືອງຕາມລ່ອງນ້ຳຂອງ ແລະ ຕີເອົາເມືອງນີ້ໄດ້ ຈຶ່ງເອີ້ນວ່າ ***ເມືອງຊຽງທອງ*** ແລ້ວຕັ້ງຂຶ້ນເປັນລາຊະທານີ ຫລື ເມືອງເອກແຫ່ງອານາຈັກ ***ລ້ານຊ້າງ*** ໃນ ຄ.ສ. 757, ມາເຖິງ ຄ.ສ. 1560 ***ເຈົ້າໄຊຍະເຊດຖາ*** ເຫັນວ່າ ***ເມືອງຊຽງທອງ*** ຕັ້ງຢູ່ທີ່ຄັບແຄບ ທັງຢູ່ໃນເສັ້ນທາງທຽວຂອງ ***ພະມ້າ (ມ່ຽນມ້າ)*** ເຊິ່ງກຳລັງເປັນສັດຕູຢູ່ກັບ ***ເມືອງຊຽງທອງ*** ຈຶ່ງເຫັນສົມຄວນຍ້າຍລາຊະທາ ນີລົງມາຢູ່***ວຽງຈັນ*** ເຊິ່ງເປັນເມືອງໃຫຍ່ມີບ່ອນທຳມາຫາກິນກວ້າງຂວາງ. ເນື່ອງຈາກວ່າພະພຸດ ທະຮູບສຳຄັນອົງຫນຶ່ງຄື ***ພະບາງ*** ຍັງຄົງສະຖິດຢູ່ທີ່ ***ຊຽງທອງ***. ເມືອງນີ້ຈຶ່ງເອີ້ນວ່າ ***ນະຄອນ ຫລວງພະບາງ*** ນັບແຕ່ນັ້ນມາ. ***ນະຄອນຫລວງພະບາງ*** ມີບູຮານສະຖານ ແລະ ວັດວາອາຮາມເກົ່າແກ່ ຫລາຍຮ້ອຍປີເຊັ່ນ ***ວັດວິຊຸນ*** ທີ່ສ້າງໃນສະໄຫມ ***ເຈົ້າວິຊຸນລະລາດ*** (ຄ.ສ.1500), ***ວັດຊຽງທອງ, ວັດມະໂນລົມ, ວັດແສນ*** ແລະ ອື່ນໆ. ການຂຸດພົບເຕົາເຜົາ ແລະເຄື່ອງປັ້ນດິນເຜົາທີ່ບ້ານຊ່າງໄຫ ແລະ ເຄື່ອງສັງຄະໂລກ (ເຄື່ອງປັ້ນດິນເຜົາເຄືອບນ້ຳຢາ ແລະແຕ້ມດອກດວງໃສ່) ຢູ່ຫລາຍແຫ່ງ ໃນ ***ແຂວງຫລວງພະບາງ*** ສະແດງວ່າ ***ຫລວງພະບາງ*** ເປັນແຫລ່ງຜະລິດສຳຄັນບ່ອນຫນຶ່ງ ໃນພາກພື້ນນີ້. ສະເຫນ່ອັນຫນຶ່ງຂອງ***ຫລວງພະບາງ*** ແມ່ນເຮືອນກໍ່ດິນຈີ່ສະໄຫມ ***ອານາຈັກຫລວງພະ ບາງ*** ຢູ່ພາຍໃຕ້ອາລັກຂາຂອງ ***ຝຣັ່ງ*** ເມື່ອທ້າຍສະຕະວັດທີ 19, ເຮືອນຊານ ແລະ ທຳໂຮງກໍ່ດ້ວຍດິນຈີ່ ຮູບຊົງປະສົມປະສານແບບ***ຢູໂຣບ*** ແລະ***ອາຊີ*** ໄດ້ກາຍເປັນສັນຍະລັກຂອງ ***ຫລວງພະບາງ***. ປະຊາ ຊົນໃນແຂວງ ***ຫລວງພະບາງ*** ມີຄວາມຊຳນານໃນເລື່ອງສິລະປະວັນນະຄະດີ ເຊັ່ນ ການ ***ເສບດົນ ຕີພື້ນເມືອງ*** ແລະ ***ລະຄອນອີ່ປ໊ອກ.*** ສິລະປະການສະແດງຢ່າງນີ້ ສືບທອດມາແຕ່ສະໄຫມ ***ເຈົ້າຟ້າງຸ່ມ*** ທີ່ນຳເອົານັກເສບ ນາງລະບຳ ນັກຟ້ອນ ແລະ ເຄື່ອງດົນຕີປະເພດມະໂຫລີ ຂຶ້ນມາແຕ່ເມືອງ ***ນະຄອນຫລວງ*** ຫລື ***ກຳປູເຈຍ***. ນອກນີ້ ປະຊາຊົນແຕ່ລະທ້ອງຖິ່ນຍັງມີວາດຂັບລຳຂອງຕົນເຊັ່ນ ***ທຳນອງອ່ານຫນັງສືຜູກ, ຂັບທຸ້ມ, ຂັບສະຫລາມສາມສ້າວ, ຂັບເຈີມເອີ່ຍ, ຂັບເຕີນລ່ອງໂຕກ, ຂັບລື້*** ແລະ ***ຂັບມົ້ງ***. ການຫັດຖະກຳ ເຊັ່ນ ***ການຕ່ຳຜ້າທໍໄຫມ, ການຊ່າງຕີເງິນ ຕີຄຳ ເຮັດໂອ ຂັນງ້າວ ດາບ ຂັນຫມາກປ້ຳກ້ຽງ*** ກໍເປັນມໍລະດົກທີ່ຄົນ ***ແຂວງຫລວງພະບາງ*** ໄດ້ສືບທອດໄວ້ ຢ່າງກວ້າງຂວາງ. ອາຫານພື້ນເມືອງທີ່ມີຊື່ສຽງຂອງ ***ຫລວງພະບາງ*** ມີ: ***ເອາະຫລາມ, ແຈ່ວບອງຫນັງ, ໄຄແຜ່ນ, ນ້ຳປູ, ນ້ຳຜັກ, ສົ້ມໄຂ່ປາບຶກ*** ... ຍ້ອນວ່າມີຫ້ວຍນ້ຳລຳເຊຫລາຍ ຊາວ***ຫລວງພະບາງ*** ຈຶ່ງມີຊີວິດຕິດພັນ ກັບແມ່ນ້ຳ ຊຳນານໃນການເດີນເຮືອ ແລະ ຮູ້ທຳມາຫາກິນກັບນ້ຳ ເຊັ່ນ ***ຮ່ອນຄຳ ຫາປາ ລ່ອງເຮືອ ເຮັດແພໃຫຍ່ຂົນສົ່ງສິນຄ້າ***. ***ຫລວງພະບາງ*** ມີຊື່ສຽງວ່າ ເປັນແຂວງທີ່ມີຫມາກພ້າວມັນ ແລະ ຫລາຍ ທັງມີໄມ້ ***ປ່ອງຫລາຍທີ່ສຸດ*** ໃນປະເທດລາວ.

ປະຊາຊົນແຂວງ***ຫລວງພະບາງ*** ປະກອບດ້ວຍຫລາຍຊົນເຜົ່າ ທີ່ອົບພະຍົບມາຈາກຫລາຍ ທ້ອງກິ່ນ ຄື ***ລາວ, ລື້, ໄທຂາວ, ໄທດໍາ, ໄທແດງ, ໄທຣຸນ, ມົ້ງຂາວ, ຂະມຸຫູ, ຍວນ, ພວນ, ຮອກ, ລະເມັດ, ກະຊັກ, ພູນ້ອຍ, ແທ່ນ*** ... ຍ້ອນມີເອກະລັກຂອງເມືອງບູຮານ ທີ່ມີອາຍຸຍືນຍາວ ເມືອງ***ຫລວງພະບາງ*** ຈຶ່ງໄດ້ຮັບກຽດ ປະກາດເປັນເມືອງມໍລະດົກໂລກເມື່ອປີ ຄ.ສ. 1998 ໂດຍ ***ອົງການສະຫະປະຊາຊາດ ເພື່ອການສຶກສາ ແລະ ວັດທະນະທໍາ*** (ອູຍແນສໂກ) ຫລັງຈາກນັ້ນ ກໍໄດ້ມີການປະກາດຫ້າມ ປ່ຽນແປງ ເຮືອນເກົ່າແກ່ ແລະ ມ້າງອອກ, ລັດໃຫ້ການຄຸ້ມຄອງ ແລະມີຜູ້ຊ່ຽວຊານ ຂອງອົງການໃຫ້ການຊ່ອຍເຫລືອ ດ້ານບູລະນະສ້ອມແປງ ເພື່ອໃຫ້ຕົວເມືອງຄົງຢູ່ໃນສະພາບບູຮານ. ປະຈຸບັນ ຫລວງພະບາງເປັນເມືອງທ່ອງທ່ຽວ ອັນດັບນຶ່ງຂອງລາວ ແລະເປັນເມືອງຫນ້າທ່ຽວທີ່ສຸດແຫ່ງນຶ່ງຂອງພາກພື້ນອາຊີອາຄະເນ.

---

## 07 ແຂວງຫົວພັນ





ທິວທັດ ເມືອງວຽງໄຊ



ຫີນຕັ້ງ, ເມືອງສົບກອງພັນ

| | | | |
|---|---|---|---|
| ເນື້ອທີ່ | 16,500 ກ.ມ.$^2$ | | |
| ປະຊາກອນ | 303,700 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 61 % |
| | ມອນ-ຂະແມ | (ລາວເທີງ) | 18. 5% |
| | ມົ້ງ-ຢ້າວ | (ລາວສູງ) | 20 % |
| | ອື່ນໆ | | 0.5 % |
| ທີ່ວ່າການແຂວງ | ມ. ຊຳເໜືອ | | |
| ແມ່ນ້ຳສຳຄັນ | ນ້ຳຊຳ, ນ້ຳເນີນ, ນ້ຳມ້າ, ນ້ຳແອດ | | |

***ແຂວງຫົວພັນ*** ເປັນດິນແດນປະຫວັດສາດສຳຄັນແຫ່ງໜຶ່ງຂອງປະເທດ ເນື່ອງຈາກທີ່ຕັ້ງທາງດ້ານພູມສາດ. ໃນສະໄໝສົງຄາມຕໍ່ສູ້ກູ້ຊາດ ***ແຂວງຫົວພັນ*** ເປັນຖານທີ່ໝັ້ນຂອງການປະຕິວັດ. ຖ້ຳຜາອັນກວ້າງໃຫຍ່ ແລະ ຫລວງຫລາຍ ຢູ່ ***ເມືອງວຽງໄຊ*** ບໍ່ພຽງແຕ່ເປັນບ່ອນພັກອາໄສອັນປອດໄພຂອງປະຊາຊົນເທົ່ານັ້ນ ແຕ່ຍັງເປັນບ່ອນຕັ້ງໂຮງຈັກໂຮງງານ ແລະ ກອງບັນຊາການຂອງກຳລັງປະຕິວັດອີກ. ພື້ນທີ່ສ່ວນໃຫຍ່ເປັນພູຜາສູງ, ມີຖ້ຳ, ບໍ່ນ້ຳຮ້ອນ ແລະ ໄມ້ຊະນິດຫາຍາກ ເຊັ່ນ ***ໄມ້ໂລ່ງເລ່ງ***. ທີ່ ***ເມືອງຮ້ຽມ*** ບໍ່ນ້ຳຮ້ອນ ມີອຸນຫະພູມສູງເຖິງ 80 ອົງສາ (80 $^{\circ}C$).

ພູມອາກາດໂດຍທົ່ວໄປໜາວເຢັນ ພື້ນທີ່ສ່ວນໜຶ່ງຈຶ່ງປູກຕົ້ນໄມ້ບາງຊະນິດ ບໍ່ໄດ້ ເຊັ່ນ ***ຕົ້ນພ້າວ, ຕົ້ນກ້ວຍ, ຕົ້ນໝາກມ່ວງ, ຕົ້ນໝາກມີ້.*** ນອກນີ້ ***ແຂວງຫົວພັນ*** ຍັງມີບູຮານວັດຖຸຍຸກຫີນໃໝ່ ເຊັ່ນ ***ຫີນຕັ້ງ*** ທີ່ມີອາຍຸ 3000 ປີ ຂຶ້ນເມືອ ສິ່ງນີ້ເປັນສັກຂີພະຍານວ່າ ເຄີຍມີມະນຸດຍຸກຫີນ ດຳລົງຊີວິດຢູ່ໃນບໍລິເວນນີ້.

ປະຊາຊົນ ***ແຂວງຫົວພັນ*** ມີມູນເຊື້ອໃນການປູກມອນປ້ອນໄໝມາແຕ່ບູຮານນະການ, ແມ່ຍິງສ່ວນໃຫຍ່ໃຊ້ແພຂັ້ນເຊີງພັນຫົວໃນລະດູໜາວ ອາດແມ່ນຍ້ອນເຫດນີ້ຈຶ່ງໄດ້ຊື່ວ່າ ***ແຂວງຫົວພັນ.*** ຜ້າຝ້າຍແພໄໝຕ່ຳຈັກດ້ວຍລິງລາຍລະອຽດແລະຍ້ອມດ້ວຍສີທຳມະຊາດ ຂອງຊາວ ***ໄທແດງ ໄທດຳ ໄທຂາວ*** ຈາກແຂວງຫົວພັນ ເປັນຜະລິດພັນຫັດຖະກຳ ທີ່ບໍ່ພຽງແຕ່ສ້າງລາຍ ຮັບໃຫ້ແກ່ຊ່າງຕ່ຳຫູກເທົ່ານັ້ນ ແຕ່ຍັງສ້າງຊື່ສຽງໃຫ້ແກ່ຄົນລາວໂດຍທົ່ວໄປວ່າ ເປັນຊ່າງຕ່ຳ ຫູກສີມືເປັນເລີດ. ປະຊາຊົນແຂວງຫົວພັນ ເຊິ່ງສ່ວນໃຫຍ່ເປັນເຜົ່າໄຕ ຍັງຮັກສາ ແລະ ປະຕິບັດຮີດຄອງບາງຢ່າງຂອງຕົນຢູ່. ວາດຂັບລຳປະຈຳທ້ອງຖິ່ນມີ ***ຂັບຊຳເໜືອ, ຂັບອິລູບ່ຳແນ້*** ແລະ ***ຂັບມົ້ງ.***

## 08 ແຂວງໄຊຍະບູລີ




24 / VII
ຫ້າມຈຳໜ່າຍ



ນ້ຳຕົກຕາດເຈົ່າ

| | | | |
|---|---|---|---|
| ເນື້ອທີ່ | 11,795 ກ.ມ.$^2$ | | |
| ປະຊາກອນ | 362. 200 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 74.2% |
| | ມອນ-ຂະແມ | (ລາວເທິງ) | 16.5% |
| | ມົ້ງ-ຢ້າວ | (ລາວສູງ) | 9.3% |
| ທີ່ວ່າການແຂວງ | ເມືອງໄຊຍະບູລີ | | |
| ແມ່ນ້ຳສຳຄັນ | ນ້ຳແມດ, ນ້ຳເຫືອງ, ນ້ຳງາມ | | |

***ໄຊຍະບູລີ*** ເປັນຫນຶ່ງໃນສອງແຂວງ ທີ່ມີພູມການຕັ້ງຢູ່ຝັ່ງຂວາຂອງນ້ຳຂອງ ດິນແດນສ່ວນນີ້ ເປັນຕົ້ນເຫດໃຫ້ ***ສະຫຍາມ*** ແລະ ***ຝຣັ່ງ*** ເກີດພິພາດກັນ. ໃນປະຫວັດສາດ ***ສະຫຍາມ (ໄທ)*** ແລະ ***ຝຣັ່ງ*** ເຄີຍຍາດແຍ່ງແບ່ງປັນດິນແດນອັນເປັນແຂວງ ***ໄຊຍະບູລີ*** ຮອດສອງເທື່ອ ຄື ເທື່ອທຳອິດໃນ ຄ.ສ. 1903, ***ສະຫຍາມ*** ໄດ້ຍິນຍອມສົ່ງຄືນໃຫ້ ***ລາວ*** ໃນການະວ່າ ເວລານັ້ນ ***ລາວ*** ຢູ່ໃນການ ຄຸ້ມຄອງຂອງ ***ຝຣັ່ງ.*** ເມື່ອ ***ຝຣັ່ງ*** ຕົກເປັນຝ່າຍປະລາໄຊແກ່ ***ເຢຍລະມັນ*** ໃນສົງຄາມໂລກຄັ້ງທີ 2. ລະຫວ່າງ ປີ ຄ.ສ. 1939 -45 ແລະ ***ສະຫຍາມ*** ທີ່ເອົ້າອ້າງ ***ຍີ່ປຸ່ນ*** ຢູ່ໃນທ່າໄດ້ປຽບ ຈຶ່ງທວງການເອົາດິນລາວທີ່ຢູ່ຝັ່ງ ຂວາຄືນອີກຕໍ່ມາ ເມື່ອສົງຄາມໂລກຄັ້ງທີ 2 ຍຸຕິລົງ ໃນປີ 1945 ໂດຍ ***ຍີ່ປຸ່ນ*** ຕົກເປັນຝ່າຍປະລາໄຊ, ***ຝຣັ່ງ*** ຈຶ່ງທວງເອົາດິນລາວ ທາງຝັ່ງຂວານ້ຳຂອງ ຄື ***ແຂວງຈຳປາສັກ*** ແລະ ***ໄຊຍະບູລີ*** ຄືນຈາກ ***ສະຫຍາມ*** ໄດ້ອີກ. ***ໄຊຍະບູລີ*** ເປັນແຂວງທີ່ມີຊ້າງຫລາຍທີ່ສຸດ ໃນປະເທດລາວ, ຄືທີ່ເມືອງຫົງສາ ໄດ້ມີອົງການຮັກສາຄຸ້ມຄອງຊ້າງແຫ່ງດຽວ ໃນ ສ.ປ.ປ.ລາວ ປະຊາຊົນມີຄວາມຊຳນານໃນການຄ້ອງຊ້າງປ່າມາລ້ຽງເຝິກແອບໄວ້ລາກໄມ້. ປ່າໄມ້ໃນ ***ແຂວງໄຊຍະບູລີ*** ສ່ວນຫລາຍເປັນປ່າໄມ້ສັກ.

ຊົນເຜົ່າຕ່າງໆມີ ***ລາວ, ລື້, ຂະມຸຫູ, ໄຜ່, ກຣິ (ຕອງເຫລືອງ), ອີກໍ້, ຢ້າວ***... ວາດອັບລຳ ທ້ອງກິ່ນມີ ***ລຳລ່ອງຮຸ່ງ, ອັບລື້, ອັບເຕີນ, ອັບມົ້ງ*** ...

## 09 ແຂວງຊຽງຂວາງ






ໄຫຫີນຢັ່ງຢາຍໃນລະຫວ່າງ 30 ກ.ມ. ອ້ອມແອ້ມ ເມືອງໂພນສະຫວັນ ຂອງພູພຽງຊຽງຂວາງ, ຍຸກສະໄໝ ຍັງບໍ່ທັນແນ່ຊັດ ອາດແມ່ນປະມານ 300 ປີ ກ່ອນ ຄ.ສ., ໄຫຫີນເຫລົ່ານີ້ ອາດໃຊ້ປະກອບພິທີຝັງສົບ ຫຼື ເປັນອະນຸສາວະລີ ກໍເປັນໄດ້



ຊາກເກັບກູ້ສິ່ງເສດເຫຼືອຈາກລະເບີດ ໃນສົງຄາມ ຕ້ານຈັກກະພັດອາເມຣິກາ ຊຸມປີ 60



ວັດເພຽວັດ, ເມືອງຄູນ

| | |
|---|---|
| ເນື້ອທີ່ | 17,315 ກ.ມ.$^2$ |
| ປະຊາກອນ | 249,000 ຄົນ |
| ຊົນຊາດ | ລາວ-ໄຕ (ລາວລຸ່ມ) 61.3% |
| | ມອນ-ຂະແມ (ລາວເທິງ) 7% |
| | ມົ້ງ-ຢ້າວ (ລາວສູງ) 31.7% |
| ທີ່ວ່າການແຂວງ | ເມືອງແປກ |
| ແມ່ນ້ຳສຳຄັນ | ນ້ຳງື່ມ, ນ້ຳຍວນ, ນ້ຳມັດ, ນ້ຳງິ້ວ |

***ແຂວງຊຽງຂວາງ*** ມີຊື່ມາແຕ່ສະໄຫມບູຮານວ່າ ເມືອງພວນ ແລະຊາວເມືອງນີ້ ກໍມີຊື່ເອີ້ນໃນຫມູ່ຄົນລາວນຳກັນວ່າ ໄທພວນ; ມີຄວາມສຳຄັນທັງໃນດ້ານຍຸດທະສາດການເມືອງ ແລະ ປະຫວັດສາດຍຸກບູຮານ.

ຈອມພູສູງທີ່ສຸດໃນປະເທດລາວແມ່ນ ***ພູເບັ້ຽ*** (2,820 ແມັດ) ຢູ່ໃນ ***ແຂວງຊຽງຂວາງ*** ໃນສະໄຫມສົງຄາມຕໍ່ສູ້ກູ້ຊາດ ພູເບັ້ຽ ແມ່ນຈຸດທີ່ທຸກຝ່າຍຢາກຍຶດຄອງ ເພາະສູງກວ່າຫມູ່. ***ຊຽງຂວາງ*** ແມ່ນເຂດຍາດແຍ່ງຂອງກອງກຳລັງຕ່າງໆ ແລະໄດ້ກາຍເປັນສະໜາມຮົບ ທີ່ກົກກົ້ມລະເບີດໃສ່ຫນັກຫນ່ວງກວ່າຫມູ່ ຄືປະມານ 2.000.000 ໂຕນ (ສອງລ້ານ) ອັນເຮັດໃຫ້ປະຊາຊົນໃນແຂວງ ***ຊຽງຂວາງ*** ຕ້ອງອົບພະຍົບຫນີ ແລະ ຕົວເມືອງ***ຊຽງຂວາງ*** ເອງ ກໍຖືກທຳລາຍຢ່າງບໍ່ເຫລືອເຮືອນຈັກຫລັງ. ເມື່ອສົງຄາມຍຸຕິລົງໃນປີ 1973 ໄທພວນ ຫລື ປະຊາຊົນ ຂອງ ຊຽງຂວາງ ຈຶ່ງພາກັນກັບຕາວຄືນບ້ານ ແລະສ້າງສາບ້ານເມືອງຄືນໃຫມ່.

ເກືອບວ່າ ***ຊຽງຂວາງ*** ມີນ້ຳຫ້ວຍໄຫລຜ່ານຫລາຍສາຍ ແຕ່ຫ້ວຍເຫລົ່ານັ້ນ ມີແລວນ້ຳບໍ່ກວ້າງປານໃດ ຈຶ່ງບໍ່ສາມາດຫຽວເຮືອໄດ້ ທັງພື້ນທີ່ສ່ວນໃຫຍ່ກໍເປັນພູພຽງທົ່ວໂລ້ນທີ່ຢູ່ໃນລະດັບສູງກວ່ານ້ຳທະເລ. ປ່າດົງສ່ວນຫນຶ່ງເປັນປ່າໄມ້ເນື້ອແຂງ ແຕ່ສ່ວນໃຫຍ່ເປັນປ່າແປກ. ***ແຂວງຊຽງຂວາງ*** ມີບໍ່ນ້ຳຮ້ອນທຳມະຊາດຫລາຍບ່ອນເຊັ່ນຢູ່ ***ເມືອງຄຳ*** ແລະ ***ເມືອງຄູນ*** ເປັນຕົ້ນ. ພູມອາກາດໂດຍທົ່ວໄປຫນາວເຢັນ ແລະ ມີລົມພັດຢູ່ຕະຫລອດປີ. ທຳມະຊາດ ***ຊຽງຂວາງ*** ຍາມຕົ້ນລະດູແລ້ງຄືກັບລະດູບານໃຫມ່ປະເທດທີ່ອາກາດອົບອຸ່ນ ຄືມີ ຕົ້ນໄມ້ຫລົ່ນໃບຫມົດ ແລ້ວອອກດອກບານພ້ອມກັນຢູ່ຕາມເປີ້ນພູ. ***ຊຽງຂວາງ*** ເປັນແຂວງດຽວໃນປະເທດລາວ ທີ່ປູກ***ຫມາກຄາຍ ຫມາກຈອງ*** ແລະ ***ຫມາກຫມັ້ນ***ໄດ້. ຕົ້ນໄມ້ຊະນິດນີ້ ຄົນ ***ຝຣັ່ງ*** ໄດ້ນຳມາປູກທົດລອງ ຕັ້ງແຕ່ສະໄຫມພວກເຂົາມາຢູ່ລາວໃຫມ່ໆ. ນອກຈາກເປັນດິນແດນທີ່ມີທຳມະຊາດແປກຕ່າງຫມູ່ແລ້ວ ***ແຂວງຊຽງຂວາງ*** ຍັງມີບູຮານວັດຖຸເກົ່າແກ່ ຫລາຍພັນປີອີກ ຄື ***ໄຫຫີນ*** ຂະຫນາດໃຫຍ່ນ້ອຍຕ່າງກັນ ຈຳນວນຫລາຍຮ້ອຍຫນ່ວຍ ທີ່ວາງຢາຍຢູ່ຕາມທົ່ງພຽງໃກ້ໆ ***ເມືອງແປກ***. ນັກປະຫວັດສາດທັງຫລາຍ ກືວ່າ ***ໄຫຫີນ*** ເຫລົ່ານີ້ ເປັນບູຮານວັດຖຸທີ່ມີຄຸນຄ່າສູງ ຕໍ່ການສຶກສາ ແລະ ເປັນສິ່ງຢັ້ງຢືນວ່າ ***ດິນແດນແຫ່ງນີ້ເຄີຍມີມະນຸດຢູ່ມາຫລາຍພັນປີ ຫລື ແສນປີແລ້ວ***, ຕຳນານພື້ນເມືອງເລົ່າວ່າ ***ໄຫຫີນຍັກເຫລົ່ານີ້ແມ່ນໄຫເຫລົ້າຂອງ ຂຸນເຈືອງ ກະສັດຜູ້ຍິ່ງໃຫຍ່ເຊື້ອຊາດຂອມ ໃນສະໄຫມບູຮານ***.

***ໄທພວນ*** ຫລື ***ໄທຊຽງຂວາງ*** ເຄີຍຜ່ານຊາຕາກຳອັນໂຫດຮ້າຍທົນທຸກທໍລະມານຍ້ອນ ເສິກສົງຄາມ ຕ້ອງອົບພະຍົບຄົວເຮືອນ ແລະ ກືກກວາດໄລ່ຫລາຍເທື່ອຫລາຍທີ ໃຫ້ຫນີຈາກກົ່ນການບ້ານເກີດເມືອງນອນ ນັບແຕ່ກາງສະຕະວັດທີ 18 ເປັນຕົ້ນມາ. ຄວາມບໍ່ສະຫງົບ ພາຍໃນປະເທດ ເຮັດໃຫ້ ***ໄທພວນຊຽງຂວາງ*** ຕ້ອງແບກຫາບພາລະຫນັກ ເຊັ່ນ ໃນບາງຍຸກຕ້ອງເສຽພາສີໃຫ້ທັງທາງ***ອານາຈັກວຽງຈັນ*** ແລະ ***ອານາຈັກອັນນາມ***. ***ໄທພວນຊຽງຂວາງ*** ຈຳນວນຫລາຍພັນຄອບຄົວ ຕົກໄປຢູ່ປະເທດ ***ສະຫຍາມ*** ເຊັ່ນ ທີ່ເມືອງ***ສີສັດຊະນາໄລ, ເມືອງສະລະບຸລີ, ບ້ານຊຽງ (ແຂວງອຸດອນ)*** ເປັນຕົ້ນ.

***ໄທພວນຊຽງຂວາງ*** ມີຄວາມຊຳນານໃນການປູກມອນປ້ອນໄຫມ ມັດຫມີ່ຕີລາຍ ມີຊື່ລືຊາ ບໍ່ຫນ້ອຍຫນ້າຊາວເມືອງອື່ນ ໂດຍສະເພາະການມັດຫມີ່ດ້ວຍໄຫມຍອດເສັ້ນແລບບາງ ແລະ ລາຍນ້ອຍສັບສົນ. ໄທ ***ຊຽງຂວາງ*** ມີນິໄສມັກຕ້ອນຮັບແຂກຄົນ. ເຂົາເຈົ້າມີຄຳເວົ້າປະຈຳທ້ອງກິ່ນວ່າ ***ເວລາມີແຂກມາຢ້ຽມຢາມ ຈະບໍ່ໃຫ້ແຂກລົງເຮືອນມືເປົ່າ***ຄືຕ້ອງມີເຄື່ອງຝາກຂອງຕ້ອນໃສ່ມືໃຫ້ແຂກ. ໄທ ***ຊຽງຂວາງ*** ມີພອນສະຫວັນໃນການຂັບລຳ ຈ່າຍຜະຫຍາກ້ຽວກັນ. ນອກຈາກໄທພວນ ແລະ ເຜົ່າໄຕອື່ນໆແລ້ວ ***ຊຽງຂວາງ*** ເປັນແຂວງທີ່ມີປະຊາຊົນເຜົ່າ ***ມົ້ງ*** ຫລາຍກວ່າຫມູ່. ວາດຂັບລຳທີ່ນິຍົມກັນ ມີ ***ໂອ່ພວນ*** ແລະ ***ຂັບມົ້ງ***.

## 10 ແຂວງວຽງຈັນ








↑ທິວທັດຜາຕັ້ງ ລຽບແມ່ນ້ຳຊອງ

← ທິວທັດທຳມະຊາດຜາຫີນປູນ ລຽບແມ່ນ້ຳຊອງ

| | | | |
|---|---|---|---|
| ເນື້ອທີ່ | 19,990 ກ.ມ.$^2$ | | |
| ປະຊາກອນ | 373,200 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 71.8% |
| | ມອນ-ຂະແມ | (ລາວເທິງ) | 12.8% |
| | ມົ້ງ-ຢ້າວ | (ລາວສູງ) | 15.4% |
| ທີ່ວ່າການແຂວງ | | ໂພນໂຮງ | |
| ແມ່ນ້ຳສຳຄັນ | | ນ້ຳງື່ມ, ນ້ຳລີກ, ນ້ຳຊອງ | |
| ເຂື່ອນໄຟຟ້ານ້ຳງື່ມ | | ສະມັດຖະພາບ150 Mw | |
| ອ່າງນ້ຳງື່ມ | | ການຫາປາ2-4 ໂຕນ/ມື້ | |
| ບໍ່ເກືອ | | ເມືອງທຸລະຄົມ | |

***ແຂວງວຽງຈັນ*** ເປັນແຂວງຕັ້ງໃຫມ່ ເມື່ອ ຄ.ສ. 1986 ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວ ທາງດ້ານເສດຖະກິດ ແລະ ການປົກຄອງຂອງປະເທດ. ພື້ນທີ່ມີທັງຮາບພຽງພູເນີນ ແລະ ຜາສູງ. ບ່ອນຮາບພຽງທີ່ເອີ້ນກັນວ່າ ທົ່ງທຸລະຄົມນັ້ນ ຢູ່ລຽບລ່ອງນ້ຳງື່ມ ແລະ ລາມໄປສຸດລົງທີ່ພູເຂົາຄວາຍ, ດ້ານເຫນືອ ແລະ ທິດຕາເວັນອອກ ແຕ່ສາຍພູພະຂຶ້ນໄປພື້ນ ທີ່ເປັນພູສູງມີຜາຫີນກໍ້າ ແລະ ປ່າດົງດິບອັນເຮັດໃຫ້ ແຂວງວຽງຈັນ ມີທຳມະຊາດຫລາຍແບບ ແລະ ມີຊັບພະຍາກອນ ແຮ່ທາດສຳຄັນຫລາຍຢ່າງ ເຊັ່ນ ***ກ່ານຫີນ*** (ທີ່ບານມອນ), ***ຫີນກາວ, ໂປຕັດ, ຊືນ.***

***ແຂວງວຽງຈັນ*** ເປັນເຂດເສດຖະກິດບ່ອນສຳຄັນຂອງປະເທດ ເພາະກະແສໄຟຟ້າ ຜະລິດຈາກເຂື່ອນນ້ຳງື່ມ ແມ່ນສິນຄ້າຂາອອກອັນສ້າງລາຍຮັບຕົ້ນຕໍໃຫ້ແກ່ ***ສ.ປ.ປ.ລາວ.*** ທົ່ງພຽງ ແລະ ດິນຕາມ ***ລ່ອງນ້ຳງື່ມ*** ແລະ ແມ່ນ້ຳອື່ນໆ ເຮັດໃຫ້ແຂວງວຽງຈັນມີພືດພັນທັນຍາຫານອຸດົມ ສົມບູນຕະຫລອດປີ.

ໃນປະຫວັດສາດ ***ແຂວງວຽງຈັນ*** ແມ່ນເຂດເມືອງເກົ່າທີ່ມີຊື່ວ່າ ເມືອງ***ວຽງຄຳ*** (ປັດຈຸບັນເປັນບ້ານ ຊື່ ***ບ້ານວຽງຄຳ***) ແລະ ***ເມືອງໄຜ່ຫນາມ*** (ຢູ່ໃນເຂດເມືອງເກົ່າ***ປາກກະຍູງ*** ແລະ ***ທຸລະຄົມ***) ດັ່ງມີວັດຖຸບູຮານປາກົດເປັນຫລັກຖານ ຄື : ເສມາຫີນ ຝັງຢູ່ ບ້ານ***ວຽງຄຳ***, ລະບົບຂຸມຄອງເຊິ່ງ ***ເຈົ້າຟ້າງຸ່ມ*** ໃຫ້ກອງທະຫານຂຸດໃນເວລາຍົກກອງທັບມາລ້ອມຕີເອົາເມືອງ ***ວຽງຄຳ*** ແລະ ເມືອງ ***ໄຜ່ຫນາມ.*** ນອກນີ້ປະຊາຊົນໃນບ້ານນີ້ ຍັງພົບຫອກ ແລະ ງ້າວບູຮານ ໃກ້ໆບໍລິເວນເມືອງເກົ່າ, ທີ່ບ້ານນາເຄືອ ເພິ່ນໄດ້ຂຸດພົບສຽນພະພຸດທະຮູບຫີນ ສະໄຫມສະຕະວັດທີ 7-8 ຝັງດິນ ໃນບໍລິເວນແຄມນ້ຳງື່ມ ແລະທີ່ກໍ້າວັງຊ້າງກໍມີພະພຸດທະຮູບຫີນ ຄວັດໃສ່ຜະຫນັງກໍ້າ. ນອກຈາກນີ້ ຍັງມີບູຮານວັດຖຸ ທີ່ສ້າງຂຶ້ນໃນສະໄຫມເຈົ້າ ***ໄຊຍະເຊດຖາ*** ລົງມາຕັ້ງວຽງຈັນ ເປັນເມືອງຫລວງອີກ ຄື ***ພະເຈົ້າອົງຕື້*** ທີ່ເປັນພະພຸດທະຮູບທອງສຳລິດອົງມະຫຶມາ ທີ່ປະດິດສະຖານຢູ່ວັດອົງຕື້ ແຄມຝັ່ງຊ້າຍນ້ຳງື່ມບ້ານພູເຂົາຄຳໃຕ້ເຂື່ອນ.

ເນື່ອງຈາກວ່າ ***ວຽງຈັນ*** ເປັນແຂວງຕັ້ງໃໝ່ ຈຶ່ງມີປະຊາຊົນໂຍກຍ້າຍມາແຕ່ບ່ອນອື່ນ ເຂົ້າມາຕັ້ງຖິ່ນຖານຢູ່ເປັນອັນມາກ. ເດີມແທ້ ປະຊາຊົນເຂດນີ້ ແມ່ນ ***ໄທພວນ*** ຫລື ມັກເອີ້ນກັນວ່າ ***ໄທງື່ມ*** ຄືຄົນທີ່ຢູ່ຕາມລ່ອງນ້ຳງື່ມ ຜູ້ມີຄວາມສາມາດໃນການປູກໝອນ ປ້ອນໄໝ ເຊັ່ນດຽວກັບ ***ໄທພວນ ຊຽງຂວາງ***. ***ແຂວງວຽງຈັນ*** ກໍຄືແຂວງອື່ນໆ ໃນ ***ສ.ປ.ປ.ລາວ*** ມີປະຊາຊົນຫລາຍ ຊົນຊາດຊົນເຜົ່າຢູ່ຮ່ວມກັນ ຄື ***ລາວ, ພວນ, ມົ້ງ, ຂະມຸ, ໄທດຳ, ໄທແດງ***. ວາດຂັບລຳທີ່ມີຊື່ ສຽງແມ່ນ ***ຂັບງື່ມ, ຂັບແມ້ນ*** ແລະ ***ຂັບໄທດຳ***.

---

## 11 ແຂວງບໍລິຄຳໄຊ





ພູຜາມານ



ພະທາດພະບາດໂພນສັນ

| | | | |
|---|---|---|---|
| ເນື້ອທີ່ | 16,470 ກ.ມ.$^2$ | | |
| ປະຊາກອນ | 203,100 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 69% |
| | ມອນ-ຂະແມ | (ລາວເທິງ) | 20.7% |
| | ມົ້ງ-ຢ້າວ | (ລາວສູງ) | 10.3% |
| ທີ່ວ່າການແຂວງ | ມ. ປາກຊັນ | | |
| ແມ່ນ້ຳສຳຄັນ | ນ້ຳຂອງ, ນ້ຳຊັນ, ນ້ຳກະດິງ, ນ້ຳເລີກ, ນ້ຳງຽບ | | |

***ບໍລິຄຳໄຊ*** ເປັນແຂວງໃຫມ່ ທີ່ຕັ້ງຂຶ້ນພາຍຫລັງການສ້າງຕັ້ງ ສ.ປ.ປ.ລາວ ເມື່ອປີ 1975, ເປັນແຂວງຫນຶ່ງທີ່ມີຄວາມສຳຄັນທາງດ້ານຍຸດທະສາດ ເພາະເປັນເຂດກິ່ວ ແຄບກວ່າຫມູ່ ແລະ ກັ້ນສອງປະເທດເພື່ອນບ້ານ ຄື ***ໄທ*** ແລະ ***ຫວຽດນາມ***. ດ້ວຍເສັ້ນທາງເລກທີ 13 ແລະ 18 ທີ່ເຊື່ອມຕໍ່ແຂວງຕ່າງໆແຕ່ເຫນືອຫາໃຕ້ໃສ່ກັນ, ***ແຂວງບໍລິຄຳໄຊ*** ເປັນຈຸດຜ່ານເຄິ່ງກາງທີ່ສຳຄັນ. ຢູ່ໃນແຂວງນີ້ ມີອ່າງເກັບນ້ຳຂະຫນາດໃຫຍ່ສອງອ່າງ ຄື ອ່າງ***ວິລະຊົນສີທອງ*** ຢູ່ບ້ານໄຮ່ປາກງື່ມ ແລະ ອ່າງ***ຢູຣີກາກາຣິນ*** ປາກກະດິງ. ພື້ນທີ່ຮາບພຽງຕາມລ່ອງນ້ຳຂອງ, ນ້ຳຊັນ ແລະ ນ້ຳງຽບ ອຳນວຍໃຫ້ມີເນື້ອທີ່ປູກຝັງເລັກນ້ອຍ. ***ແຂວງບໍລິຄຳໄຊ*** ເປັນເຂດຫນຶ່ງທີ່ເຄີຍມີປ່າດົງດິບ ອຸດົມສົມບູນດ້ວຍສັດປ່າໄມ້ມີຄ່າ ແລະ ພືດເປັນຢາ. ປະຊາຊົນເຜົ່າຕ່າງໆ ມີ : ***ລາວ, ພວນ, ໄຕເມີ້ຍ, ໄຕຍໍ້, ມາກອງ, ມາແລງ, ກະຕາງ, ໂຊະ, ຊ້ວຍ*** ... ວາດຂັບລຳທ້ອງຖິ່ນທີ່ນິຍົມກັນ ຫລາຍແມ່ນ ***ຂັບເມີ້ຍ*** ແລະ ***ລຳຜູ້ໄທ***.

## 12 ແຂວງຄຳມ່ວນ




ທິວທັດຖ້ຳກອງຫຼໍ່



ພະທາດສີໂຄດຕະບອງ
ສ້າງໂດຍພະເຈົ້າສຸມິນ
ທະຣາດ. ປະມານ ສ.ວ.
ທີ 6 ບັນຈຸສາລີຣິກະທາດ
ຂອງພະພຸດທະເຈົ້າ

| | | | |
|---|---|---|---|
| ເນື້ອທີ່ | 16,315 ກ.ມ.$^2$ | | |
| ປະຊາກອນ | 338,200 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 36% |
| | ມອນ-ຂະແມ | (ລາວເທິງ) | 64% |
| | ມົ້ງ-ຢ້າວ | (ລາວສູງ) | 0% |
| ທີ່ວ່າການແຂວງ | ມ. ທ່າແຂກ | | |
| ແມ່ນ້ຳສຳຄັນ | ນ້ຳເທີນ, ເຊບັ້ງໄຟ | | |

***ແຂວງຄຳມ່ວນ*** ມີຄວາມສຳຄັນໃນດ້ານເສດຖະກິດ ດ້ວຍວ່າມີເສັ້ນທາງເລກທີ 12 ເຊື່ອມຕໍ່ປະເທດລາວໃສ່ທະເລ***ຫວຽດນາມ*** ທີ່ ***ເມືອງວິນ***. ນັບວ່າເປັນທາງອອກສູ່ທະເລຂອງ***ລາວ*** ທີ່ສຳຄັນບ່ອນໜຶ່ງ. ຢູ່ແຂວງນີ້ ມີຊົນຊາດ ***ລາວເທິງ*** ຫລາຍເຜົ່າຕ່າງກັບເຜົ່າລາວເທິງທາງພາກເໜືອ ແລະ ບໍ່ມີຢູ່ໃນແຂວງອື່ນ ເຊັ່ນ ***ເຜົ່າມະແລງ, ມາກອງ*** ເປັນຕົ້ນ. ນັກປະຫວັດສາດຄິດວ່າ ແຂວງ***ຄຳມ່ວນ*** ເປັນບ່ອນແບ່ງເຂດການເຄື່ອນທີ່ໂຍກຍ້າຍ ຂອງຊົນຊາດເຜົ່າ ຕ່າງໆໃນລາວ ນັບແຕ່ເຂດນີ້ລົງໄປບໍ່ພົບເຫັນຊົນເຜົ່າ***ມົ້ງ-ຢ້າວ*** ອີກ.

***ແຂວງຄຳມ່ວນ*** ມີບໍ່ແຮ່ທາດສຳຄັນ ເຊັ່ນ ***ບໍ່ກົ່ວ*** ຢູ່ໂພນຕິ້ວ. ພູພຽງນາແປ ແລະ ນາກາຍ ມີປ່າໄມ້ທີ່ມີຄ່າ ເຊັ່ນ ***ໄມ້ແປກ, ໄມ້ເກດສະໜາ*** ແລະ ເປັນແຫລ່ງທີ່ສັດປ່າເດີນທາງຜ່ານ. ໃນປະຫວັດສາດ ***ແຂວງຄຳມ່ວນ*** ເຄີຍເປັນທີ່ຕັ້ງຂອງອານາຈັກໜຶ່ງ ທີ່ເອີ້ນວ່າ ***ໂຄດຕະບູນ*** ປະມານພັນກວ່າປີມາແລ້ວ ດັ່ງມີທາດເກົ່າແກ່ຄືທາດ ***ໂຄດຕະບູນ*** ຫລື ***ໂຄດຕະບອງ*** ປາກົດ ເປັນຫລັກຖານມາຈົນເທົ້າທຸກວັນນີ້.
ຊົນເຜົ່າຕ່າງໆ ໃນແຂວງຄຳມ່ວນ ມີ : ***ຜູ້ໄທ, ລາວ, ໂຊ້, ມາກອງ, ເຈຣີ, ຕຣູຍ, ຕະໂອ້ຍ, ກຣີ*** ຫລື ***ຕອງເຫລືອງ, ກະຕາງ*** ... ວາດຂັບລຳທີ່ນິຍົມແມ່ນ ລຳມະຫາໄຊ ແລະ ຂັບຂອງຊົນເຜົ່າຕ່າງໆ.

---

## 13 ແຂວງສະຫວັນນະເຂດ

| | | | |
|---|---|---|---|
| ເນື້ອທີ່ | 22,080 ກ.ມ.$^2$ | | |
| ປະຊາກອນ | 883,900 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 67% |
| | ມອນ-ຂະແມ | (ລາວເທິງ) | 33% |
| ທີ່ວ່າການແຂວງ | ມ.ຄັນທະບຸລີ | | |
| ແມ່ນ້ຳສຳຄັນ | ເຊຈຳພອນ, ເຊບັ້ງຫຽງ | | |






ພະທາດອິງຮັງ, ສູງ 25 ມ. ຕີນທາດ ກວ້າງ 9 ມ., ສິລະປະລ້ານຊ້າງ ສ້າງເມື່ອ ສ.ວ. ທີ 9



ຂຸດຄົ້ນກະດູກໄດໂນເສົາ ຢູ່ບ້ານ ຕັ່ງຫວາຍ



ສາວເຜົ່າກະຕັງ ໃນມື້ບຸນ

***ສະຫວັນນະເຂດ*** ເປັນແຂວງທີ່ກວ້າງໃຫຍ່ກວ່າຫມູ່ ແລະ ມີປະຊາຊົນຫລາຍທີ່ສຸດໃນ ສ.ປ.ປ.ລາວ ຄືປະມານ 15% ຂອງພົນລະເມືອງລາວທັງຫມົດ. ພື້ນທີ່ສ່ວນໃຫຍ່ຮາບພຽງແຕ່ທິດຕາເວັນຕົກລາມຈາກລ່ອງນ້ຳຂອງ ໄປຮອດສາຍພູຫລວງທາງທິດຕາເວັນອອກມີທາງເລກ ທີ 9 ຕັດອອກຈາກທາງເລກທີ 15 ເບັ່ງຜ່ານທົ່ງພຽງ***ສະຫວັນນະເຂດ*** ອອກສູ່ທະເລທີ່ເມືອງ ***ດົງຮ່າ*** ໃນຫວຽດນາມ. ທ່າເຮືອແກ້ງກະເບົາ ເປັນທ່າເຮືອຂະຫນາດໃຫຍ່ໃນນ້ຳຂອງ ທີ່ອຳນວຍໃຫ້ການຄົມມະນາຄົມຂົນ ສົ່ງແຕ່ ***ໄທ*** ຜ່ານ ***ລາວ*** ຫາ ***ຫວຽດນາມ*** ສະດວກຂຶ້ນ. ***ສະຫວັນນະເຂດ*** ມີອາກາດຮ້ອນ ແລະ ແຫ້ງແລ້ງ ເນື່ອງຈາກການສູນເສຽປ່າໄມ້ດົງດິບຢ່າງໄວວາ. ຊັບພະຍາກອນທຳມະຊາດມີ ***ບໍ່ທີນກາວ, ບໍ່ຊືນ, ບໍ່ຄຳ***. ນອກນີ້ ເພິ່ນຍັງພົບຊາກກະດູກສັດບູຮານຄື ***ໂຕກະປອມຫລວງ*** ຫລື ***ໄດໂນເສົາ*** ຢູ່ໃນເຂດບ້ານຕັ່ງຫວາຍ ເມືອງພີນ, ສະຖານທີ່ເກົ່າແກ່ສຳຄັນໃນແຂວງນີ້ ມີ ***ພະທາດອິງຮັງ, ເຮືອນຫີນ*** ...

ປະຊາຊົນຂອງແຂວງນີ້ ສ່ວນໃຫຍ່ແມ່ນຜູ້ໄທ ແລະ ຊົນເຜົ່າລາວເທິງ ຄື ***ບຣູ, ກະເລິງ, ເຢະ, ມາກອງ.*** ວາດຂັບລຳທີ່ນິຍົມ ແລະ ແຜ່ຫລາຍມີ ***ລຳຄອນສະຫວັນ, ລຳຕັ່ງຫວາຍ, ລຳບ້ານຊອກ, ລຳຜູ້ໄທ.***

---

## 14 ແຂວງສາລະວັນ



| | | | |
|---|---|---|---|
| ເນື້ອທີ່ | 10,385 ກ.ມ.$^2$ | | |
| ປະຊາກອນ | 318,000 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 60% |
| | ມອນ-ຂະແມ | (ລາວເທິງ) | 40% |
| ທີ່ວ່າການແຂວງ | ມ. ສາລະວັນ | | |
| ແມ່ນ້ຳສຳຄັນ | ເຊໂດນ, ເຊເສັດ | | |
| ເຂື່ອນໄຟຟ້າ | ຕາດເສັດ : ສະມັດຖະພາບ 45 Mw | | |

***ສາລະວັນ*** ເປັນແຂວງໜຶ່ງ ທີ່ໄດ້ຮັບຄວາມເສຍຫາຍໜັກໜ່ວງ ຈາກໄພສົງຄາມເມື່ອຊາວປີກ່ອນ. ເມື່ອສົງຄາມຍຸຕິລົງ ຊາວສາລະວັນສ່ວນນຶ່ງ ຈຶ່ງເດີນທາງກັບຄືນມາສ້າງບ້ານແປງເຮືອນ, ເວົ້າໄດ້ວ່າ ***ສາລະວັນ*** ເປັນແຂວງໃຫມ່. ພື້ນທີ່ທາງທິດຕາເວັນຕົກຕາມລ່ອງນ້ຳຂອງ ຮາບພຽງຈອດຕໍ່ໃສ່ພູພຽງ ***ຕະໂອ້ຍ*** ແລະ ພູພຽງ***ບໍລະເວນ*** ເຊິ່ງເປັນສາຍພູໄຟເກົ່າ ຂອບດ້ວຍສາຍພູຫລວງ ທາງທິດຕາເວັນອອກ. ***ແຂວງສາລະວັນ*** ມີຊື່ສຽງວ່າ ເປັນເຂດທີ່ມີ***ປ່າດົງດິບອຸດົມສົມບູນກວ່າຫມູ່*** ແລະ ມີສັດປ່າຊະນິດໃຫຍ່ ແລະ ຫາຍາກ ເຊັ່ນ ***ງົວບາ, ເມີຍ, ຫມີ.*** ເນື່ອງຈາກ



ເຮືອນຊົນເຜົ່າຕະໂອ້ຍ



ດອກຫາງ



ຕາດຫາງ

ເຂດພູພຽງເປັນດິນພູໄຟເກົ່າ ແລະ ຢູ່ໃນລະດັບສູງ ເຫນືອນ້ຳທະເລເກີງ 1.000 ກວ່າແມັດ ຈຶ່ງປູກພືດບາງຊະນິດ ໄດ້ດີກວ່າບ່ອນອື່ນໆ ເຊັ່ນ ***ກາເຟ, ຫມາກແຫນ່ງ, ທຸລຽນ***.

ໃນປີ 1991 ລັດຖະບານແຫ່ງ ***ສ.ປ.ປ.ລາວ*** ໄດ້ສ້າງເຂື່ອນໄຟຟ້ານ້ຳຕົກ ທີ່ມີສະມັດຖະພາບການຜະລິດໃນລະດູຝົນ 45 Mw ໃສ່***ເຊເສັດ*** ອັນເປັນສາຂາຂອງ***ເຊໂດນ***. ພະລັງງານໄຟຟ້າ ດັ່ງກ່າວສົ່ງຕໍ່ໄປຍັງແຂວງໃກ້ຄຽງ ແລະ ຂາຍເປັນສິນຄ້າຂາອອກ. ***ສາລະວັນ*** ເປັນແດນດິນ ທີ່ມີທຳມະຊາດພູຜາ ແລະ ນ້ຳຕົກຫລາຍແຫ່ງ. ວາດຂັບລຳທີ່ນິຍົມຫລາຍມີ ***ລຳສາລະວັນ, ລຳຕັ່ງຫວາຍ***. ບຸນປະເພນີມີ ***ບຸນປີໃຫມ່*** ແລະ ***ບຸນກູ້ເຜືອກ ກູ້ມັນ*** ຂອງຊົນເຜົ່າ.

---

**15 ແຂວງເຊກອງ**




| | | |
|---|---|---|
| ເນື້ອທີ່ | 7,665 ກ.ມ.$^2$ | |
| ປະຊາກອນ | 79,700 ຄົນ | |
| ຊົນຊາດ | ລາວ-ໄຕ (ລາວລຸ່ມ) | 25% |
| | ມອນ-ຂະແມ (ລາວເທິງ) | 75% |
| ທີ່ວ່າການແຂວງ | ມ.ລະມາມ | |
| ແມ່ນ້ຳສຳຄັນ | ເຊກອງ | |



ໝາກກາເຟ ຫຼັງຈາກເກັບກູ້ແລ້ວນຳມາຕາກແດດ

***ເຊກອງ*** ເປັນແຂວງຕັ້ງໃຫມ່ເມື່ອປີ ຄ.ສ. 1985 ເປັນແຂວງນ້ອຍອັນດັບທີສອງ ຮອງຈາກ ***ແຂວງບໍ່ແກ້ວ*** ແລະ ມີພົນລະເມືອງຫນ້ອຍກວ່າຫມູ່. ແຕ່ກ່ອນເປັນສ່ວນຫນຶ່ງຂອງແຂວງ ທີ່ເອີ້ນວ່າ ***ແຂວງຕາເວັນອອກ*** ຊຶ່ງກວມເອົາແຂວງ***ສາລະວັນ*** ສ່ວນຫນຶ່ງ. ພື້ນທີ່ສ່ວນໃຫຍ່ ເປັນພູພຽງແລະພູສູງ. ພູພຽງ***ກະເສັງ*** ແລະ ***ຈະວານ*** ເຄີຍເປັນສະຫນາມຮົບ ແລະເສັ້ນທາງ ລຳລຽງຂອງກອງທັບປົດປ່ອຍ, ເສັ້ນທາງ ***ໂຮຈິມິນ*** ຕັດຜ່ານໃນສະໄຫມສົງຄາມກູ້ຊາດ ລະຫວ່າງຊຸມປີ 60-70, ດັ່ງນັ້ນ ຕາມທ້ອງກົ່ນດິນພູ ຈຶ່ງເຕັມໄປດ້ວຍຂຸມລະເບີດຕົກຄ້າງ ບໍ່ທັນແຕກ, ຊາກລົດກົງ.
ພູມອາກາດໃນເຂດພູພຽງ ຊຸ່ມເຢັນ ແລະ ມີຝົນຝອຍເກືອບຕະຫລອດປີ. ເຂດນີ້ປົກຫຸ້ມດ້ວຍ ປ່າແປກ, ເນື້ອດິນເຫມາະກັບການປູກກາເຟ. ປ່າໄມ້ໃຫຍ່ ແລະ ດົງດິບ ມີເຜິ້ງຫລາຍ, ແຕ່ລະປີປະຊາຊົນໃນ***ແຂວງເຊກອງ*** ສາມາດຫານ້ຳເຜິ້ງທຳມະຊາດມາຂາຍ ເພື່ອສ້າງລາຍຮັບຕື່ມ ໃຫ້ແກ່ຄອບຄົວ, ດິນຮາບພຽງເພື່ອເຮັດນາປູກເຂົ້າບໍ່ພຽງພໍ ປະຊາຊົນສ່ວນຫນຶ່ງຈຶ່ງເຮັດໄຮ່ ຕາມເປີ້ນພູ.

ປະຊາຊົນໃນແຂວງນີ້ ສ່ວນໃຫຍ່ແມ່ນຊົນຊາດລາວເທິງ ຊຶ່ງມີເຜົ່າ ***ອາລັກ, ຕະລຽງ, ລະແວ, ກະເສັງ, ຍ່າເຫີນ***... ທີ່ດຳລົງຊີວິດຢູ່ແບບທຳມະຊາດ. ຂໍ້ມູນສະຖິຕິສະແດງວ່າ ອັດຕາຄົນມີ ເຊື້ອໄຂ້ປ່າໃນແຂວງນີ້ສູງກວ່າຫມູ່ ຄື 52% ແລະ ອາຍຸໄຂຂອງຄົນໂດຍສະເລ່ຽ ຕ່ຳກວ່າຫມູ່ ຄື 35,5 ປີ ເທົ່ານັ້ນ. ບຸນປະເພນີທີ່ສຳຄັນ ມີ ***ບຸນກິນຄວາຍ*** ຫລື ***ໂດນລະ*** ທີ່ເຮັດໃນລະຫວ່າງເດືອນສາມຫາ ເດືອນສີ່ເພັງທຸກໆສາມປີ, ນອກນີ້ ກໍມີບຸນ***ຮູດເຂົ້າ*** ຫລື ***ປີໃຫມ່*** ແລະ ***ສັກເຂົ້າ***.

## 16 ແຂວງຈຳປາສັກ




| | | | |
|---|---|---|---|
| ເນື້ອທີ່ | 15,415 ກ.ມ.$^2$ | | |
| ປະຊາກອນ | 622,400 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 85% |
| | ມອນ-ຂະແມ | (ລາວເທິງ) | 15% |
| ທີ່ວ່າການແຂວງ | ມ. ປາກເຊ | | |
| ແມ່ນ້ຳສຳຄັນ | ເຊໂດນ, ນ້ຳຂອງ | | |
| ບູຮານວັດຖຸ | ຜາສາດຫີນວັດພູ | | |

***ຈຳປາສັກ*** ແມ່ນນຶ່ງໃນສອງແຂວງ ທີ່ຢູ່ທາງຝັ່ງຂວາຂອງແມ່ນ້ຳຂອງ, ມີປະຊາຊົນຫລາຍເປັນອັນດັບທີສາມ. ແຂວງຈຳປາສັກ ເປັນດິນແດນແຫ່ງປະຫວັດສາດຂອງຊົນຊາດ ***ຂອມ*** ຫລື ຂະເໝນບູຮານ ຊຶ່ງມີອຳນາດລາມຂຶ້ນມາພາກເໜືອ ລະຫວ່າງຄຣິດຕະສະຕະວັດທີ 4-9. ເມື່ອຊົນຊາດຂອມເລີ່ມເສື່ອມອຳນາດລົງ ລະຫວ່າງ ຄຣິດຕະສະຕະວັດທີ 10-12, ຊົນຊາດລາວ ທີ່ເຄື່ອນຍ້າຍ



ໂຮງຊາວ ເບື້ອງເໜືອ, ກໍ່ດ້ວຍຫີນຊາຍ ແລະ ຫີນໝາມໜໍ່ ສ່ວນໜຶ່ງຂອງຜາສາດຫີນວັດ ພູຈຳປາສັກ ເປັນສະຖາປັດຕະຍະກຳເກົ່າ ແກ່ຂອງຂອມ. ສ້າງຂຶ້ນໃນ ສ.ວ. ທີ 11.



ຮູບຄວັດຫີນ ພະສິວະ, ພະວິສະນຸ ແລະ ພະພົມ, ໃກ້ກັບເທວະໄລ ຜາສາດປະທານ (ຜາສາດຫີນວັດພູຈຳປາສັກ)



ພູອາສາ



ນ້ຳຕົກຄອນພະເພັງ ເປັນນ້ຳຕົກທີ່ໃຫຍ່ ແລະ ສວຍງາມທີ່ສຸດໃນອາຊີ ຕາເວັນອອກສ່ຽງໃຕ້

ມາຈາກພາກໃຕ້ຂອງຈີນໄດ້ເຕົ້າໂຮມກັນ ແລະເຂົ້າຢູ່ຮ່ວມກັບ***ຊາວຂອມ*** ພາຍຫລັງ***ເຈົ້າຟ້າງຸ່ມ*** ໃຊ້ກຳລັງທະຫານເຕົ້າໂຮມແຜ່ນດິນ ທີ່ມີຊົນຊາດລາວອາໄສຢູ່ ໃຫ້ເປັນອັນນຶ່ງອັນດຽວກັນ, ***ອານາຈັກຈາມປາ*** ຫລື ***ຈຳປາສັກ*** ກໍມີຊື່ເປັນເຂດແຂວງຫນຶ່ງຂອງ ***ອານາຈັກລ້ານຊ້າງ*** ຈົນມາຮອດສະໄຫມ ***ອານາຈັກລ້ານຊ້າງ*** ແຕກແຍກກັນໃນຕົ້ນຄຣິດຕະສະຕະວັດທີ18, ຈຳປາສັກ ກໍຕົກໄປຢູ່ພາຍໃຕ້ການປົກຄອງຂອງ***ສະຫຍາມ*** ຄືກັບ***ວຽງຈັນ*** ແລະ ***ຫລວງພະບາງ***. ເມື່ອ***ຝຣັ່ງ*** ເຂົ້າມາເອົາລາວເປັນຫົວເມືອງຂຶ້ນ ຈຶ່ງເກີດການຍາດແຍ່ງດິນແດນກັບ***ສະຫຍາມ***. ແຕ່ນັ້ນມາ ***ຈຳປາສັກ*** ກໍມີປະຫວັດສາດຄ້າຍຄືກັບ ***ແຂວງໄຊຍະບູລີ***ຄືຖືກຍຶກໃຫ້ເປັນຂອງ***ສະຫຍາມ***ລະຍະຫນຶ່ງ ແລ້ວກັບມາຢູ່ພາຍໃຕ້ການອາລັກຂາຂອງຝຣັ່ງ ຕາມ ການປ່ຽນແປງຂອງເຫດການ.

ພື້ນທີ່ເບື້ອງທິດຕາເວັນຕົກຂອງ ***ແຂວງຈຳປາສັກ*** ເປັນທົ່ງພຽງລ່ອງລຽບຕາມສອງຝັ່ງແມ່ນ້ຳຂອງ, ທົ່ງນາກວ້າງຂວາງໃນເຂດນີ້ ເຮັດໃຫ້ ***ຈຳປາສັກ*** ເປັນອູ່ເຂົ້າອູ່ປາ ເປັນດິນແດນທີ່ອຸດົມສົມບູນກວ່າຫມູ່ ໃນ ***ສ.ປ.ປ.ລາວ***, ພູພຽງ***ບໍລະເວນ*** ຊຶ່ງມີລະດັບສູງກວ່າທະເລປະມານ 1.000 ກວ່າແມັດ ເປັນດິນເກົ່າພູໄຟເກົ່າ ເຮັດໃຫ້ສາມາດປູກຫມາກໄມ້ ແລະຜັກບາງຢ່າງ ໄດ້ດີ ເຊັ່ນ ກາເຟ, ຫມາກສະເວີ່, ມັນຝຣັ່ງ, ກະລໍ່າປີ, ກາລົດ, ຫົວຜັກບົ່ວໃຫຍ່. . .

***ຈຳປາສັກ***ເປັນແຂວງໃຕ້ສຸດຂອງລາວ ມີເກາະດອນຫລາຍກວ່າຫມູ່, ***ເມືອງໂຂງ***ເປັນເມືອງ ກາງດອນ ມີຊື່ໃນບາງເອກະສານບາງສະໄຫມວ່າ ເມືອງສີ່ພັນດອນແລະສະໄຫມຂຶ້ນຕໍ່ ***ສະຫຍາມ*** ມີຊື່ວ່າ ***ສີທັນດອນ***ອັນຫມາຍເຖິງແຜ່ນດິນທີ່ຢູ່ລະຫວ່າງນ້ຳນັ້ນເອງ. ເຂດຊາຍແດນ ທາງໃຕ້ສຸດລົງດ້ວຍແກ້ງໃຫຍ່ ຫລື ***ລີ່ຜີ***ອັນເປັນແກ້ງທີ່ງົດງາມກວ້າງໃຫຍ່ອັນດັບນຶ່ງ ໃນອາຊີຕາເວັນອອກສຽງໃຕ້. ແກ້ງນີ້ມີລະຍະນ້ຳໂຕນຕາດຍາວຕິດຕໍ່ກັນຫລາຍກິໂລແມັດ ລະດັບນ້ຳໂຕນ ສູງນັບແຕ່ດອນໂຂງລົງໄປ 200-300 ແມັດ ສຽງສຽງດັງກັງວານ ໄດ້ຍິນກ້ອງໄປໄກ. ນັບເປັນບ່ອນ ງົດງາມຍິ່ງໃຫຍ່ແຫ່ງນຶ່ງ ໃນ ***ປະເທດລາວ***. ນອກຈາກມີທຳມະຊາດຫລາຍຮູບຫລາຍຊົງແລ້ວ ***ແຂວງຈຳປາສັກ*** ຍັງມີຜາສາດຫີນທີ່ເອີ້ນກັນຕິດປາກວ່າ ***ວັດພູຈຳປາສັກ***. ໃນຕຳນານບູຮານ ***ວັດພູ*** ມີຊື່ວ່າ ***ຜາສາດລິງຄະປະວະຣະຕະ*** ອັນເປັນຊື່ໃນພາສາ ***ສັນສະກຣິດ*** ຕັ້ງໂດຍເຈົ້າຊີວິດຊົນຊາດຂອມ. ຫໍຜາສາດມີນຳກັນຫລາຍຫລັງ ຢັງຢາຍແຕ່ຕີນພູຂຶ້ນໄປຕາມເປີ້ນພູ ໂດຍມີຂັ້ນໄດປູລາດດ້ວຍຫີນ ກ້ອນໃຫຍ່ເປັນຊັ້ນໆ ເຊິ່ງກໍ່ດ້ວຍກ້ອນຫີນຕັດຂະຫນາດຕ່າງໆ ນັບແຕ່ເທົ່າກ້ອນດິນຈີ່ໄປຫາຂະຫນາດ ນຶ່ງແມັດກ້ອນ. ແຕ່ລະກ້ອນຄວັດເປັນລວດລາຍຕາມເລື່ອງຂອງສາສະຫນາພາມ ຄືມີຮູບພະເຈົ້າອົງສຳຄັນໃນສາສະຫນານີ້ ເຊັ່ນ ***ພະສີວະ, ພະນາຣາຍ, ພະວິດສະນຸ, ນາງຟ້າ*** ຫລື ***ນາງອັບປະສອນ***... ນັກປະຫວັດສາດ ແລະ ຜູ້ຊ່ຽວຊານດ້ານວັດຖຸບູຮານ ມີຄວາມເຫັນວ່າ ຜາສາດຫີນຫລັງນີ້ ສ້າງຂຶ້ນໃນລະຫວ່າງ ພ.ສ. 1200 (ຫລື ຄ.ສ.700) ແລະມີການເສີມສ້າງຕິດຕໍ່ ມາເລື້ອຍໆ ແຕ່ໄດ້ເພພັງຫັກໂຄ່ນລົງ ແລະ ຖືກໄຟໄຫມ້, ມາເຖິງ ຄ.ສ. 1989 ລັດຖະບານແຫ່ງ ***ສ.ປ.ປ.ລາວ*** ໄດ້ລົງມືບູລະນະຮັກສາ ໂດຍການຮ່ວມມື

ແລະ ຊ່ອຍເຫລືອຈາກອົງການສາກົນ ກັບປະເທດເພື່ອນມິດ ແລະ ໃນປີ 2003 ຜາສາດຫີນວັດພູ ກໍຖືກປະກາດເປັນມໍລະດົກໂລກ ໂດຍ ອົງການສະຫະປະຊາຊາດ ເພື່ອວັດທະນະທຳ ແລະການສຶກສາ ຫລື ອູຍແນສໂກ. ນັບເປັນແຫ່ງທີສອງ ໃນສ.ປ.ປ.ລາວ.

ບຸນປະເພນີສຳຄັນຂອງແຂວງແມ່ນ ບຸນໄຫວ້ວັດພູ ຊຶ່ງຈັດຂຶ້ນໃນມື້ເດືອນສາມເພັງທຸກໆປີ. ໃນໂອກາດນີ້ ປະຊາຊົນຈາກທ້ອງຖິ່ນແຂວງອ້ອມຂ້າງຕ່າງກໍຫລັ່ງໄຫລມາຮ່ວມບຸນນີ້ ແລະ ນຳເອົານ້ຳທ່ຽງເມືອກິນ. ນ້ຳນີ້ໄຫລອອກຈາກຫລືບຜາດ້ານຫລັງ ເທິງທຳໄຫວ້ຊັ້ນເທິງ ໂດຍເຊື່ອວ່ານ້ຳນັ້ນ ເປັນນ້ຳວິເສດ ສາມາດເຢົາຢາພະຍາດບາງຢ່າງໄດ້. ວາດອັບລຳທີ່ມີຊື່ສຽງມີ ***ລຳໂສມ, ລຳສີທັນດອນ.***

---

## 17 ແຂວງອັດຕະປື




| | | | |
|---|---|---|---|
| ເນື້ອທີ່ | 10,320 ກ.ມ.$^2$ | | |
| ປະຊາກອນ | 108,300 ຄົນ | | |
| ຊົນຊາດ | ລາວ-ໄຕ | (ລາວລຸ່ມ) | 40% |
| | ມອນ-ຂະແມ | (ລາວເທິງ) | 60% |
| ທີ່ວ່າການແຂວງ | ມ. ໄຊເຊດຖາ | | |
| ແມ່ນ້ຳສຳຄັນ | ເຊກອງ, ເຊກະໜານ | | |

***ອັດຕະປື*** ເປັນແຂວງໃຕ້ສຸດທາງທິດຕາເວັນອອກຂອງ ***ສ.ປ.ປ.ລາວ***, ມີຊາຍແດນຕິດກັບ ***ກຳປູເຈຍ*** ແລະ ***ຫວຽດນາມ***. ພື້ນທີ່ສ່ວນໃຫຍ່ເປັນທົ່ງ ແລະ ພູພຽງ ເຊັ່ນ ***ພູພຽງລະແວ*** ທີ່ປົກຫຸ້ມດ້ວຍປ່າໃຫຍ່ ດົງຕຶບ, ກືວ່າເປັນແຂວງຫນຶ່ງ ທີ່ມີສັດປ່າຂະຫນາດໃຫຍ່ອາໄສຢູ່ ເຊັ່ນ ***ຊ້າງ, ເມີຍ, ເສືອ, ຫມີ, ງົວບາ, ຟານ, ກວາງ*** ເປັນຕົ້ນ. ຢູ່ໃນ***ເຊກອງ*** ທີ່ເປັນສາຂາແມ່ນ້ຳຂອງ ມີ ***ປາຂ່າ*** ອາໄສຢູ່. ປະຊາຊົນໃນ***ແຂວງອັດຕະປື***ມີຄວາມຊຳນານໃນເລື່ອງປັ່ນບ້າງ ຮ່ອນຄຳ ໄວ້ແລກປ່ຽນ ຈົນມີຄຳຜະຫຍາເວົ້າແຜ່ຫລາຍໃນສະໄຫມກ່ອນວ່າ ***ອັດຕະປືປົ້ງ ຂາຍຄຳແລກໄກ່ ສາລະວັນຂີ້ໄຮ້ ຂາຍຊ້າງແລກກະບອງ.*** ຍ້ອນເປັນແຂວງສຸດຊາຍແດນ ***ອັດຕະປື*** ຈຶ່ງມີບົດບາດສຳຄັນໃນປະຫວັດສາດ ຄືໃນສະໄຫມ ທີ່ ***ເຈົ້າຟ້າງຸ່ມ*** ກືກເອົາລ່ອງເຮືອມາແຕ່ ***ເມືອງຊວາ*** ກໍໄດ້ມາຕົກຄ້າງຢູ່ໃນທ້ອງກິ່ນນີ້ ເຊິ່ງເວລານັ້ນຢູ່ໃນອິດທິພົນຂອງ ***ຂະເຫມນ. ຂໍ້ມູນທາງປະຫວັດສາດຫລາຍຢ່າງສະແດງວ່າ ພຣະເຈົ້າໄຊຍະເຊດຖາ*** ໄດ້ມາສ້ຽງຊີວິດຢູ່ໃນ ***ແຂວງອັດຕະປື*** ເມື່ອຍົກກອງທັບມາຕີ ***ເມືອງອົງການ (ອົງກໍ)***. ປະຊາຊົນຊາວເມືອງໄດ້ສ້າງທາດໃສ່ດູກຂອງພະອົງໄວ້ ແລະເອີ້ນວ່າ ***ທາດພະໄຊ*** ຈົນເທົ້າທຸກວັນນີ້. ໃນສະໄຫມສົງຄາມກູ້ຊາດ ***ອັດຕະປື*** ເປັນແຂວງຫນຶ່ງທີ່ໄດ້ຮັບຄວາມເສຽຫາຍຢ່າງຫນັກຫນ່ວງຈາກການກົ້ມລະເບີດ.

24 / VII



ການດູດເຫຼົ້າໄຫ ຂອງປະຊາຊົນພື້ນເມືອງ



ທາດພະໄຊເຊດຖາ

ປະຊາຊົນໃນແຂວງອັດຕະປື ສ່ວນໃຫຍ່ເປັນຊົນເຜົ່າລາວເທິງ ຄື ເຜົ່າ ***ລະແວ, ຈຽງ, ອາລັກ, ຍ່າເຫີນ, ກະເສງ, ສະດາງ***ທີ່ຍັງດຳລົງຊີວິດຕາມທຳມະຊາດ ແລະ ຮັກສາປະເພນີບາງອັນໄວ້ເຊັ່ນ ***ຮູບຊົງເຮືອນ, ການຈັກສານ, ພາສາ, ຮີດຄອງ, ການແຕ່ງດອງ, ການເຢົາຢາຄົນເຈັບ*** ດ້ວຍການຂ້າສັດ ເຊັ່ນ ໄກ່, ຫມູ, ຄວາຍ ລ້ຽງຜີ. ຊົນເຜົ່າລາວເທິງໃນເຂດນີ້ ກໍຄື ໃນແຂວງອື່ນ ມີຄວາມຊຳນານໃນເລື່ອງຈັກສານ ເຮັດເຄື່ອງມືໂຫ່ເນື້ອຫາປາ ເຄື່ອງໃຊ້ໃນການປູກຝັງ ແລະເຄື່ອງໃຊ້ໃນຄົວເຮືອນເອງ ເຊັ່ນ ***ຈຳພວກເປົ້, ກະຕິບ, ກະຍັງ, ກະບຸງ, ກະຕ່າ*** ດ້ວຍຫວາຍ. ຊົນເຜົ່ານີ້ ຮູ້ຈັກຫລໍ່ຄ້ອງ ຕີຄ້ອງ ດ້ວຍໂລຫະປະສົມ ແລະ ເຮັດໄຫດິນໃສ່ເຫລົ້າ. ແມ່ຍິງບາງຊົນເຜົ່າຕ່ຳຫູກດ້ວຍກີ່ແອວ ເຮັດເຄື່ອງນຸ່ງຫົ່ມ ເຊັ່ນ ***ກະຕ່ຽວ ຜ້າຫົ່ມ ສົ້ນໂລ່ມ ຜ້າກະໂດ*** ເປັນຕົ້ນ. ບັນຫາການເຈັບປ່ວຍດ້ວຍໄຂ້ປ່າ ຍັງຫນັກຫນ່ວງ. ໃນກໍລະນີມີຄົນເສຽຊີວິດຫລາຍ ເຊື່ອວ່າເປັນຍ້ອນຜີ ປະຊາຊົນຈະພາກັນອົບພະຍົບໄປຊອກບ່ອນຕັ້ງບ້ານໃຫມ່.

---

## 18 ເຂດພິເສດໄຊສົມບູນ




| | |
|---|---|
| ເນື້ອທີ່ | 4,940 ກ.ມ.$^2$ |
| ປະຊາກອນ | 49,600 ຄົນ |
| ຊົນເຜົ່າ | ລາວ-ໄຕ |
| | ມົ້ງ-ຢ້າວ (ລາວສູງ) |



ສາວເຜົ່າມົ້ງ



ຖ້ຳເຈົ້າອານຸ



ທິວທັດເຂດພິເສດ ໄຊສົມບູນ

# ເລັກໆນ້ອຍໆກ່ຽວກັບພາສາລາວ

ໂດຍ : ໂອທອງ ຄຳອິນຊູ

## ພາສາແມ່ນຫຍັງ ?

ພາສາ ແມ່ນພາຫະນະສຳລັບຕິດຕໍ່ພົວພັນ ລະຫວ່າງຄົນກັບຄົນ ແມ່ນລະບົບສັນຍານ ທີ່ໃຊ້ສັນຍານສຽງເປັນຕົ້ນຕໍ ແລະໃຊ້ສັນຍານອື່ນ ເຊັ່ນ: ເສັ້ນ, ຮູບພາບ, ສີ... ເພື່ອສ້າງ ຄວາມເຂົ້າໃຈ ແລະ ສະແດງຄວາມຮູ້ສຶກນຶກຄິດຂອງຄົນ.

ພາສາທີ່ນິຍົມໃຊ້ກັນໃນສັງຄົມ ມີສອງແບບຄື ພາສາເວົ້າ ແລະ ພາສາຂຽນ.

### *ພາສາເວົ້າ:*

ຫມາຍເຖິງ ການສະແດງຄວາມໃນໃຈ ດ້ວຍການໃຊ້ສຽງ ເພື່ອໃຫ້ອີກຝ່າຍຫນຶ່ງໄດ້ຍິນແຕ່ສຽງທີ່ເວົ້າອອກມານັ້ນ ມີລະບຽບ ແລະ ມີຄວາມຫມາຍເຂົ້າໃຈກັນໄດ້.

### *ພາສາຂຽນ:*

ຫມາຍເຖິງການສະແດງຄວາມຮູ້ສຶກນຶກຄິດ ໃຫ້ອີກຝ່າຍຫນຶ່ງເຂົ້າໃຈ ດ້ວຍການຂີດຂຽນເຄື່ອງຫມາຍ ຫລື ເອີ້ນວ່າ ຕົວຫນັງສື (ຕົວອັກສອນ) ພາສາຂຽນນີ້ແມ່ນເຄື່ອງຫມາຍ ບັນທຶກຈົດກາຍຄຳເວົ້າ.

ພາສາທີ່ໃຊ້ກັນໃນທົ່ວໂລກ ປັດຈຸບັນນີ້ ມີຫລາຍພາສາ ລາງພາສາເປັນທີ່ຮູ້ຈັກກັນຢ່າງກວ້າງຂວາງ ແລະ ນິຍົມໃຊ້ຫລາຍ ແຕ່ລາງພາສາ ກໍບໍ່ນິຍົມໃຊ້ ມີແຕ່ໃຊ້ກັນໃນຊົນຊາດ ທີ່ເປັນເຈົ້າຂອງພາສາເທົ່ານັ້ນ.

### *ລັກສະນະຂອງພາສາລາວ*

ພາສາລາວ ແມ່ນພາສາຫນຶ່ງ ເຊິ່ງເປັນພາສາຄຳໂດດ ສ່ວນຫລາຍເປັນຄຳສັບທີ່ມີພະຍາງດຽວ ເຊັ່ນ : ດິນ, ນົກ, ກິນ, ເມືອງ. . . ເຖິງວ່າ ບາງຄຳສັບຈະມີຫລາຍພະຍາງ ກໍໄດ້ມາ ຈາກການນຳເອົາຄຳສັບພະຍາງດຽວມາປະສົມກັນເຊັ່ນ : ເຮືອນຄົວ, ໂຮງຮຽນ, ເສື້ອກັນ ຫນາວ. . .

ພາສາລາວບໍ່ມີການປ່ຽນແປງຮູບຄຳ ໃນເວລາໃຊ້ ເມື່ອຕ້ອງການຢາກເວົ້າເຖິງສິ່ງໃດ ສິ່ງຫນຶ່ງກໍນຳເອົາຄຳສັບຕ່າງໆທີ່ມີຮູບເດີມ ມາວາງປະກອບກັນເປັນປະໂຫຍກເຊັ່ນ : ຂ້ອຍກິນເຂົ້າ, ຄວາຍຊົນກັນ, ຄູຂຽນຫນັງສືໃສ່ກະດານດຳ. . .

### *ພາສາລາວ ສ່ວນໜຶ່ງໄດ້ເຄົ້າມາຈາກພາສາບາລີ-ສັນສະກິດ*

ເມື່ອສາສະໜາພຸດແຜ່ເຂົ້າມາລາວ ຈຶ່ງໄດ້ມີການແປພະທຳຄຳສອນຕ່າງໆ ທີ່ເປັນພາສາບາລີ-ສັນສະກິດ ເຮັດໃຫ້ພາສາບາລີ-ສັນສະກິດແຊກປົນເຂົ້າມາໃນພາສາລາວ ພາສາລາວຈຶ່ງມີຄຳສັບທີ່ມີເຄົ້າມາຈາກພາສາບາລີ-ສັນສະກິດ ເຊິ່ງເປັນຄຳທີ່ມີຫລາຍພະຍາງ ເຊັ່ນ : ອາຈານ, ບິດາ, ນະຄອນ, ສຸຂະພາບ. . .

### *ພາສາລາວ ຈຳນວນໜຶ່ງຢືມມາຈາກຄຳສັບຕ່າງປະເທດ*

ຄວາມຈະເລີນກ້າວໜ້າທາງດ້ານວິທະຍາສາດ ເຮັດໃຫ້ມີການຕິດຕໍ່ພົວພັນກັນກວ້າງຂວາງຂຶ້ນ ແຕ່ລະປະເທດມີການຕິດຕໍ່ຄ້າຂາຍ ໄດ້ຊົມໃຊ້ຜະລິດຕະພັນຂອງກັນແລະກັນ ມີການ ພົວພັນທາງດ້ານເສດຖະກິດ, ການເມືອງ ເຮັດໃຫ້ພາສາມີການແຊກປົນເຊິ່ງກັນແລະກັນ.

ພາສາລາວ ກໍມີຄຳສັບຈຳນວນໜຶ່ງ ທີ່ຢືມມາຈາກຄຳສັບຕ່າງປະເທດ ເຊັ່ນ : ສິວິໄລ (ອັງກິດ), ທີມ(ອັງກິດ), ເຝີ(ຫວຽດນາມ), ຍີ່ຫໍ້(ຈີນ), ຄາລາໂອເກະ(ຍີ່ປຸ່ນ). . .

### *ຕົວອັກສອນລາວເກືອບເຖິງອະວະສານ*

ເມື່ອເຈົ້າອະນຸວົງ ເສຍໄຊໃຫ້ແກ່ກອງທັບສະຫຍາມ ລາຊະອານາຈັກລາວທັງໝົດ ກໍຕົກເປັນເມືອງຂຶ້ນຂອງສະຫຍາມໂດຍກົງ ຕັ້ງແຕ່ນັ້ນມາ ການປົກຄອງບ້ານເມືອງ ການສຶກສາຮ່ຳຮຽນຂອງປະຊາຊົນ ການປະຕິບັດຮີດຄອງ ແລະ ການຮ່ຳຮຽນໃນທາງພຸດທະສາສະໜາກໍເສື່ອມສູນມາໂດຍລຳດັບ.

ມາເຖິງປີ ຄ.ສ. 1893 ຝຣັ່ງຈຶ່ງເຂົ້າມາຍາດແຍ່ງເອົາແຜ່ນດິນລາວທາງຝັ່ງຊ້າຍ ຂອງແມ່ນ້ຳຂອງຈາກສະຫຍາມ ຝ່າຍສະຫຍາມເຫັນດັ່ງນັ້ນ ຈຶ່ງປະກາດໂຮມເອົາດິນແດນ ພາກອີສານທັງໝົດເຊິ່ງແຕ່ເກົ່າເປັນແຜ່ນດິນລາວ ເຂົ້າເປັນແຜ່ນດິນສະຫຍາມໃນປີ 1899.

ຕັ້ງແຕ່ນັ້ນມາ ຄົນລາວທີ່ຢູ່ທາງຝັ່ງຂວາຂອງແມ່ນ້ຳຂອງ ຈຶ່ງໄດ້ຮຽນໜັງສືໄທ ສ່ວນ ໜັງສືລາວ ແລະໜັງສືທຳນັ້ນ ໃນຂັ້ນຕົ້ນໆກໍມີຜູ້ຮຽນພໍອ່ານອອກຂຽນໄດ້ເມື່ອລັດຖະບານສະຫຍາມໄດ້ຂະຫຍາຍການສຶກສາຂັ້ນໂຮງຮຽນປະຊາບານ ໄປທົ່ວທຸກແຫ່ງແລ້ວ ການສຶກສາ ໂຕລາວ ແລະ ໂຕທຳທີ່ມີຢູ່ໃນວັດ ກໍເສື່ອມກອຍລົງ ຈົນທຸກວັນນີ້ບໍ່ມີແລ້ວ.

ສ່ວນຢູ່ລາວທາງຝັ່ງຊ້າຍແມ່ນ້ຳຂອງ ເມື່ອຝຣັ່ງເຂົ້າມາປົກຄອງແລ້ວ ກໍບໍ່ໄດ້ຟ້າວຟັ່ງ ຈັດການສຶກສາພໍປະມານ ປະຊາຊົນລາວ ບວດຮຽນຂຽນອ່ານ ໜັງສືລາວ ແລະໜັງສືທຳຢູ່ ຕາມວັດ ບ້ານໃຜບ້ານລາວ ຕາມທຳມະຊາດ ຕໍ່ມາເມື່ອທາງການຝຣັ່ງໄດ້ຕັ້ງໂຮງຮຽນຂຶ້ນ ຕາມເມືອງໃຫຍ່ໆຈຶ່ງໄດ້ຄິດພິມແບບຮຽນໜັງສືລາວຂຶ້ນແດ່ເລັກນ້ອຍທໍ່ນັ້ນ.

ມາເຖິງລະຫວ່າງປີ 1929 ສະມາຄົມນັກປາດຝຣັ່ງກໍວາງແຜນຟື້ນຟູພຸດທະສາສະໜາ ແລະການສຶກສາຝ່າຍພຸດທະສາສະໜາ ຈຶ່ງໄດ້ຈັດຕັ້ງໂຮງຮຽນບາລີຂຶ້ນ ໃນນະຄອນຫລວງວຽງຈັນ ໂດຍມີຍາພໍ່ມະຫາແກ້ວ ເປັນຄູສອນຄົນທຳອິດ ນອກຈາກນີ້ທາງສະມາຄົມນັກ ປາດຝຣັ່ງ ຍັງໄດ້ດຳເນີນການຈັດຕັ້ງອົງການໜຶ່ງຂຶ້ນ ໂດຍແຕ່ງຕັ້ງໃຫ້ເຈົ້າເພັດຊະລາດ ເປັນ ນາຍົກ ແລະ ຮຽກອົງການນີ້ວ່າ

ພຸດທະບັນດິດສະພາຈັນທະບູລີ ແລ້ວທ້ອນໂຮມໜັງສືເກົ່າ ຂອງລາວ ທັງເປັນອັກສອນທຳ ແລະ ອັກສອນລາວມາໄວ້ໃນບ່ອນດຽວກັນ ຈັດຕັ້ງເປັນຫໍສະໝຸດຂຶ້ນ ພ້ອມທັງໄດ້ອອກກົດໝາຍຫ້າມບໍ່ໃຫ້ທຳລາຍມ້າງເພວັດວາອາຣາມ ຫລື ຍົບເອົາ ພະພຸດທະຮູບໜີໄປ (ເຊິ່ງຄວາມຈິງຜ່ານມາເຂົາເອົາໜີໄປກ່ອນເກືອບໝົດແລ້ວ).

ກ່ຽວກັບການຟື້ນຟູ ພະພຸດທະສາສະໜາ ແລະ ຈັດຕັ້ງການສຶກສາທາງພຸດທະສາສະໜານີ້ ມີຂໍ້ຫຍຸ້ງຍາກໃນເລື່ອງແບບຮຽນ ຍາພໍ່ມະຫາແກ້ວ ສອນຢູ່ເວລານັ້ນກໍໃຊ້ແບບໄທເປັນຫລັກ ແລ້ວກ່າຍອອກເປັນໂຕທຳ ໃຫ້ນັກຮຽນຂຽນກ່າຍເອົາວັນລະ 4-5 ແຖວ ເປັນການຊັກຊ້າ ເສຍເວລາຫລາຍ ຕໍ່ມາໃນປີ 1931-1932 ຍາພໍ່ມະຫາສີລາ ວີຣະວົງສ໌ ເຂົ້າມາແທນຍາພໍ່ມະຫາແກ້ວ ຈຶ່ງໄດ້ສະເໜີຄວາມເຫັນຕໍ່ນາຍົກພຸດທະບັນດິດສະພາວ່າ ຄວນພິມແບບຮຽນບາລີ ແລະ ນັກທຳຂຶ້ນຈຶ່ງຈະສະດວກ. ແຕ່ວ່າໃນຂັ້ນຕົ້ນ ຕ້ອງໄດ້ປັບປຸງຕົວອັກສອນລາວເສຽກ່ອນ ເພາະກ້າຈະເອົາຕົວອັກສອນທຳມາພິມເປັນແບບຮຽນກໍເຮັດບໍ່ໄດ້ ຍ້ອນຕົວພິມອັກສອນທຳບໍ່ມີ ນາຍົກພຸດທະບັນດິດສະພາຈັນທະບູລີ ຈຶ່ງໄດ້ຕັ້ງກຳມະການຂຶ້ນຄະນະໜຶ່ງ ໂດຍແມ່ນເຈົ້າ ເພັດຊະລາດເອງເປັນປະທານ ແລະ ປະກອບດ້ວຍຄະນະກຳມະການຄື ທ່ານຫຍຸຍ ອະໄພ, ຍາພໍ່ມະຫາແກ້ວ, ຍາພໍ່ພິມມະສອນ, ຍາພໍ່ເມືອງໂຂງ, ພະຍານາມ ເສນາ, ທ່ານເລກີ ເຮືອງ, ທ່ານບະລັງຊາ ເດີລາໂບຣດ, ພະຍາຜຸຍ ປັນຍາ ແລະ ຍາພໍ່ມະຫາສີລາ ວີຣະວົງສ໌.

ໃນຂະນະທີ່ ສຶກສາຫາຊ່ອງທາງ ປັບປຸງອັກສອນນີ້ ໄດ້ມີຄວາມເຫັນແຕກຕ່າງກັນເປັນ 3 ພວກ ຄື ພວກທີໜຶ່ງຄືພວກທີ່ໄດ້ຮຽນໜັງຝຣັ່ງຫລາຍ ເຫັນດີໃຫ້ລຶບລ້າງຕົວອັກສອນລາວ ກົ້ມແລ້ວນັບຍັດເອົາຕົວອັກສອນຝຣັ່ງໃຊ້ຂຽນຄຳລາວ ແລະ ຄຳບາລີ. ພວກທີສອງເຫັນວ່າ ຕົວລາວທີ່ບໍ່ມີໃນຕົວບາລີນັ້ນໃຫ້ໃຊ້ເມັດ (.) ຢູ່ກ້ອງຕົວໜັງສືລາວເອົາ. ສ່ວນພວກທີສາມ ເຫັນວ່າ ການທີ່ຈະລຶບລ້າງໂຕລາວກົ້ມນັ້ນແມ່ນບໍ່ສົມຄວນ ແຕ່ວ່າກ້າຈະໃຊ້ເມັດ(.) ໄວ້ກ້ອງຕົວອັກສອນລາວນັ້ນກໍບໍ່ສະດວກ ເພາະຄວາມລຶ້ງຕາກັບຕົວອັກສອນເດີມມານານແລ້ວ ຈະພາໃຫ້ຫລົງສະເໜີ ເມື່ອເປັນດັ່ງນັ້ນກໍແໜງ ຕື່ມຕົວທີ່ຂາດຢູ່ນັ້ນເຂົ້າມາໃໝ່.

ເມື່ອເຫັນວ່າ ຄວາມເຫັນຂອງພວກທີສາມມີເຫດຜົນກວ່າ ທີ່ປະຊຸມຈຶ່ງໄດ້ລົງມະຕິ ເຫັນດີໃຫ້ຕື່ມຕົວອັກສອນລາວຂຶ້ນຄົບຕາມຕົວບາລີ ແລະ ສັນສະກິດທີ່ບູຮານເຄີຍໃຊ້ມາແລ້ວ ຄືກັບປະເທດທັງຫລາຍທີ່ໄດ້ເຄົ້າໜັງສືມາຈາກບ່ອນດຽວກັນ.

ໃນທີ່ສຸດ ຄະນະກຳມະການ ຫໍສະໝຸດ ພຸດທະບັນດິດສະພາຈັນທະບູລີ ຈຶ່ງໄດ້ຕື່ມຕົວ ອັກສອນລາວ ແລະ ໄດ້ຈັດພິມໄວຍາກອນລາວ ພາກອັກຂະຫລະວິທີ ສຳເລັດໃນປີ 1935 ແລະ ໂຮງຮຽນປະລິຍັດ ຕີທຳໄດ້ອາໄສແບບອັກຂະຫລະວິທີນີ້ເປັນຫລັກ ແລ້ວແຕ່ງປຶ້ມຮຽນພາສາບາລີ ຕະຫລອດ ຮອດຫລັກສູດຕ່າງໆໃນທາງສາສະໜາ ອອກແຜ່ຜາຍຮ່ຳຮຽນຕໍ່ມາ.

ແບບອັກຂະຫລະວິທີ ທີ່ຫໍສະໝຸດ ພຸດທະບັນດິດສະພາຈັນທະບູລີ ແຕ່ງຂຶ້ນມີຈຸດປະສົງໃຫ້ໃຊ້ຕົວອັກສອນລາວຂຽນຄຳບາລີ ແລະ ສັນສະກິດໄດ້ ເພື່ອສະດວກແກ່ການສຶກສາຮ່ຳຮຽນ ຂີດຂຽນ ບັນທຶກຄວາມຮູ້ທັງໃນທາງໂລກ ແລະ ທາງທຳ ໂດຍໃຊ້ຕົວອັກສອນແບບດຽວກັນ ບໍ່ຕ້ອງໃຊ້ຫລາຍແບບ ອັນຈະເປັນທາງແຕກແຍກ ແລະ ສ້າງຄວາມຫຍຸ້ງຍາກສຳລັບການສຶກ

ສາຂອງລູກຫລານໃນພາຍຫນ້າ.

ຕໍ່ມາ ພຸດທະບັນດິດສະພາຈັນທະບູລີ ສຸດສ້ອຍລົງ ຄະນະກຳມະການອັກສອນສາດ ລາວຄະນະຫນຶ່ງ ໄດ້ຕັ້ງຂຶ້ນໃນປີ 1948 ແລະ ໄດ້ອອກຂໍ້ບັງຄັບເປັນພະລາຊະອົງການເລກທີ 10 ລົງວັນທີ 27 ມົກກະລາ 1949 ບັນຍັດວ່າ ຕົວພະຍັນຊະນະລາວ ມີແຕ່ 27 ຕົວ ໂດຍຕື່ມຕົວ ຣ ເຂົ້າອີກ ແລະ ບັນຍັດໃຫ້ ຖືຫລັກການຂຽນພາສາລາວ ຕາມສຽງຂອງຄຳເວົ້າ ເຖິງແມ່ນຄຳ ນັ້ນຈະມາຈາກພາສາໃດກໍຕາມ ອັນພາໃຫ້ການຂຽນພາສາລາວ ແຕກຕ່າງໄປຈາກເຄົ້າມູນຂອງຄຳທີ່ໄດ້ມາຈາກພາສາຕ່າງປະເທດ ແລະ ພາໃຫ້ການສຶກສາທາງພຸດທະສາສະຫນາໃນ ລາຊະອານາຈັກລາວບໍ່ໄປບໍ່ມາ ເພາະການນຳ ໃຊ້ຕົວອັກສອນລາວ ແລະ ວາດຂຽນພາສາລາວ ຕາມຫລັກການນີ້ເປັນແບບຮຽນພາສາບາລີ ແລະ ພະທຳມະວິໄນທາງພຸດທະສາສະຫນາບໍ່ໄດ້ໂດຍຖືກຕ້ອງ ການສຶກສາຮ່ຳຮຽນພະທຳມະວິໄນຂອງ ພະສົງສາມະເນນ ຈຶ່ງຫັນໄປ ອາໄສແບບຮຽນທີ່ເປັນຕົວອັກສອນໄທ ແລະ ພາສາໄທເກືອບຫມົດ ດັ່ງນັ້ນຄວາມຮູ້ ແລະ ພາສາລາວ ຂອງບັນດານັກສຶກສາ ທາງພຸດທະສາສະຫນາ ຈຶ່ງຫັນເຫເວວາດ ເຂົ້າໄປຫາພາສາໄທ ຫລືບໍ່ກໍພົກະເຫີນ ບໍ່ພຽງແຕ່ເທົ່ານັ້ນ ຫນັງສືເທສະຫນາສັ່ງສອນຊາວບ້ານ ຕະຫລອດທັງ ຫນັງສືສະຫລອງອະນິສົງຕ່າງໆກໍມີແຕ່ຫນັງສືໄທ.

ເພື່ອໃຫ້ການຂຽນການຮຽນການສອນພາສາລາວທີ່ຍັງບໍ່ເຂົ້າລະບຽບໃນໄລຍະນັ້ນມີບ່ອນອີງເປັນ ອັນຫນຶ່ງອັນດຽວກັນ ທາງການຈຶ່ງໄດ້ວາງແຜນຈັດທຳວັດຈະນານຸກົມພາສາ ລາວຂຶ້ນມາໃຊ້ ພໍຊາມ ຊາ ແລະ ມອບໃຫ້ຍາພໍ່ມະຫາສີລາ ວີຣະວົງສ໌ ຮີບໂຮມ ແລະ ຂຽນຂຶ້ນ ວັດຈະນານຸກົມສະບັບດັ່ງກ່າວ ໄດ້ຮັບການຈັດພິມອອກມາໃນເດືອນມັງກອນ 1960 ແລະ ເຫັນ ວ່າມີປະໂຫຍດຢ່າງມະຫາສານ ສັງ ຄົມມີຄວາມຮຽກຮ້ອງຕ້ອງການ ຈຶ່ງໄດ້ຈັດພິມຄືນອີກເທື່ອ ຫນຶ່ງໃນປີ 1962 ແລະ ກໍກາຍເປັນບ່ອນອີງ ສຳຄັນອັນຫນຶ່ງ ໃຫ້ແກ່ການຄົ້ນຄວ້າຮ່ຳຮຽນພາສາລາວນັບແຕ່ນັ້ນມາ.

### *ການຄົ້ນຄວ້າປັບປຸງພາສາລາວຢູ່ເຂດປົດປ່ອຍ*

ຢູ່ເຂດປົດປ່ອຍ ກໍໄດ້ມີການຄົ້ນຄວ້າປັບປຸງພາສາລາວເຊັ່ນກັນ ຜົນປາກົດອອກມາກໍຄື ໄດ້ຈັດພິມປຶ້ມໄວຍາກອນລາວ ເຊິ່ງແຕ່ງໂດຍທ່ານ ພູມີ ວົງວິຈິດ ອອກມາໃຊ້ໃນປີ 1967 ແລະ ໄດ້ກາຍເປັນປຶ້ມທີ່ນຳໃຊ້ທົ່ວສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພາຍຫລັງທີ່ປະເທດຊາດ ໄດ້ຮັບການປົດປ່ອຍ.

ປຶ້ມໄວຍາກອນລາວ ທີ່ແຕ່ງໂດຍ ທ່ານ ພູມີ ວົງວິຈິດ ນີ້ ໄດ້ກຳນົດພະຍັນຊະນະເຄົ້າໃນ ອັກສອນລາວພຽງ 26 ໂຕ ບໍ່ນັບເອົາໂຕ ຣ ຄຳສັບ ທີ່ເຄີຍໃຊ້ໂຕ ຣ ຜ່ານມາ ລາງຄຳກໍປ່ຽນ ມາໃຊ້ໂຕ ລ ແລະ ລາງຄຳແມ່ນໃຊ້ໂຕ ຮ ສ່ວນການຂຽນພາສາລາວໃນປຶ້ມຫົວດັ່ງກ່າວ ແມ່ນ ຂຽນຕາມສຽງ ບໍ່ໄດ້ສະກົດຕາມເຄົ້າຂອງຄຳສັບ ເຖິງວ່າຄຳສັບນັ້ນຈະມີເຄົ້າມາຈາກພາສາໃດກໍຕາມ ດັ່ງນັ້ນໃນ ປຶ້ມຫົວດັ່ງກ່າວກຳນົດໃຫ້ໃຊ້ໂຕສະກົດ ພຽງ 8 ໂຕ ຄື ກ ງ ຍ ດ ນ ບ ມ ວ ແລະ ໃຫ້ໃຊ້ພະຍັນຊະນະ ຄວບພຽງໂຕດຽວຄືໂຕ ວ ເທົ່ານັ້ນ.

### *ບາງບັນຫາກ່ຽວກັບການໃຊ້ພາສາລາວໃນປັດຈຸບັນ*

ປັດຈຸບັນນີ້ ການໃຊ້ພາສາລາວ ຍັງມີອັນຫຍຸ້ງຍາກສັບສົນສົມຄວນ ຍ້ອນວ່າຕ່າງຄົນ ຕ່າງກໍໃຊ້ໄປຕາມຄວາມເຂົ້າໃຈຂອງໃຜລາວ ຈຶ່ງຂາດຄວາມເປັນເອກະພາບ ເກີດມີກໍລະນີ ສອນຢູ່ໃນໂຮງຮຽນແບບຫນຶ່ງ ແຕ່ໃຊ້ຢູ່ໃນສັງຄົມທົ່ວໄປຊ້ຳເປັນອີກແບບຫນຶ່ງ ຕົວຢ່າງ: ການໃຊ້ຕົວສະກົດ ໃນປຶ້ມໄວຍາກອນລາວແຕ່ງໂດຍທ່ານ ພູມີ ວົງວິຈິດ ແລະ ໃນແບບຮຽນພາສາ ລາວທີ່ໃຊ້ກັນໃນປັດຈຸບັນກໍກຳນົດເອົາຕົວອັກສອນພຽງ 8 ໂຕຄື : ກ ງ ຍ ດ ນ ບ ມ ວ ສາມາດ ເປັນຕົວສະກົດໄດ້ ແຕ່ໃນການນຳໃຊ້ທົ່ວໄປ ມີຫລາຍຄົນຍັງໃຊ້ຕົວອັກສອນອື່ນເປັນຕົວສະກົດ ເຊັ່ນ : ຂ ຈ ສ ຊ ຕ ພ ຟ ຣ ລ. . .

ນອກຈາກນີ້ ຍັງມີລາງຄົນໃຊ້ຕົວສະກົດກາງຄຳເຊັ່ນ : ລາຊວົງ, ສາສນາ. . . ຂຽນ ແບບພະຍັນຊະນະຈູງ ເຊັ່ນ : ຕລາດ, ຕລອດ. . . ຂຽນແບບກາລັນ ເຊັ່ນ : ວິຈິດສິລປ໌, ລາຊະວົງສ໌, ຊີໂອທ໌. . .

ສ່ວນການນຳໃຊ້ໂຕ ຣ ກໍຍັງມີອັນສັບສົນ ລາງຄົນບໍ່ໃຊ້, ລາງຄົນໃຊ້ຫນ້ອຍ (ໃຊ້ບາງຄຳສັບທີ່ຢືມມາຈາກພາສາຕ່າງປະເທດ), ລາງຄົນໃຊ້ຫລາຍ.

ບັນຫາສັບສົນອີກບັນຫາຫນຶ່ງ ແມ່ນຄຳທີ່ຢືມມາຈາກຄຳສັບຕ່າງປະເທດ ເຫັນວ່າມີການເວົ້າການຂຽນໄປພໍໃຜພໍລາວ ເຊັ່ນ : ອິດສະຕາລີ, ອິສຕຣາລີ, ອອສເຕຣເລຽ, ຝະລັ່ງ, ຝະຣັ່ງ, ຝລັ່ງ, ຝຣັ່ງ, ເກຣັກ, ເກຼັກ, ຄາຣາໂອເກະ, ຄາລາໂອເກະ, ຊີໂຣ, ຊີໂຣທ໌. . .

ອີກບັນຫາຫນຶ່ງ ທີ່ມັກເຫັນຄື ຍັງມີຜູ້ນຳໃຊ້ພາສາຕ່າງປະເທດປົນພາສາລາວ ຫລື ເອີ້ນວ່າ ແບບຊອດກະຈາ ເຊັ່ນ : " . . . ຊະນະດ້ວຍ ສະກໍ 25 ຕໍ່ 20 ", " ຂໍເຊີນມາຈອຍກັນ" . . . ໂດຍສະເພາະໃນພາສາໄທ ມີບາງຄຳສັບຂຽນ ແລະ ອອກສຽງຄືຄຳສັບໃນພາສາລາວ ແຕ່ມີຄວາມຫມາຍກົງກັນຂ້າມກັນ ແຕ່ກໍມີຜູ້ນຳເອົາມາໃຊ້ປົນເປກັບພາສາລາວ ເຮັດໃຫ້ເກີດຄວາມສັບສົນເຊັ່ນ : " ເກັ່ງແທ້ແຕ່ແພ້ດວງ", " ນັກມວຍຈາກບໍລິຄຳໄຊຊະນະ ນັກມວຍຈາກ ຊຽງຂວາງ ແພ້ " . . . ດັ່ງນີ້ເປັນຕົ້ນ. . .

ເພື່ອເປັນເອກະສານອ້າງອີງໃຫ້ແກ່ ການສອນ ການຮຽນພາສາລາວ ແລະ ໄວຍາ ກອນຢູ່ຕາມໂຮງຮຽນສາມັນສຶກສາ ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດ ການສຶກສາແຫ່ງຊາດ ໄດ້ຈັດພິມປຶ້ມໄວຍາກອນລາວໂດຍ ໃສ່ຊື່ວ່າ ໄວຍາກອນລາວປັດຈຸບັນ ຂຶ້ນໃນປີ 2000 ເຊິ່ງປະກອບມີ 3 ພາກຄື ພາກອັກຂະຫລະວິທີ, ວະຈີວິພາກ ແລະ ວາກະຍະສຳພັນ.

ໃນພາກອັກຂະຫລະວິທີ ເຫັນວ່າ ຍັງຍຶດກືປຶ້ມໄວຍາກອນລາວ ຂອງ ທ່ານພູມີ ວົງວິຈິດ ເປັນຫລັກພຽງແຕ່ປັບປຸງ ຫລື ປ່ຽນແປງບາງຈຸດເທົ່ານັ້ນ: ປຶ້ມຫົວນີ້ໄດ້ກຳນົດພະຍັນຊະນະເຄົ້າຂອງລາວມີ 27 ໂຕ ໂດຍນັບເອົາໂຕ ຣ ເຂົ້າໃສ່ນຳ ສ່ວນຕົວສະກົດກໍໄດ້ເພີ່ມຕົວສະກົດພິເສດຕື່ມອີກເຊັ່ນ ໂຕ ຈ ສ ຊ ໃຊ້ແທນ ດ, ໂຕ ລ ໃຊ້ແທນ ນ, ໂຕ ພ ຟ ໃຊ້ແທນ ບ ດັ່ງນັ້ນ ການຂຽນທັບສັບພາສາຕ່າງປະເທດໃນປຶ້ມຫົວນີ້ ແມ່ນອະນຸຍາດໃຫ້ໃຊ້ໂຕ ຣ, ໂຕສະກົດພິເສດ ແລະ ອັກສອນຄວບໂຕອື່ນ ນອກຈາກໂຕ ວ ແຕ່ກໍຍັງບໍ່ອະນຸຍາດໃຫ້ມີໂຕຫນັງສືເຫລືອຢູ່ທ້າຍຄຳ ທັງບໍ່ໃຊ້ເຄື່ອງຫມາຍກາລັນ ( ໌) . . . ແຕ່ປັດຈຸບັນນີ້ບັນຫາຕ່າງໆ ໃນການໃຊ້ພາສາລາວຍັງມີຢູ່.

ເຖິງຢ່າງໃດກໍດີ ນັບວ່າ ໂຊກດີຫລາຍທີ່ຄົນລາວ ມີພາສາລາວໃຫ້ໄດ້ເວົ້າ ໄດ້ຂຽນ (ມີທັງພາສາເວົ້າ ແລະ ໂຕຫນັງສື) ແຕ່ວ່າ ພາສາລາວຈະຍືນຍົງຄຽງຄູ່ກັບຊາດລາວຕະຫລອດໄປນັ້ນແມ່ນຂຶ້ນຢູ່ກັບຄົນລາວຫມົດທຸກຄົນ.

# ປະຫວັດຫນັງສືລາວ

ຄັດມາຈາກປຶ້ມ "ປວັຕໜັງສືລາວ" ໂດຍ ມະຫາ ສິລາ ວີຣະວົງ

**ຕົວໜັງສືລາວ ທີ່ໃຊ້ຂຽນບັນທຶກ ຄຳໃນພາສາລາວຢູ່ທຸກວັນນີ້ ໄດ້ເຄົ້າມູນ ມາຈາກຕົວໜັງສື ຂອງ ຊົນຊາດໃດ ຫລືວ່າ ແມ່ນບຸກຄົນໃດ ເປັນຜູ້ປະດິດຄຶດຕັ້ງຂຶ້ນແຕ່ສະໄໝໃດ? ຄຳຖາມທັງຫລາຍ ດັ່ງກ່າວ ມານີ້ ຍັງບໍ່ມີນັກປາດລາວ ຫລື ນັກປາດ ຕ່າງຊາດ ຄົນໃດຕອບແນ່ນອນລົງໄດ້ ເພາະຍັງບໍ່ມີ ຫລັກຖານ ອັນໃດພໍເປັນພະຍານ ອ້າງເອື່ອຍໄດ້ ແຕ່ເຖິງຢ່າງນັ້ນ ກໍຍັງມີທາງ ພໍຈະສັນນິຖານໄດ້ ຕາມເຫດການ ທີ່ເປັນມາດັ່ງນີ້:**

1. ໃນຕຳນານໜັງສືໄທ ເຊິ່ງທ່ານສາສະດາຈານ ສະແດັສ ນັກປາດຊາດຝຣັ່ງ ເປັນຜູ້ແຕ່ງ ໄດ້ ກ່າວໄວ້ຕອນໜຶ່ງວ່າ "ອັນຕົວໜັງສືໄທນີ້ ມັກເຂົ້າໃຈກັນວ່າ ພະເຈົ້າ ຣາມຄຳແຫງມະຫາລາດ ຫລື ທີ່ຮຽກ ໃນສິລາຈາລຶກວ່າ ພໍ່ຂຸນຣາມຄຳແຫງ ເຊິ່ງຄອງເມືອງສຸໂຂໄທ ທົງປະດິດຂຶ້ນເມື່ອ ພ.ສ. 1826 (ຄ.ສ. 1283) ດ້ວຍສິລາຈາລຶກຂອງພະເຈົ້າ ຣາມຄຳແຫງມະຫາລາດ ກ່າວຄວາມເວົ້າແຫ່ງໜຶ່ງວ່າ: **ເມື່ອກ່ອນ ລາຍສືໄທນີ້ບໍ່ມີ (ມະຫາ) ສັກກະລາດ 1205 ສົກປີມະແມ ພໍ່ຂຸນຣາມຄຳແຫງ ຫາໄຄຣ່ໃຈ ໃນໃຈແລ ໃສ່ ລາຍສືໄທນີ້ ລາຍສືໄທນີ້ຈຶ່ງມີ ເພື່ອຂຸນຜູ້ນັ້ນ ໃສ່ໄວ້** ດັ່ງນີ້ ກ້າສັງເກດຄຳທີ່ໃຊ້ໃນຈາລຶກ ຈະເຫັນໄດ້ວ່າ ມີຄຳ "ນີ້" ຢູ່ຕໍ່ຄຳ "ລາຍສື" ທຸກແຫ່ງ ຫມາຍຄວາມວ່າ ໜັງສືໄທຢ່າງນີ້ (ຫລືແບບນີ້) ບໍ່ໄດ້ປະສົງຈະທົງ ສະແດງວ່າ ໜັງສືຂອງຊົນຊາດໄທ ຫາກໍຈະມີຂຶ້ນ ຕໍ່ເມື່ອ ພ.ສ. 1826 (ຄ.ສ. 1283).

ເມື່ອກວດກາ ພິຈາລະນາເບິ່ງຕົວໜັງສື ຂອງຊົນຊາດໄທ ທຸກພວກທີ່ມີຢູ່ໃນເວລານີ້ ກໍເຫັນວ່າ ສົມຈິງຢ່າງນັ້ນ ດ້ວຍແຕ່ເດີມຊົນຊາດໄທຕັ້ງພູມລຳເນົາ ບ້ານເມືອງ ຢູ່ໃນດິນແດນເຊິ່ງ ທຸກວັນນີ້ ເປັນ ອານາເຂດຂອງຈີນອ້າງຝ່າຍໃຕ້ ຄັນເມື່ອປະມານ ພ.ສ. 500 ພວກຈີນມີອຳນາດຂຶ້ນ ກໍຂະຫຍາຍອານາເຂດແຫຍ້ພວກໄທ ລົງມາໂດຍລຳດັບ ພວກໄທທີ່ບໍ່ຍອມຢູ່ໃນອຳນາດຈີນ ກໍພາກັນ ອົບພະຍົບຈາກເມືອງເດີມ ລົງມາຢູ່ທາງແມ່ນ້ຳສາລະວິນ ແລະ ໄປໃນແດນຕົງແກງ ແດນເມືອງ ສິບສອງເຈົ້າໄທ ສິບສອງພັນນາ ຈຶ່ງໄດ້ຊື່ວ່າ ໄທນ້ອຍ. ຕໍ່ມາ ພວກໄທນ້ອຍ ລົງມາຕັ້ງພູມລຳເນົາ ເຖິງແດນລານຊ້າງ ລານນາ ແລະ ສະຫຍາມປະເທດ, ສ່ວນທີ່ຍັງຢູ່ເໜືອ ຍັງຄົງຢູ່ໃນແດນຕົງແກງ ສິບສອງເຈົ້າໄທ ສິບສອງພັນນາ ແລະ ລານນາໄທ, ພວກໜຶ່ງເປັນໄທກາງລົງມາຢູ່ໃນແດນລ້ານ ຊ້າງ ແລະສະຫຍາມປະເທດ, ສ່ວນຕົວໜັງສື ຊຶ່ງພວກໄທໃຊ້ໃນທຸກວັນນີ້ ມີເຄົ້າມູນຕ່າງກັນ, ແບບອັກສອນໄທຊຶ່ງ ພະເຈົ້າຣາມຄຳແຫງ ມະຫາລາດ ທົງປະດິດຂຶ້ນນັ້ນ ເປັນອັກສອນຂອງພວກ ໄທກາງ ຍັງອັກສອນ ຂອງພວກໄທໃຫຍ່ ໄທເໜືອອີກຕ່າງຫາກ ເກີດຂຶ້ນໂດຍອາໄສ ເຫດການຕ່າງກັນ **ແຕ່ລ້ວນອາໄສຕົ້ນແບບອັກສອນ ຊຶ່ງໄດ້ມາຈາກອິນເດຽ ດ້ວຍກັນ ທັງນັ້ນ**".

2.ຕາມຂໍ້ຄວາມທີ່ທ່ານສາສະດາຈານ ສະແດັສ ກ່າວມານີ້ຢືນຢັນວ່າຕົວໜັງສືໄທ ເຜົ່າຕ່າງໆ ໄດ້ເຄົ້າມາຈາກ ຕົວໜັງສືຂອງອິນເດຽ, ຕົວໜັງສືລາວ ນີ້ກໍເປັນ ອັກສອນໄທພວກໜຶ່ງ ແຕ່ເດີມມາ ຮຽກວ່າຕົວໄທນ້ອຍ,ຕົວໄທນ້ອຍຫລືຕົວລາວນີ້ຂ້າເຈົ້າເຫັນວ່າໄດ້ມາຈາກຕົວໜັງສືອິນເດຽທາງພາກ ເໜືອ ເຊິ່ງຮຽກວ່າຕົວ **ສັນສະກຣິຕ** ຫລືຕົວ **ເທວະນາຄຣີ** ຕາມທີ່ທ່ານ ສາສະດາຈານ ສະແດັສ ກ່າວໄວ້ ນັ້ນແທ້, ສ່ວນຕົວອັກສອນທຳ ທີ່ໃຊ້ ຈາລຶກພະທຳ ຄຳສອນ ຂອງພະພຸດທະເຈົ້າ ເຊິ່ງລາວເຮົາ ນິຍົມຂຽນ ໃສ່ໃບລານນັ້ນ ກໍໄດ້ເຄົ້າມູນ ມາຈາກ ຕົວອັກສອນ ອິນເດຽຄືກັນ ແຕ່ເປັນອິນເດຽຝ່າຍໃຕ້, ຕົວອັກສອນ ອິນເດຽຝ່າຍໃຕ້ນີ້ ຮຽກວ່າ **ຕົວປາລີ** ຫລື ຕົວຄຣິນ, ຕົວອັກສອນອິນເດຽ ທັງສອງຢ່າງນີ້ ມີເຄົ້າມູນມາ ຈາກອັກສອນພຣາມີ ຕົວດຽວກັນ ແລະໄດ້ແຜ່ຜາຍເຂົ້າມາໃນ ປະເທດແຫລມອິນດູຈີນ ຫລືສຸວັນນະພູມ ປະເທດ ແລ້ວເກີດເປັນໜັງສືລາວ, ໜັງສືຂອມ, ໜັງສືໄທ, ໜັງສືຂະເມນ, ໜັງສືມອນ, ພະມ້າ, ລື້, ໄທໃຫຍ່ ແລະ ໄທດຳ.

1 

ຄ.ສ. 1292 ຄ.ສ. 1357 ຄ.ສ. 1357

2 

ຄ.ສ. 1292 ຄ.ສ. 1357

3



ຄ.ສ. 1292

4



ຄ.ສ. 1292 ຄ.ສ. 1357 ຄ.ສ. 1357

24/VII

5



ຫ້າມຈຳໜ່າຍ

ຕ ຕັກຫງາຍ ຕ ຕັກຫງາຍ ຄ.ສ. 1292 ຄ.ສ. 1292



ຄ.ສ. 1357 ຄ.ສ. 1357

6


ທ ຫົວແຕກ  ທ ມຸນທາ  ຄ.ສ. 1292

7


ຄ.ສ. 1292  ຄ.ສ. 1357

8


ຄ.ສ. 1292  ຄ.ສ. 1357  ຄ.ສ. 1357

9


ທ ທະຫານ  ຄ.ສ. 1292  ຄ.ສ. 1357

10



ທ ທັມມ໌ ຫຼື ໝາກຈາລ ຄ.ສ. 1292 ຄ.ສ. 1357

11



ຄ.ສ. 1292 ຄ.ສ. 1357

12



ພ ພຸທ ແລະ ຟ ຄ.ສ. 1292 ຄ.ສ. 1292



ຄ.ສ. 1357 ຄ.ສ. 1357

13 

ຄ.ສ. 1292 ຄ.ສ.1357

14 

15 

ຄ.ສ. 1292

16 

ຄ.ສ. 1292 ຄ.ສ. 1357

17





ຄ.ສ. 1292 ຄ.ສ. 1357

18



ຄ.ສ.1292

19



ຄ.ສ.1292 ຄ.ສ. 1357

# ກວຽນ ພາຫະນະແບບລາວໆ

ໂດຍ : ໂອທອງ ຄຳອິນຊູ

ກວຽນເປັນພາຫະນະທີ່ເຄີຍຜູກພັນກັບຄົນລາວ ມາແຕ່ເຊິ່ນກ່ອນພຸ້ນ ປະຊາຊົນລາວໃນແຖບກິ່ນຊົນນະບົດ ນຳໃຊ້ກວຽນເປັນພາຫະນະຕົ້ນຕໍ ອາດຈະເປັນຍ້ອນວ່າ ກວຽນສາມາດ ຜ່ານຜ່າໄປມາຕາມເສັ້ນທາງທີ່ຫຍຸ້ງຍາກສັບສົນ ເຊິ່ງລົດບໍ່ສາມາດໄປໄດ້ ແລະ ລາຄາຂອງມັນກໍຕໍ່າກວ່າລາຄາລົດຫລາຍເທົ່າ ທັງບໍ່ຈຳເປັນນຳໃຊ້ເຊື້ອເພີງ. ແຕ່ວ່າໃນປັດຈຸບັນ ບໍ່ຄ່ອຍເຫັນມີການນຳໃຊ້ກວຽນເປັນພາຫະນະອີກ ເຫັນແຕ່ຜູ້ເຖົ້າລາງຄົນໃນເຂດຊົນນະບົດ ທີ່ຍັງມີຄວາມຮັກ ຄວາມຜູກພັນກັບກວຽນ ໄດ້ຮັກສາມັນໄວ້ ຕາມກ້ອງລ່າງເຮືອນຂອງຕົນ.

ດຽວນີ້ ກວຽນຈຳນວນຫລວງຫລາຍ ໄດ້ຖືກນຳໃຊ້ ປະດັບເອ້ ອາຄານ ສະຖານທີ່ ໄປແລ້ວ. ພາຫະນະຊະນິດນີ້ ເຮັດດ້ວຍໄມ້ເນື້ອແຂງ ເຊັ່ນ: ໄມ້ຂະຍຸງ, ໄມ້ດູ່. . . ໂດຍອາໄສຄວາມພາກພຽນພະຍາຍາມ ແລະ ສີມືປານີດຂອງຊ່າງ ຈຶ່ງເຮັດໃຫ້ໄມ້ທ່ອນໃຫຍ່ ຖືກແຍກອອກມາເປັນສ່ວນປະກອບຕ່າງໆ ຂອງກວຽນ ດ້ວຍການນຳໃຊ້ເຄື່ອງມືຄື: ເລື່ອຍ, ຂວານ, ພ້າ, ກົບ, ສິ່ວ, ຕະໄບ ເປັນຕົ້ນ.

ສ່ວນປະກອບສຳຄັນຂອງກວຽນມີ "ທູບ" ເຊິ່ງເປັນສ່ວນທີ່ຍາວກວ່າຫມູ່ຫມົດ ວາງຊອຍໄປຕາມລຳກວຽນດ້ານລຸ່ມ ແລະ ຍື່ນຍາວອອກໄປເບື້ອງຫນ້າ ກາຍເປັນຫົວໂຄ້ງງາມ, "ຕີນ" ທັງສອງປະກອບມີ "ດຸມ" ຢູ່ຈຸດໃຈກາງຂອງວົງຕີນ ທີ່ຊຽນເປັນຮູບວົງມົນໃຫຍ່ ຕໍ່ຄ້ຳດ້ວຍ "ກຳ" ເຊິ່ງທຳຫນ້າທີ່ແບບດຽວກັບຄ້ົວລົດກົບ.

ຕີນກວຽນສ່ວນນອກ ທີ່ຈະຕ້ອງໄດ້ສຳຜັດໄປມາກັບພື້ນດິນນັ້ນ ເພື່ອຫລຸດຜ່ອນການຫລຸ້ຍຫ້ຽນ ເພິ່ນໂຄບດ້ວຍເຫລັກເປັນຮູບວົງມົນອ້ອມຮອບເອົາໄວ້ ດ້ວຍວິທີງ່າຍໆເພິ່ນຂຸດຮ່ອງ ເປັນຮູບວົງມົນໃຫ້ພໍດີກັບວົງ "ເຫລັກໂຄບ" ລົງພື້ນດິນແລ້ວໃຊ້ ຂີ້ຂວານ, ຂີ້ກົບ ເປັນຟືນດັງໄຟ ໃສ່ຕາມຮ່ອງນັ້ນ ເພື່ອເຜົາເຫລັກໂຄບໃຫ້ຮ້ອນ ເຫລັກຮ້ອນຈະຂະຫຍາຍກວ້າງອອກ ຈຶ່ງນຳໄປສຸບໃສ່ວົງຕີນກວຽນໄວ້ ເມື່ອເຮັດໃຫ້ເຢັນ ເຫລັກໂຄບ ຈະຫົດເຂົ້າຮັດແຈບແຫນ້ນກັບວົງຕີນ ກວຽນເອົາໄວ້. ຕີນກວຽນພົວພັນກັບລຳກວຽນ ດ້ວຍ "ເພົາ" ທີ່ເຮັດດ້ວຍໄມ້ເນື້ອແຂງຫນຽວ ເຊັ່ນໄມ້ເຄັງ.

ພາກສ່ວນຢູ່ເບື້ອງນອກສຸດ ທັງສອງຂ້າງຂອງກວຽນ ເອີ້ນວ່າ "ແພດ" ເຊິ່ງມີຫາງຍື່ນອອກໄປທາງ ເບື້ອງຫລັງ ເປັນຮູບໂຄ້ງແບບດຽວກັນກັບທູບ (ຫົວກວຽນ) ແພດສອງອັນຖືກຕໍ່ໂຍງກັນດ້ວຍຄານສອງອັນ ເຊິ່ງທັງແພດ ແລະ ຄານນີ້ ຈະປະກອບເຂົ້າກັນເປັນຮູບສີ່ລ່ຽມ ແລະເບິ່ງຄືວ່າຫມົດລຳກວຽນໄດ້ຍອງ ຢູ່ເຄິ່ງກາງ ແລະ ແບ່ງຮູບສີ່ລ່ຽມ ດັ່ງກ່າວ ອອກເປັນສອງສ່ວນເທົ່າກັນ. ເບື້ອງເທິງສຸດຂອງກວຽນ ມີຮາວກົມໆ ສອງອັນ ເອີ້ນວ່າ "ແມ່ປະຄອງ" ກວຽນລຳນຶ່ງ ມີ "ແຂນເທົ້າ" ສີ່ອັນ ຄ້ຳແມ່ປະຄອງເອົາໄວ້ ຕີນແຂນເທົ້າຍອງຢູ່ເທິງຄານ ແລະ ເປັນຮູບກົ່ງ ໂຄ້ງ

ຂຶ້ນໄປຮັບກັບແມ່ປະຄອງພໍດີ ແລະ ສ່ວນປະກອບທີ່ນ້ອຍກວ່າໝູ່ໝົດຂອງກວຽນ ຄືຈະແມ່ນ "ດູກຂ້າງ" ທີ່ເປັນແຊກ ຕໍ່ລະຫວ່າງ ທູບ ກັບແມ່ປະຄອງນັ້ນເອງ ຖ້າຈະສົມທຽບກວຽນ ໃສ່ກັບຮ່າງກະດູກຂອງຄົນເຮົາ ທີ່ຢູ່ໃນທ່ານອນຫງາຍ ກໍຈະເຂົ້າໃຈແຈ້ງຕື່ມວ່າ ເປັນຫຍັງ ໄມ້ແຊກນ້ອຍໆ ເຫລົ່ານີ້ ຈຶ່ງມີຊື່ວ່າ "ດູກຂ້າງ" ສ່ວນທູບກວຽນ ກໍຈະວາງຢູ່ໃນຕຳແໜ່ງກະດູກ ສັນຫລັງທັນທີ ຕ່າງແຕ່ວ່າ ທູບກວຽນແຍກອອກເປັນສອງສ່ວນ ເຊິ່ງວາງ ໄລຍະຫ່າງໄວ້ສຳ ລັບເປັນພື້ນກວຽນ ທີ່ປູດ້ວຍໄມ້ລີກຍາວໆ ຕາມລຳກວຽນນັ້ນເອງ.

ການເຊື່ອມໂຍງ ສ່ວນປະກອບຕ່າງໆຂອງກວຽນ ເຂົ້າໃສ່ກັນນີ້ ເພິ່ນໃຊ້ຫລີ້ມ, ໄລຄັດ, ລວດໜັງອັນ. ສ່ວນການທີ່ຈະເຮັດໃຫ້ກວຽນເຫລື້ອມງາມດີ ເພິ່ນໃຊ້ເຫລັກຕະໄບຖູ ແລ້ວຝັດດ້ວຍກະດາດຊາຍ ຫລັງຈາກນັ້ນ ຈຶ່ງທາກວຽນດ້ວຍນ້ຳມັນຍາງສົດ ການທານີ້ ເພິ່ນເອີ້ນວ່າ "ລາພອນກວຽນ".

ສ່ວນປະກອບພາຍນອກ ທີ່ພົວພັນກັບກວຽນມີຄື: "ກະໂຊ້-ລຳແພນ" ໃຊ້ສຳລັບຮອງໃນເວລາຢາກ ໃສ່ເຄື່ອງຂອງທີ່ເປັນເມັດ, ເປັນກ້ອນນ້ອຍ, ເພື່ອບໍ່ໃຫ້ລອດອອກຈາກກວຽນ ກະໂຊ້ມີສອງອັນ ຮູບຮ່າງຄືກະໂຊ້ສະນ້ຳ ສຳລັບໃສ່ທາງໜ້າ ແລະຫລັງ, ລຳແພນ ຄ້າຍຄືສາດມີສອງແຜ່ນ ສຳລັບຮອງເຄິ່ງກາງ ທັງກະ ໂຊ້ ແລະ ລຳແພນ ສານດ້ວຍໄມ້ປ່ອງ. ນອກຈາກກະໂຊ້-ລຳແພນແລ້ວ ຍັງມີ "ພວງ" ເຊິ່ງເປັນຫລັງຄາກົ່ງ ຄືອຸໂມງ ປະກອບສ້າງດ້ວຍໃບໄມ້ ແຫລບໃສ່ກັນ ມີຂອບສຳລັບກອບໃສ່ກັບແມ່ປະຄອງ ເພື່ອກັນແດດກັນຝົນ ເວລາເດີນທາງໄກ.

ເນື່ອງຈາກວ່າກວຽນ ເປັນພາຫະນະທີ່ຕ້ອງໄດ້ອາໄສງົວລາກແກ່ ດັ່ງນັ້ນຢູ່ເບື້ອງໜ້າຕິດກັບຫົວກວຽນ ຈຶ່ງມີ "ແອກ" ເຊິ່ງເຮັດດ້ວຍໄມ້ຊະນິດເບົາ ເຊັ່ນ: ໄມ້ສະຄານ ມີລັກສະນະຄືໄມ້ຄານສຳລັບວາງ ໃສ່ຄໍງົວ ແລະ ມີອ້ອງເພື່ອຄ້ອງເອົາຄໍງົວໄວ້ກັບແອກ ບໍ່ໃຫ້ຫລຸດຫລຸ້ຍໄປໃນເວລາມັນອອກແຮງດັນ ງົວທີ່ໃຊ້ແກ່ກວຽນນັ້ນ ຈະຕ້ອງເປັນງົວເຖິກ ແຂງແຮງດີທັງຄູ່, ເຊິ່ງເອີ້ນວ່າ "ງົວກວຽນ" ຄອບ ຄົວທີ່ມີກວຽນ ແມ່ນຕ້ອງມີງົວກວຽນ ຫລື ມີບາງເທື່ອເພິ່ນກໍເອົາຄວາຍແກ່ກວຽນກໍມີ.

ກວຽນມີບົດບາດສຳຄັນ ຕິດພັນກັບຊີວິດການເປັນຢູ່ປະຈຳວັນ ຂອງຊາວຊົນນະບົດ ໃນເມື່ອກ່ອນຄື: ໃນຕົ້ນລະດູຝົນ ຊາວນາໃຊ້ກວຽນຂົນຝຸ່ນຄອກໄປໃສ່ນາ, ພໍເຖິງລະດູມ້ຽນມັດເຂົ້າເມື່ອຟາດເຂົ້າຕຸ້ມ ເປັນກອງໄວ້ກາງລານແລ້ວເຈົ້າຂອງລານ ຈະວານຊາວບ້ານເອົາກວຽນ ມາແກ່ເຂົ້າໄປຫາເລົ້າ, ວານບ່າວສາວໄປຕັກເຂົ້າຂຶ້ນເລົ້າ ຈາກລານນີ້ ຕໍ່ໃສ່ລານນັ້ນ ຈົນທົ່ວທັງບ້ານ ບໍ່ໄດ້ຈ້າງເງິນກັນພໍກົບ ພຽງແຕ່ເຈົ້າຂອງລານ ລ້ຽງເຂົ້າຄາບນຶ່ງກໍພໍ ແລະນອກຈາກນີ້ແລ້ວ ເຂົາເຈົ້າຍັງໃຊ້ກວຽນ ແກ່ຟືນມາໄວ້ດັງ, ວານກັນໄປແກ່ເສົາມາປຸກເຮືອນຕະຫລອດຮອດແກ່ຍ້າຍຂົນເຄື່ອງຂອງຕ່າງໆ ຕາມຕ້ອງການ ແລະມີກວຽນສາມາດຮັບນ້ຳໜັກໄດ້ ຫລືແຮງຂອງງົວທີ່ຈະລາກແກ່ ມີຜູ້ເຖົ້າບາງ ຄົນເລົ່າສູ່ຟັງວ່າ: ແຕ່ກ່ອນ ເພິ່ນເຄີຍນຳໃຊ້ກວຽນແກ່ໄມ້ທ່ອນມາແລ້ວ ແລະມີຜູ້ເວົ້າເປັນຕາມ່ວນວ່າ "ຕອນເປັນບ່າວ ກໍເອົາກວຽນນີ້ລະໄປທ່ຽວບຸນທາດຫລວງ ຊວນກັນທັງ ເຖົ້າທັງແກ່ທັງບ່າວທັງສາວ ກຽມເຂົ້າສານ ບັ້ງປາແດກ ແລ້ວຂີ່ກວຽນໄປແຕ່ສວາຍ ໃຜມີພີ່ນ້ອງຢູ່ ໃນເມືອງກໍພາໝູ່ໄປພັກ ຢູ່ເຮືອນພີ່ນ້ອງ ທ່ຽວບຸນສົມໃຈແລ້ວ ມື້ເຊົ້າຈຶ່ງຂີ່ກວຽນກັບຄືນບ້ານ"


13 ພວງ
12 ລຳແພນ
11 ກະໂຊ້
10 ດູກຂ້າງ
14 ແອກ
8 ແມ່ປະຄອງ
3 ດຸມ
9 ແຂນເທົ້າ
7 ແພດ
4 ກຳ
6 ຄານ
1 ທູບ
5 ເຫຼັກໂຄບ
2 ຕີນ

# ກ

**ກ** ພະຍັນຊະນະຕົວທຳອິດ ເອີ້ນວ່າຕົວ **ກໍ**, ກີກຈັດໄວ້ໃນຫມວດອັກສອນກາງ ແລະໃຊ້ເປັນຕົວສະກົດໄດ້ ເຊັ່ນ: ມັກ, ປາກ, ໂລກ ...

**ກະ** 1. ຄາດຫມາຍ, ຄະເນ, ນັບຢູ່ໃນໃຈ ເຊັ່ນ: *ກະວ່າດິນຕອນນີ້ກວ້າງຊາວຕາລາງແມັດ.*
2. ຮອຍຈ້ຳດຳໆ ຄືຮອຍມືກຕາມຜິວ ຫນັງຂອງຜູ້ເຖົ້າ.
3. ພະຍາງຫນ້າຂອງຫລາຍໆຄຳ ໃຊ້ໄວ້ເພື່ອໃຫ້ອອກສຽງສະບາຍ ເຊັ່ນ: *ກະຕ່າ, ກະປູ, ກະປ໋ອງ.*

**ກະຈະ** ງາມ, ຂາວເດັ່ນ, ແຈ່ມແຈ້ງ, ມັກໃຊ້ປະກອບຄຳວ່າ ຂາວ ເຊັ່ນ: ຝ້າຍຂາວກະຈະເຕັມສວນ.

**ກະຈາ** ລັກສະນະບໍ່ເຕັມອັ້ນ, ບໍ່ດີເລີຍ ຫລືເຄິ່ງໆກາງໆ ເຊັ່ນ: ຫມາກພ້າວທີ່ບໍ່ທັນຫ້າວແຕ່ກໍບໍ່ອ່ອນ ເອີ້ນວ່າຫມາກພ້າວກະຈາ, ລັກສະນະທີ່ບໍ່ເກັ່ງໃນວິຊາໃດຫນຶ່ງ ພຽງແຕ່ຮູ້ເລັກໆນ້ອຍໆ ເອີ້ນວ່າ *ຜູ້ກະຈາ.*

**ກະແຈະ** 1. ຝຸ່ນຫອມ ຫລືແປ້ງຫອມ ເຮັດຈາກ*ຕົ້ນຈັນຫອມ* ຫລື*ຂະຫມິ້ນ* ຊຶ່ງຄົນສະໄຫມກ່ອນໃຫ້ທາຕົນຕົວ.
2. ຊື່ແຂວງຫນຶ່ງຂອງ*ກຳພູຊາ* ຫລື*ກຳປູເຈຍ* ຊຶ່ງຕິດຊາຍແດນລາວທາງພາກໃຕ້.

**ກະແຈ** ເຄື່ອງມືສຳລັບອັດປະຕູ ຫລືຫີບ, ແບ່ງອອກເປັນສອງພາກສ່ວນ ຄື *ຫນ່ວຍກະແຈ* ແລະ *ລູກກະແຈ*, ກຸນແຈກໍວ່າ; ເຄື່ອງມືໃຊ້ໃນການສ້ອມແປງ.

**ກະເຈົາ** ພືດຊະນິດຫນຶ່ງ ເອີ້ນປໍກະເຈົາ, ເປືອກໃຊ້ເຮັດເຊືອກ ຫລືເຮັດໄຫ່ເຂົ້າ.

**ກະຈົກ** ແກ້ວເປັນແຜ່ນ ໃຊ້ສຳລັບແຍງເງົາ; ແວ່ນແຍງກໍວ່າ.

**ກະຈັງ** ຊື່ລາຍລາວແບບຫນຶ່ງ ຊຶ່ງເປັນສິລະປະບູຮານໃຊ້ປະດັບຕາມວັດ ແລະຫໍໂຮງ, ເອີ້ນອີກຢ່າງຫນຶ່ງວ່າ *ລາຍຕາອ້ອຍເທດ.* (ເບິ່ງໜ້າ 289)

**ກະຈາຍ** 1.ເຮັດໃຫ້ແຜ່ອອກໄປທົ່ວ ເຊັ່ນ: *ສະຖານີວິທະຍຸກະຈາຍສຽງໄປທົ່ວປະເທດ; ກະຈາຍກຳລັງ* ແມ່ນສິ່ງກຳລັງພົນໃຫ້ຈ່າຍອອກໄປຕາມພື້ນທີ່ອັນກວ້າງຂວາງ.
2.ຫວ້ານຊະນິດນຶ່ງ ທີ່ມີທາດເບື່ອ ເອີ້ນວ່າຫວ້ານກະຈາຍ.

**ກະຈູ້ດ** ຕຸ້ມໃສ່ອ້ຽນ ຮູບຊົງຄືຫມໍ້ຫນຶ້ງ ມີງາຫລືຝາຢູ່ດ້ານລຸ່ມ.

**ກະຈອນ** ເຄື່ອງປະດັບຫູ ເຮັດດ້ວຍເງິນຄຳ, ທອງນາກ ຫລືປະລາສະຕິກ, ມີຫລາຍຊະນິດເຊັ່ນ: *ກະຈອນຈູມ, ກະຈອນຍອຍ* ເປັນຕົ້ນ.

**ກະຈ້ອນ** ສັດສີ່ຕີນຈຳພວກໄຕ່ໄມ້ ມີຂົນສີຮູຍ (ເຫລືອງປົນແດງ) ໂຕຂະຫນາດກະຮອກ, ກະແຕ.

**ກະຈັບ** 1. ພືດລອຍນ້ຳຕາມຫນອງ, ຫມາກກິນໄດ້ເອີ້ນວ່າຫມາກຈັບ ຊະນິດຫນຶ່ງມີຫນາມແຂງ ແລະ ແຫລມ ເພິ່ນຈຶ່ງເອີ້ນລວດຫນາມທີ່ໃຊ້ລ້ອມຮົ້ວວ່າ *ຫນາມຫມາກຈັບ.*
2. ເຄື່ອງປ້ອງກັນອະໄວຍະວະເພດຊາຍ ຂອງນັກກິລາຕີມວຍ.

**ກະຈັບປີ່** ເຄື່ອງດົນຕີປະເພດດີດ ມີສີ່ສາຍບູຮານເອີ້ນວ່າ *ຊຸງ.*

**ກະຈັບປີ້ງ** ເຄື່ອງປົກບັງອະໄວຍະວະເພດ ຍິງສຳລັບເດັກນ້ອຍແມ່ຍິງ ໃຊ້ຍາມບໍ່ນຸ່ງເຄື່ອງຫຸ້ມກາຍ ເຮັດດ້ວຍເງິນ.

**ກະໂຈມ** ເຄື່ອງສຸບຫົວຂອງ ພະເຈົ້າແຜ່ນດິນ ຫລື ຕົວລະຄອນໃນເທບນິຍາຍ, ຍອດກະໂຈມ ສ້ອຍແຫລມ ປະດັບດ້ວຍແກ້ວມະນີຮຸ່ງ ເຫລື້ອມ, ຊະດາ ຫລື ມຸງກຸດ ກໍວ່າ.

**ກະໂຈມໄຟ** ຫລັກ ຫລືທໍສູງທີ່ມີແສງໄຟຕາມ ທ່າເຮືອ ເພື່ອໃຫ້ນັກເດີນເຮືອສັງເກດທິດທາງ ແລະ ຮູ້ຈັກວ່າແຄມຝັ່ງຢູ່ດ້ານໃດ.

**ກະຈຽວ** ພືດແນວໜຶ່ງຈຳພວກຫົວ້ານ, ດອກເປັນຊັ້ນ ສີຂາວ-ແດງ ແລະ ກິນໄດ້. (ເບິ່ງຮູບພືດຜັກໜ້າ 300)

**ກະສາ** ນົກຊະນິດໜຶ່ງ ຄືນົກຍາງ ແຕ່ໂຕ ໃຫຍ່ກວ່າ ມັກຫາກິນຕາມແຄມໜອງ. (ຮູບ ໜ້າ 294)

**ກະສິກຳ** ການປູກຝັງຢູ່ຕາມໄຮ່ສວນ ແລະ ນາ, ການລ້ຽງສັດນ້ຳ ແລະ ສັດບົກ. ຜູ້ທຳມາຫາກິນດ້ານນີ້ ເອີ້ນວ່າ *ກະສິກອນ* ຜູ້ເຮັດກະສິກຳ ຫລື ຊາວໄຮ່ ຊາວນາ ທີ່ເຮັດການປູກຝັງ ລ້ຽງສັດ ເປັນອາຊີບ.

**ກະແສ** 1.ການເຄື່ອນໄຫວ ຫລືໄຫລໄປເປັນ ສາຍ ຫລື ເປັນຂະບວນເຊັ່ນ: *ກະແສນ້ຳ, ກະແສ ໄຟຟ້າ, ກະແສມະນຸດ.*

2.ຊື່ໜອງໃຫຍ່ຢູ່ພາກໃຕ້ຂອງປະເທດຈີນ ໃນ ສະໄໝບູຮານລາວ ເອີ້ນວ່າ *ໜອງກະແສ*, ຊາວຈີນເອີ້ນວ່າ *ຕາລີຟູ.*

**ກະສວຍ** ເຄື່ອງໃສ່ຫລອດເສັ້ນຝ້າຍ ສຳລັບ ຕຳຫູກ ຮູບຊົງຄືເຮືອ.

**ກະສັດ** ເຈົ້າຊີວິດ, ຜູ້ຄອບຄອງແຜ່ນດິນ ຫລືຜູ້ມີດິນຫລາຍຢູ່ໃນການຄຸ້ມຄອງ.

**ກະເສດ** 1. ຜັກແນວໜຶ່ງເກີດຢູ່ນ້ຳ ເປັນເຄືອ ມີປອດສີຂາວຕິດຢູ່ນຳເຄືອ.

2. ທົ່ງນາ, ທີ່ດິນ, ດິນທີ່ປູກພືດໃສ່, ເຂດແດນ,

**ກະເສດສາດ** ວິຊາວ່າດ້ວຍການປູກຫວ່ານ ແລະ ລ້ຽງສັດ, ຄວາມຮູ້ວ່າດ້ວຍການທຳໃຫ້ ເກີດຜົນຈາກດິນ.

**ກະສຸນ** ລູກປືນ ມີຫລາຍຂະໜາດ ໃຊ້ຍິງ ໂດຍປືນນ້ອຍ ແລະ ປືນໃຫຍ່.

**ກະສຽນ** ພົ້ນເຂດ, ໝົດສ້ຽງ, ເລີຍໄປແລ້ວ; *ກະສຽນອາຍຸ* ພົ້ນເຂດອາຍຸເຮັດການຕາມກົດ ໝາຍ ອະນຸຍາດ; ຜູ້ມີອາຍຸກາຍ 18 ປີຂຶ້ນໄປ.

**ກະຊະ** ໄມ້ໄຜ່ຊະນິດໜຶ່ງ ເກີດຕາມຕີນພູ ແລະ ແຄມທົ່ງນາ ລຳໜາ ປ້ອງນ້ອຍ.

**ກະແຊ** ວາດຟ້ອນແບບໜຶ່ງຂອງຊາວລາວ ພາກເໜືອ ເອີ້ນວ່າຟ້ອນກະແຊ.

**ກະໂຊ້** 1.ເຄື່ອງໃຊ້ສານດ້ວຍໄມ້ໄຜ່ ມີສອງ ຢ່າງ ຄື: *ກະໂຊ້ສະນ້ຳ* ຮູບຍາວມີດ້າມຈັບ; *ກະໂຊ້ ກວຽນ* ສຳລັບປູພື້ນກວຽນ ເພື່ອຮອງສິ່ງຂອງ. (ຮູບໜ້າ 63)

2. ຊື່ແມງຕົວນ້ອຍຢູ່ໃນນ້ຳ ຮູບຄືກະໂຊ້ສະນ້ຳ.

**ກະຊັງ** ພາຊະນະຄ້າຍຄືຂອງ ສຳລັບຂັງປາ ແຊ່ໄວ້ໃນນ້ຳ ເຮັດດ້ວຍໄມ້ປ່ອງ.

**ກະຊວງ** ສະຖານທີ່ເຮັດວຽກ ຂອງລັດຖະບານ ຈັດແບ່ງຕາມໜ້າວຽກໂດຍມີລັດຖະມົນຕີ ເປັນ ຫົວໜ້າ ເຊັ່ນ: ກະຊວງສຶກສາທິການ ເປັນຕົ້ນ. (ເບິ່ງໜ້າ 242 - 243)

**ກະຊອນ** ແມງແນວໜຶ່ງໝົ້ນຢູ່ຕາມດິນ ຕົວນ້ອຍໆ ຂາໜ້າມີກ້າມໃຫຍ່ ສຳລັບຂວັດ ທາງ, *ຈີ່ຊອນ* ກໍວ່າ.

**ກະແຍງ** 1.ຊື່ປາແນວໜຶ່ງ ບໍ່ມີເກັດ ຕົວນ້ອຍມີງຽງຢູ່ແຄມຫູ ແລະ ສັນຫລັງ, ຕົວຂາວໃຫຍ່ ເອີ້ນ *ກະແຍງໂຄ.*

2. ຊື່ຜັກແນວໜຶ່ງ ກິ່ນຂິວ ເປັນກໍນ້ອຍໆ ເກີດຢູ່ ຕາມໄຮ່ນາຕົ້ນລະດູຝົນໃຊ້ປຸງລົດອາຫານ ເຊັ່ນ

ແກງ ແລະ ຫມົກເປັນຕົ້ນ. (ເບິ່ງໜ້າ 300)

**ກະຍອມ** ຕົ້ນໄມ້ປ່າຂະໜາດໃຫຍ່ ແກ່ນແຂງຄືໄມ້ແຄນ ດອກເປັນພົ້ວສີຂາວ ກິ່ນຫອມ ເປັນດອກ ໃນ ຕົ້ນເດືອນ 3 ຫາ ເດືອນ 4 ລາວ.

**ກະດໍ** ສ່ວນທີ່ພົ້ນອອກສັ້ນໆ ນ້ອຍໆ, ເດືອຍທີ່ຕັ້ງຊັນ ສຳລັບມີແນວສຸບໃສ່ ເຊັ່ນ ໃນເຄື່ອງໄມ້ ເປັນຕົ້ນ.

**ກະດູກ** ສ່ວນແຂງ ແລະແໜ້ນໜາ ທີ່ປະກອບເປັນໂຄງຮ່າງຂອງຕົນຕົວສັດ ທີ່ມີສັນຫລັງ ແລະ ຄົນ, ດູກ ກໍວ່າ, ກະດູກມີຫລາຍປະເພດ ເຊັ່ນ: ດູກສັ້ນ ຄືດູກສັນຫລັງ, ດູກແປ ຄືດູກເອິ້ອງ, ດູກຍາວ ຄືດູກຂາແຂນ ເປັນຕົ້ນ, ນອກຈາກເປັນສິ່ງຄ້ຳ ຊູຮ່າງຄິງແລ້ວ ຍັງມີຄວາມສຳຄັນຕໍ່ການຜະລິດເມັດເລືອດແດງອີກ, ກະດູກຍາວ ມີໄຂມັນເຫລືອງ ແລະ ອອກປອງແດງ. (ເບິ່ງຮູບໜ້າ 329 - 330)

**ກະດ້າງ** 1. ແຂງ, ຂັດແຂງ, ບໍ່ອ່ອນນ້ອມ. 2. ຊື່ເຫັດແນວໜຶ່ງ ເກີດຕາມຂອນ ເມື່ອກິກແດດຈົນແຫ້ງ ເປັນສີແດງຊ້ຳ.

**ກະດິງ** 1.ເຄື່ອງຊຸ່ນໃຫ້ມີສຽງດັງ ເພື່ອສັນຍານໃຫ້ໄດ້ຍິນເຮັດດ້ວຍໂລຫະ ມີລູກຟັດຢູ່ທາງໃນ ສຳລັບແຂວນຄໍສັດ ຫລືແຂວນຕາມໂງ່ສົມ ເປັນຕົ້ນ. 2. ຊື່ແມ່ນ້ຳສາຍໜຶ່ງ ໄຫລຕົກໃສ່ແມ່ນ້ຳຂອງທີ່ໃຕ້ ເມືອງປາກກະດິງ ມີຂົວ ຊື່ວ່າ ຢູຣິກາກາຣິນ ຂ້າມບ່ອນປາກນ້ຳ.

**ກະດົ້ງ** ພາຊະນະສານດ້ວຍໄມ້ໄຜ່ ຮູບແບນໃຊ້ຝັດເຂົ້າ.

**ກະໂດງ** ເສົາສູງທີ່ຕັ້ງຢູ່ເຮືອສະເພົາ ສຳລັບຜູກແຜ່ນຜ້າ ເຮັດເປັນໃບໃຫ້ລົມພັດ ເພື່ອໃຫ້ເຮືອແລ່ນ ໄປຕາມກຳລັງລົມ.

**ກະດາດ** ເຈ້ຍ, ຂອງເປັນແຜ່ນບາງໆ ສຳລັບຂຽນ ຫລືແຕ້ມຮູບ, *ກະດາດແກ້ວ* ເຈ້ຍບາງ ແລະໃສ; *ກະດາດຊາຍ* ເຈ້ຍຊາ ທີ່ມີເມັດດິນ ຊາຍຕິດຢູ່ ເພື່ອຂັດຖູໄມ້ໃຫ້ກ້ຽງ.

**ກະດັນ** ຕົ້ນໄມ້ແນວໜຶ່ງ ໃບນ້ອຍຍາວ, ສົ້ມ ມັກເກີດຕາມແຄມນ້ຳ, ຊື້ນ ຫລື ນອນໝາກໄມ້ທີ່ ເປັນກ້ອນແຂງ; *ກະດັນຂາ* ກ້ອນຊີ້ນແຂງທີ່ເປັນຢູ່ແອບແອຂາ ຫລື ກົກຂາ.

**ກະດັນງາ** ຕົ້ນໄມ້ແນວໜຶ່ງ ດອກເປັນກາບນ້ອຍ ມີສາມກາບ ສີເຫລືອງ ກິ່ນຫອມ ມີ 2 ແນວຄື ກະດັນງາບ້ານ ແລະ ກະດັນງາປ່າ.

**ກະດານ** ແຜ່ນແປ້ນ, ແຜ່ນຫີນ ຫລືຫີນສຳລັບໃຊ້ຂຽນໜັງສື; *ກະດານດຳ* ແຜ່ນແປ້ນຂະໜາດໃຫຍ່ ທາສີດຳ ສຳລັບໃຊ້ໃນຫ້ອງຮຽນ.

**ກະໂດນ** ໄມ້ປ່າຈຳພວກໜຶ່ງ ໃບ ແລະ ເປືອກຝາດ ໃບອ່ອນກິນໄດ້ ມີ 3 ແນວ ຄື: *ກະໂດນໂຄກ* ຕົ້ນໃຫຍ່; *ກະໂດນນ້ຳ* ຕົ້ນນ້ອຍ ເກີດຕາມຫາມ ແລະ *ກະໂດນເປັ້ຽ* ເປັນໄມ້ພຸ່ມ ເກີດຕາມທົ່ງ.

**ກະເດືອນ** ສັດຈຳພວກໜອນ ໂຕຍາວ ອາໄສຢູ່ໃນດິນ, ຂີ້ກະເດືອນ ກໍວ່າ.

**ກະແດບເດົ້າ** ນົກແນວໜຶ່ງ ມັກຫາກິນຕາມແຄມນ້ຳ ຕົວນ້ອຍ ຂົນສີໝົ່ນ ເວລາຍືນທຳອາການເດົ້າງັບໆ, *ນົກກະແດບດິນ* ກໍວ່າ.

**ກະດອມ** ໄມ້ປ່າຈຳພວກໜຶ່ງ ມີ 3 ແນວ ຄື: *ກະດອມຕົ້ນ* ເປັນໄມ້ຂະໜາດກາງ ໃບສ້ອຍ ດອກເປັນພົ້ວສີຂາວ; *ກະດອມພຸ່ມ* ເປັນໄມ້ພຸ່ມ ດອກຂາວ ກິ່ນຫອມ; *ກະດອມເຄືອ* ດອກສີຂາວ ໝາກເປັນລ່ຽມ ມີລົດຂົມ.

**ກະຕໍ້** ເຄື່ອງຫລິ້ນກິລາຢ່າງໜຶ່ງ ເຮັດດ້ວຍຫວາຍ ຫລືໄມ້ປ່ອງ ຮູບກົມ ສຳລັບເຕະ, ວິທີຫລິ້ນ ມີສອງຝ່າຍ ຢູ່ຄົນລະຟາກຕາໜ່າງ.

**ກະໄຕ** 1.ມີດຕັດຜົມ, ມີດແຊມ, ມີດສຳລັບຫນີບຜົມ.

2. ດູກຄາງ, ຄາງ.

**ກະຕິກ** ເຄື່ອງໃສ່ນ້ຳຮ້ອນ ຫລືນ້ຳກ້ອນ ເພື່ອຮັກສາອຸນຫະພູມ ໂດຍມີລະບົບຝາແກ້ວ ສອງຊັ້ນ ທີ່ຂັ້ນດ້ວຍສູນຍາກາດ.

**ກະຕືກ** ພະຍາດກາຝາກທີ່ອາໄສຢູ່ໃນລຳໄສ້ຂອງຄົນ ເພື່ອດູດກິນອາຫານທີ່ຍ່ອຍແລ້ວມີຫລາຍຊະນິດ ຄື ໂຕກົມຍາວ, ໂຕແປ, ເສັ້ນດ້າຍ ເປັນຕົ້ນ ແມ່ທ້ອງ ກໍວ່າ.

**ກະຕຸດ** ແຜ່ນເງິນ ຫລືຄຳ ຂະຫນາດສອງຂໍ້ມື ທີ່ຂຽນຄາຖາໃສ່ ກໍ້ເຂົ້າແລ້ວຫ້ອຍໄວ້ກັບສາຍຄໍ ກືວ່າເປັນເຄື່ອງປ້ອງກັນສິ່ງຊົ່ວຮ້າຍ, ເຄື່ອງແຄ້ວຂອງຄົງ ຕາມຄວາມເຊື່ອທາງໄສຍະສາດ.

**ກະຕັນຍູ** ຮູ້ຈັກຕອບແທນບຸນຄຸນທີ່ຄົນອື່ນເຮັດໄວ້ກັບຕົນ, ກະທຳຄວາມດີຕໍ່ຜູ້ທີ່ເຄີຍຊ່ອຍເຫລືອຕົນ.

**ກະຕ້າບ** ຫີບຂະຫນາດນ້ອຍສຳລັບໃສ່ປຶ້ມເຮັດດ້ວຍຫນັງຫລືຢາງ ຄຳນີ້ມາຈາກພາສາຝຣັ່ງ (Cartable)

**ກະຖາງ** ພາຊະນະເຮັດດ້ວຍດິນປັ້ນ ປາກກວ້າງ ສຳລັບປູກດອກໄມ້ ຫລືໃສ່ນ້ຳ.

**ກະຖິນ** 1. ຕົ້ນໄມ້ຂະຫນາດນ້ອຍ ມີ 2 ປະເພດ ຄື: *ກະຖິນບ້ານ* ໃບເປັນແຫລບ ຫນ່ວຍແພບ, ທັງໃບ ແລະ ຫມາກກິນໄດ້; *ກະຖິນຫນາມ* ຕົ້ນມີຫນາມ ດອກມົນເປັນພົ້ວສີເຫລືອງ ແລະ ຫອມ.

2. ຜ້າສີເຫລືອງທີ່ເອົາເຄນຄູບາ ຜູ້ຈຳພັນສາຄົບສາມເດືອນແລ້ວ, ການເຮັດກອງບຸນໃນລະຍະເດືອນ 11 ແຮມ 1 ຄ່ຳຫາເດືອນ 12 ເພັງ ໂດຍທານຜ້າຕ່າງໆເປັນຕົ້ນຕຳ ແກ່ພະສົງ.

3. ໄມ້ກັງສຳລັບຄຶງຕັດຜ້າຈີວອນ, ການຕັດຫຍິບຜ້າຢ່າງເປັນຂະບວນ ໂດຍພະສົງເອງ ໃນສະໄຫມພຸດທະການ.

**ກະຖຸນ** ເຄື່ອງຍິງກ້ອນຫີນ ມີສອງສາຍ ມັດຕິດງ່າໄມ້ລະຫວ່າງສອງສາຍ ມີຫມ້ອງສຳລັບໃສ່ກ້ອນຫີນ ເພື່ອຍິງອອກໄປສູ່ເປົ້າຫມາຍ.

**ກະທະ** ຫມໍ້ຂາງ, ຫມໍ້ປາກກວ້າງ ກົ້ນຕື້ນ ມີຫູຈັບ ຫລືຄັນຈັບ.

**ກະທິງ** 1. ສັດປ່າຈຳພວກຄ້ຽວເອື້ອງ ຂະຫນາດໃຫຍ່ ຕົວຄືງົວປ່າແຕ່ໃຫຍ່ກວ່າ ຂົນແດງ ແລະຂົນຫນ້າຜາກສີເຫລືອງ ເປັນສັດໃກ້ຈະດັບແນວ ເພາະກືກຍິງ. (ເບິ່ງຮູບງົວປ່າ ໜ້າ 294)

2. ບັ້ງໄມ້ປ່ອງ ສຳລັບໃສ່ນ້ຳເຜີ້ງ ຫລືນ້ຳກິນ. ບັ້ງທິງ ກໍວ່າ.

**ກະທົງ** ພາຊະນະເຮັດດ້ວຍກາບກ້ວຍ ຫລືໃບຕອງ ສຳລັບໃສ່ຂອງກິນລ້ຽງຜີ ຫລືລອງນ້ຳ ເວລາ ບຸນຊວງເຮືອ. *ກະທົງຫນ້າງົວ* : ກະທົງ ກາບກ້ວຍທີ່ເຮັດເປັນຮູບສາມລ່ຽມ.

**ກະບະ** ພາຊະນະສານດ້ວຍໄມ້ໄຜ່ ກົ້ນແບນ ຄືກາດ ໃຊ້ໃສ່ຂອງເພື່ອໃຫ້ນ້ຳໄຫລອອກ ເຊັ່ນ ໃສ່ເກືອ ທີ່ຕົ້ມໃຫມ່ໆ; ປ້ອງໄມ້ໄຜ່ຜ່າເຄິ່ງ ໃຊ້ແທນກ້ວຍໃສ່ຂອງກິນຢູ່ຕາມກຽງນາ; ລົດທີ່ມີສ່ວນຫລັງ ຄືກະບະໄມ້ໄຜ່ ເອີ້ນວ່າ *ລົດກະບະ*.

**ກະບາ** 1. ນົກແນວຫນຶ່ງ ປາກກວ້າງ ປະເພດຫາກິນໃນເວລາຄ່ຳ ແລະ ນອນຢູ່ກັບດິນ.

2. ງູພິດຢ່າງຫນຶ່ງ ຕົວຂະຫນາດເທົ່ານີ້ວມື ປາກກວ້າງ, *ງູເຜົາກະບາ* ກໍວ່າ.

**ກະບີ່** ດາບປະດັບກຽດຕິຍົດຂອງນາຍທະຫານ ແລະຕຳຫລວດ; ມີດແຫລມຍາວ ແຕ່ສັ້ນກວ່າ ງ້າວ ໃຊ້ຕິດປາຍປືນກໍໄດ້.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ